**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ສຳນັກງານນາຍົກລັດຖະມົນຕີ | ເລກທີ 388/ນຍ.

ນະຄອນຫຼວງວຽງຈັນ, ວັນທີ 08.09.2010

# ດຳລັດ

## ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 06/05/2003.
- ອີງຕາມ ກົດໝາຍ ວ່າດ້ວຍງົບປະມານແຫ່ງລັດ ສະບັບເລກທີ 02/ສພຊ, ລົງວັນທີ 26/12/2006.
- ອີງຕາມ ກົດໝາຍ ວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26/11/2009.
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 09 ຂອງສະພາແຫ່ງຊາດຊຸດທີ VI, ສະບັບເລກທີ 63/ສພຊ-VI, ລົງວັນທີ 30 ມິຖຸນາ 2010 ວ່າດ້ວຍການຮັບຮອງເອົາບົດສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2009-2010 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2010-2011, ສະບັບເລກທີ 64/ສພຊ-VI, ລົງວັນທີ 30 ມິຖຸນາ 2010 ວ່າດ້ວຍການຮັບຮອງເອົາບົດສະຫລຸບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2009-2010 ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011 ແລະ ມະຕິເລກທີ 65/ສພຊ-VI, ລົງວັນທີ 30 ມິຖຸນາ 2010 ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ.
- ອີງຕາມ ມະຕິກອງປະຊຸມລັດຖະບານ ປະຈຳເດືອນ 7/2010 ( ຄັ້ງວັນທີ 2-3/8/2010).

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I
## ບົດບັນຍັດທົ່ວໄປ

**ມາດຕາທີ 1:** ປະກາດໃຊ້ ແລະ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011 ເລີ່ມແຕ່ວັນທີ 01 ຕຸລາ ປີ 2010 ເຖິງວັນທີ 30 ກັນຍາ ປີ 2011 ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ. ແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011 ແມ່ນແຜນຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 09 ຂອງສະພາແຫ່ງ

ຊາດ ຊຸດທີ VI ແລະ ເປັນປີເປີດສາກການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015), ເປັນແຜນບຸກທະລຸ ແລະ ມີຈຸດໝາຍລວມ ຄື: ເຮັດໃຫ້ເສດຖະກິດຂະຫຍາຍຕົວດ້ວຍຈັງຫວະໄວຂຶ້ນ, ໝັ້ນທ່ຽງ ແລະ ຍືນຍົງ; ສ້າງໃຫ້ໄດ້ພື້ນຖານໂຄງລ່າງທີ່ມີຄວາມໄລ່ລຽນສູ່ຊົນນະບົດ, ພາກພື້ນ ແລະ ເຊື່ອມໂຍງກັບສາກົນ; ບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ເປັນຕົ້ນ: ການແກ້ໄຂຄວາມທຸກຍາກ ແລະ ຄວາມດ້ອຍພັດທະນາ; ບູລະນະກົນໄກການບໍລິຫານການປົກຄອງໃຫ້ມີຄວາມສັກສິດ ແລະ ມີປະສິດທິຜົນ, ການບໍລິການໃຫ້ມີຄວາມວ່ອງໄວໂປ່ງໃສ ແລະ ບຸກທະລຸຕໍ່ການເຊື່ອມໂຍງ ແລະ ຂະຫຍາຍຕະຫລາດສູ່ສາກົນ.

**ມາດຕາທີ 2:** ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດສົກປີ 2010-2011 ແມ່ນເຄື່ອງມືຕົ້ນຕໍ, ແມ່ນທິດທາງ ແລະ ຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດຮັບຮອງເອົາແລ້ວ.

2.1 ແຜນການລົງທຶນຂອງລັດ ໝາຍເຖິງແຜນການນຳໃຊ້ ແລະ ຈັດສັນທຶນຮອນ ລວມທັງຊັບພະຍາກອນທຳມະຊາດເຂົ້າໃນການປະຕິບັດເປົ້າໝາຍ ທີ່ລະບຸໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

2.2 ແຜນງົບປະມານແຫ່ງລັດແມ່ນແຜນລາຍຮັບ-ລາຍຈ່າຍຂອງລັດ, ຊຶ່ງເປັນໃຈກາງຂອງລະບົບການເງິນແຫ່ງຊາດ, ເປັນເຄື່ອງມືໃນການຄຸ້ມຄອງ, ດັດສົມເສດຖະກິດມະຫາພາກ ເພື່ອຮັບປະກັນໃຫ້ເສດຖະກິດ-ສັງຄົມມີການພັດທະນາ.

**ມາດຕາທີ 3: ຈຸດໝາຍລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2010-2011 ມີດັ່ງນີ້:**

3.1 ເຮັດໃຫ້ເສດຖະກິດແຫ່ງຊາດມີສະຖຽນລະພາບ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ, ການເຕີບໂຕເພີ່ມຂຶ້ນບໍ່ຫລຸດ 8%, ສ້າງບາດກ້າວໜັກແໜ້ນໃຫ້ແກ່ການສ້າງຊົນນະບົດໃໝ່, ການແກ້ໄຂຄວາມທຸກຍາກ, ຈັດສັນພູມລຳເນົາຄົງທີ່ໃຫ້ປະຊາຊົນທີ່ຍັງຂາດສະຖານທີ່ຢູ່ອາໄສ ແລະ ບ່ອນທຳການຜະລິດໃຫ້ໄດ້ໂດຍພື້ນຖານ, ສຸມທຶນເຂົ້າໃສ່ການພັດທະນາດ້ານວັດທະນະທຳ-ສັງຄົມ, ແກ້ໄຂປະກົດການຫຍໍ້ທໍ້ທາງສັງຄົມໃຫ້ມີການຫັນປ່ຽນຢ່າງຕັ້ງໜ້າ, ສ້າງຄວາມຢູ່ດີກິນດີ ແລະ ຫລຸດຜ່ອນຄວາມທຸກຍາກຂອງປະຊາຊົນ.

3.2 ສ້າງພື້ນຖານທີ່ຈຳເປັນໃນການບັນລຸເປົ້າໝາຍສະຫັດສະຫວັດດ້ານການພັດທະນາ (MDGs) ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນໃຫ້ໄດ້ ໃນປີ 2015, ສ້າງພື້ນຖານວັດຖຸເຕັກນິກ ແລະ ເງື່ອນໄຂທີ່ຈຳເປັນ ເພື່ອນຳເອົາປະເທດຫລຸດພົ້ນອອກຈາກສະຖານະພາບຂອງປະເທດດ້ອຍພັດທະນາ ໃນປີ 2020.

3.3 ຮັບປະກັນຄວາມຍືນຍົງຂອງການພັດທະນາ, ໂດຍເນັ້ນການພັດທະນາເສດຖະກິດຕິດພັນກັບການພັດທະນາວັດທະນະທຳ-ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມທຳມະຊາດອັນເປັນທ່າແຮງຂອງຊາດ.

3.4 ຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ, ຄວາມຍຸຕິທຳ ໃນສັງຄົມ; ຄວາມປອດໄພໃຫ້ພົນລະເມືອງຢ່າງໜັກແໜ້ນ.

**ມາດຕາທີ 4: ທິດທາງໜ້າທີ່ລວມຂອງແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2010-2011 ມີດັ່ງນີ້:**

4.1 ພັດທະນາເສດຖະກິດແຫ່ງຊາດໃຫ້ຄົບຊຸດຮອບດ້ານ, ຂະຫຍາຍຖານການເຕີບໂຕໃໝ່, ໝັ້ນທ່ຽງ ແລະ ຍືນຍົງ, ຖືການພັດທະນາເສດຖະກິດເປັນໃຈກາງ ດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ ແລະ

ຊັບພະຍາກອນທຳມະຊາດແບບຍືນຍົງໄປຄຽງຄູ່ກັບການຂະຫຍາຍກຳລັງການຜະລິດໃຫ້ເຂັ້ມແຂງ, ຍູ້ແຮງການຫັນປ່ຽນໂຄງປະກອບເສດຖະກິດ ແລະ ໂຄງປະກອບແຮງງານຕາມທິດຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ປັບປຸງນະໂຍບາຍ ແລະ ກົນໄກຄຸ້ມຄອງເສດຖະກິດໃຫ້ສອດຄ່ອງ, ເສີມຂະຫຍາຍກຳລັງແຮງ ແລະ ຄຸນປະໂຫຍດຂອງທຸກພາກສ່ວນເສດຖະກິດ, ປະຕິບັດກົນໄກເສດຖະກິດຕະຫຼາດທີ່ມີການນຳພາຂອງພັກ ແລະ ມີການຄຸ້ມຄອງຂອງລັດ, ສົ່ງເສີມວິສາຫະກິດຂະໜາດນ້ອຍ-ກາງ ແລະ ເສດຖະກິດຮ່ວມມືຂອງປະຊາຊົນ.

4.2 ພັດທະນາຊົນນະບົດ, ເຂດທີ່ໝັ້ນປະຕິວັດ, ເຂດຈຸດສຸມພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງຄອບຄົວ, ຂະຫຍາຍການສຶກສາ, ການປ້ອງກັນ-ອະນາໄມກັນພະຍາດ-ຮັກສາສຸຂະພາບ, ຍູ້ການຜະລິດເປັນສິນຄ້າ, ສ້າງພື້ນຖານໂຄງລ່າງໃຫ້ສາມາດໄປມາໄດ້ທຸກລະດູ. ຫລຸດຜ່ອນຄວາມແຕກໂຕນ ລະຫວ່າງຜູ້ຮັ່ງ ແລະ ຜູ້ທຸກ, ຕົວເມືອງ ແລະ ຊົນນະບົດ.

4.3 ພັດທະນາວັດທະນະທຳ-ສັງຄົມໄປຄຽງຄູ່ກັບການພັດທະນາເສດຖະກິດ, ສ້າງຄວາມຈະເລີນ, ຄວາມຢູ່ດີກິນດີທາງດ້ານວັດຖຸ, ໄປພ້ອມໆກັນກັບການສ້າງຄວາມສີວິໄລທາງດ້ານຈິດໃຈ ໂດຍຖືເອົາການປະຕິຮູບການສຶກສາ, ສາທາລະນະສຸກ, ພັດທະນາແຮງງານ, ເສີມຂະຫຍາຍຄຸນຄ່າວັດທະນະທຳທີ່ດີງາມຂອງຊາດ, ຄວາມສະເໝີພາບລະຫວ່າງຍິງ-ຊາຍ, ປົກປ້ອງສິດທິຂອງແມ່ ແລະ ເດັກ, ພັດທະນາຊາວໜຸ່ມ-ເຍົາວະຊົນລາວ, ສົ່ງເສີມຄວາມສະເໝີພາບ ແລະ ຄວາມຍຸຕິທຳໃນສັງຄົມ.

4.4 ຍົກສູງຄວາມສັກສິດ, ປະສິດທິຜົນ ແລະ ຄວາມໂປ່ງໃສຂອງການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ, ຖືເອົາການແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ, ການສໍ້ລາດບັງຫລວງ ແລະ ຕ້ານການຟູມເຟືອຍ ເປັນມາດຕະການ ແລະ ເປັນກົນໄກຊຸກຍູ້ການພັດທະນາເສດຖະກິດ-ສັງຄົມ ຕາມກົນໄກຕະຫລາດ, ຖືເອົາການປັບປຸງລະບອບລະບຽບບໍລິຫານລັດ, ການປະຕິບັດງານ, ການແບ່ງຂັ້ນຄຸ້ມຄອງຂອງອົງການປົກຄອງແຕ່ລະຂັ້ນ, ເພີ່ມທະວີຄວາມຮັບຜິດ-ຮັບຊອບຕໍ່ພາລະບົດບາດ, ສິດໜ້າທີ່ທີ່ຖືກມອບໝາຍເປັນປັດໄຈສຳຄັນຂອງການຫັນການບໍລິຫານລັດເຂົ້າສູ່ກົດໝາຍ; ເພີ່ມທະວີການໂຄສະນາ, ເຜີຍແຜ່ກົດໝາຍໄປພ້ອມກັບການປະຕິບັດກົດໝາຍໃຫ້ມີຄວາມສັກສິດ.

4.5 ສົມທົບແໜ້ນການພັດທະນາເສດຖະກິດ-ສັງຄົມ ຕິດພັນກັບການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຮັບປະກັນການປະຕິບັດໜ້າທີ່ປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນ ແລະ ຮອບດ້ານ, ຮັບປະກັນເຮັດໃຫ້ປະເທດຊາດມີສະຖຽນລະພາບທາງດ້ານການເມືອງ, ມີຄວາມສະຫງົບ, ປອດໄພ ແລະ ເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ, ຖືເອົາຄວາມເຂັ້ມງວດດ້ານລະບຽບວິໄນຂອງກຳລັງປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ການຕິດຕາມກວດກາການເຂົ້າ-ອອກເມືອງ, ການຄຸ້ມຄອງພົນລະເມືອງ ແລະ ແກ້ໄຂໜໍ່ແໜງເປົ້າໝາຍເຂດທີ່ບໍ່ທັນມີຄວາມສະຫງົບເປັນໜ້າທີ່ສຳຄັນຂອງການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

4.6 ສົມທົບແໜ້ນການເປີດກວ້າງການພົວພັນຮ່ວມມືກັບຕ່າງປະເທດ ຕິດພັນກັບການຍົກສູງສະຕິປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການປັບປຸງພາຍໃນຢ່າງຮອບດ້ານ ເພື່ອເພີ່ມຄວາມສາມາດແຂ່ງຂັນ, ເສີມຂະຫຍາຍກຳລັງແຮງສັງລວມຂອງຊາດ ແລະ ກຳລັງແຮງຂອງຍຸກສະໄໝເຂົ້າໃນການພັດທະນາປະເທດ, ຂະຫຍາຍການພົວພັນຮ່ວມມືກັບປະເທດເພື່ອນມິດ ແລະ ບັນດາປະເທດໃນພາກພື້ນ ແລະ ສາກົນ, ສ້າງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ,

ເພີ່ມທະວີຄວາມເປັນເຈົ້າການເຂົ້າຮ່ວມການເຊື່ອມໂຍງ ແລະ ເພີ່ມທະວີຄວາມສາມາດໃນການແຂ່ງຂັນກັບພາກພື້ນ ແລະ ສາກົນໃຫ້ສູງຂຶ້ນ.

4.7 ປະຕິບັດຍຸດທະສາດຫັນເປັນອຸດສາຫະກຳ ແລະ ທັນສະໄໝດ້ວຍບາດກ້າວທີ່ຕັ້ງໜ້າ ແລະ ມີຈຸດສຸມຢູ່ຂະແໜງການ ແລະ ບໍລິເວນເຂດແຄວ້ນທີ່ມີເງື່ອນໄຂ, ຄວາມສາມາດ ແລະ ມີທ່າແຮງ ເພື່ອເພີ່ມຄວາມໄວຂອງການພັດທະນາ, ຫຼຸດຜ່ອນຄວາມແຕກໂຕນດ້ານລະດັບການພັດທະນາກັບບັນດາປະເທດອື່ນໆໃນພາກພື້ນ ແລະ ສາກົນ ໂດຍການສຸມໃສ່ບັນດາໂຄງການຂະໜາດໃຫຍ່ເປັນຫົວຈັກການພັດທະນາ, ສ້າງຖານການເຕີບໂຕເຂັ້ມແຂງ ແລະ ສາມາດຮັບໃຊ້ໃຫ້ແກ່ການເຊື່ອມໂຍງລະຫວ່າງປະເທດ, ຕິດພັນກັບການຊຸກຍູ້ສົ່ງເສີມການຜະລິດ-ທຸລະກິດຂະໜາດນ້ອຍ-ກາງ ໃຫ້ສາມາດນຳໃຊ້ເຕັກນິກ-ເຕັກໂນໂລຊີໃໝ່ ເພື່ອຍົກສູງສະມັດຕະພາບການຜະລິດ ແລະ ປະສິດທິຜົນເສດຖະກິດໃຫ້ສູງຂຶ້ນ.

## ໝວດທີ II

## ຄາດໝາຍຕົ້ນຕໍຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ

**ມາດຕາທີ 5: ຄາດໝາຍສູ້ຊົນດ້ານເສດຖະກິດມະຫາພາກ ໃນສົກປີ 2010-2011 ມີດັ່ງນີ້ :**

5.1 ລວມຍອດຜະລິດຕະພັນພາຍໃນ (GDP) ທຽບໃສ່ສົກປີ 2009-2010 ເພີ່ມຂຶ້ນບໍ່ຫລຸດ 8%, ໃນນັ້ນ:

+ ຂະແໜງກະສິກຳ ເພີ່ມຂຶ້ນ 3,5%; ກວມເອົາປະມານ 29,0% .

+ ຂະແໜງອຸດສາຫະກຳ ເພີ່ມຂຶ້ນ 17,3%; ກວມເອົາປະມານ 26,5%.

+ ຂະແໜງການບໍລິການ ເພີ່ມຂຶ້ນ 6,7%; ກວມເອົາປະມານ 44,5% ຂອງ GDP.

5.2 ເກັບລາຍຮັບເຂົ້າງົບປະມານລວມໃຫ້ໄດ້ 21,24% ຂອງມູນຄ່າ GDP; ໃນນັ້ນ, ລາຍຮັບພາຍໃນໃຫ້ໄດ້ໃນລະດັບ 15,55% ຂອງມູນຄ່າ GDP. ລາຍຈ່າຍງົບປະມານທັງໝົດໃຫ້ຢູ່ໃນລະດັບ 24,73% ຂອງມູນຄ່າ GDP, ການຂາດດຸນງົບປະມານ ຢູ່ໃນລະດັບ 3,49% ຂອງມູນຄ່າ GDP.

5.3 ສູ້ຊົນຮັກສາອັດຕາເງິນເຟີ້ສະເລ່ຍບໍ່ໃຫ້ເກີນອັດຕາການຂະຫຍາຍຕົວຂອງເສດຖະກິດ.

5.4 ຄວບຄຸມການເພີ່ມຂຶ້ນຂອງບໍລິມາດເງິນລວມ(M2)ໃຫ້ຢູ່ໃນລະດັບທີ່ເໝາະສົມ ທຽບໃສ່ປີຜ່ານມາ.

5.5 ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫລາດທີ່ມີການຄຸ້ມຄອງຂອງລັດ, ເຮັດໃຫ້ອັດຕາແລກປ່ຽນມີຄວາມສະຫງົບປົກກະຕິ ເງິນກີບແຂງຄ່າ ຫລື ອ່ອນຄ່າຢູ່ໃນລະຫວ່າງ 5% ທຽບໃສ່ເງິນຕາຕ່າງປະເທດສະກຸນຫລັກ.

5.6 ຮັບປະກັນຄັງສຳຮອງເປັນເງິນຕາຕ່າງປະເທດໃຫ້ກຸ້ມການນຳເຂົ້າແຕ່ 6 ເດືອນຂຶ້ນໄປ.

**ມາດຕາທີ 6: ຄາດໝາຍສູ້ຊົນຕົ້ນຕໍດ້ານເສດຖະກິດ ມີດັ່ງນີ້:**

6.1 ສູ້ຊົນຜະລິດເຂົ້າໃຫ້ໄດ້ 3,38 ລ້ານໂຕນ.

6.2 ສູ້ຊົນຜະລິດກະແສໄຟຟ້າ ໃຫ້ໄດ້ 9.087,75 ລ້ານກິໂລວັດໂມງ.

6.3 ສູ້ຊົນເຮັດໃຫ້ມູນຄ່າການຜະລິດຂອງຂະແໜງອຸດສາຫະກຳປຸງແຕ່ງບັນລຸ ໃຫ້ໄດ້ 468,06 ຕື້ກີບ.

6.4 ສູ້ຊົນເຮັດໃຫ້ມູນຄ່າການສົ່ງອອກ ບັນລຸໄດ້ 1.230 ລ້ານໂດລາ.

6.5 ຂະຫຍາຍສະຖານີຮັບສັນຍານໂທລະສັບມືຖືໃຫ້ໄດ້ 143 ສະຖານີ ແລະ ຂະຫຍາຍອອກສູ່ຊົນນະບົດໃຫ້ກວມ 70% ຂອງຈຳນວນບ້ານທົ່ວປະເທດ; ຂະຫຍາຍຈຳນວນເລກໝາຍໂທລະສັບມືຖື ແລະ ຕັ້ງໂຕະໃຫ້ໄດ້ 70 ເລກໝາຍຕໍ່ປະຊາກອນ 100 ຄົນ.

6.6 ສູ້ຊົນເຮັດໃຫ້ນັກທ່ອງທ່ຽວເຂົ້າມາປະເທດ ປະມານ 2,22 ລ້ານຄົນ.

**ມາດຕາທີ 7: ຄາດໝາຍສູ້ຊົນຕົ້ນຕໍດ້ານສັງຄົມ ມີດັ່ງນີ້:**

7.1 ສູ້ຊົນເຮັດໃຫ້ອັດຕາຄວາມທຸກຍາກຫລຸດລົງຈາກ 27,6% ໃນສົກປີ 2007-2008 ໃຫ້ຍັງເຫລືອ ປະມານ 24% ຂອງຈຳນວນປະຊາກອນທົ່ວປະເທດ ແລະ ອັດຕາຄົວເຮືອນທຸກຍາກຈາກ 22,2% (ເທົ່າກັບ 218.280 ຄົວເຮືອນ) ໃຫ້ຍັງເຫລືອ ປະມານ 19% (ເທົ່າກັບ 187.000 ຄົວເຮືອນ) ຂອງຄົວເຮືອນທັງໝົດ ໃນທ້າຍປີ 2011.

7.2 ແກ້ໄຂການເຄື່ອນຍ້າຍແບບຊະຊາຍ ແລະ ຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນ ໃຫ້ປະຊາຊົນ ໂດຍສ້າງ 6 ຈຸດສຸມຂອງລັດຖະບານ ແລະ ຈຸດສຸມຂອງແຂວງໃຫ້ເປັນຕົນເປັນໂຕ. ສ້າງໃຫ້ໄດ້ບ້ານພັດທະນາ ຕາມ 4 ເນື້ອໃນ 4 ຄາດໝາຍ ໃນທຸກເມືອງຂອງເຂດຊົນນະບົດ 5-10% ຂອງຈຳນວນບ້ານ, ເມືອງໜຶ່ງສ້າງໃຫ້ໄດ້ຕົວເມືອງນ້ອຍໃໝ່ 1-2 ແຫ່ງ.

7.3 ສ້າງເງື່ອນໄຂໃຫ້ເດັກໃນກຸ່ມອາຍຸ 3-5 ປີ ໄດ້ເຂົ້າຮຽນໃນຊັ້ນອະນຸບານ ໃຫ້ໄດ້ 25%, ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ ໃຫ້ໄດ້ 95%, ອັດຕາການລອດເຫຼືອຂອງນັກຮຽນ ປ1-ປ5 ໃຫ້ໄດ້ 80%, ອັດຕາເຂົ້າຮຽນຊັ້ນມັດທະຍົມຕົ້ນ ໃຫ້ໄດ້ 68% ແລະ ມັດທະຍົມປາຍ ໃຫ້ໄດ້ 40%. ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປ ໃຫ້ໄດ້ 83% ແລະ ອັດຕາການຮູ້ໜັງສືໃນເກນອາຍຸ 15-40 ປີ ໃຫ້ໄດ້ 90%. ເພີ່ມອັດຕາເຂົ້າຮຽນຂອງນັກຮຽນຊົນເຜົ່າ ໃຫ້ໄດ້ 15%, ນັກຮຽນຍິງ ໃຫ້ໄດ້ 45%. ເພີ່ມຈຳນວນນັກຮຽນເຂົ້າຮຽນ ໃນສາຍອາຊີວະສຶກສາ ທັງໝົດໃຫ້ໄດ້ ຫລາຍກວ່າ 16.000 ຄົນ (ເພີ່ມຂຶ້ນ 24%) ພ້ອມທັງສູ້ຊົນ ສອບເສັງຈົບຊັ້ນ ໃນສົກຮຽນ 2010-2011 ແຕ່ລະລະດັບຊັ້ນ ໃຫ້ໄດ້ 95% ຂຶ້ນໄປ.

7.4 ສະໜອງນ້ຳສະອາດໃຫ້ແກ່ປະຊາຊົນ ໃຫ້ໄດ້ 80%, ນຳໃຊ້ວິດຖ່າຍຂອງປະຊາຊົນ ໃຫ້ໄດ້ 54%, ການສັກຢາກັນພະຍາດເດັກນ້ອຍ ໃຫ້ໄດ້ 85%, ອັດຕາການກວດທ້ອງກ່ອນກຳເນີດປະຕິບັດໃຫ້ໄດ້ 56,6%, ອັດຕາຊົນໃຊ້ວິທີຄຸມກຳເນີດ ປະຕິບັດໃຫ້ໄດ້ 51%.

7.5 ຮັບປະກັນການຈັດແບ່ງງົບປະມານໃຫ້ຂະແໜງສຶກສາ ລວມທັງວຽກງານສຶກສາຢູ່ໃນຂະແໜງການຕ່າງໆ ແລະ ການລົງທຶນຂອງລັດ ໃຫ້ໄດ້ໃນລະດັບ 17% ແລະ ຂະແໜງສາທາລະນະສຸກໃຫ້ໄດ້ໃນລະດັບ 9% ຂອງລາຍຈ່າຍງົບປະມານທັງໝົດ.

7.6 ເຝິກ ແລະ ພັດທະນາສີມືແຮງງານໃຫ້ແກ່ກຳລັງແຮງງານ ໃຫ້ໄດ້ຫລາຍກວ່າ 44 ພັນຄົນ ແລະ ຈັດຫາວຽກເຮັດງານທຳໃໝ່ໃຫ້ແກ່ກຳລັງແຮງງານລາວ ໃຫ້ໄດ້ຫລາຍກວ່າ 55 ພັນຄົນ. ຂະຫຍາຍລະບົບປະກັນສັງຄົມລົງສູ່ບັນດາແຂວງໃນຂອບເຂດທົ່ວປະເທດ ໃຫ້ປະຊາຊົນໄດ້ຮັບການຄຸ້ມຄອງດ້ານປະກັນສຸຂະພາບ ກວມ 20% ຂອງພົນລະເມືອງທັງໝົດ, ປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ ໃຫ້ໄດ້ຫລາຍກວ່າ 11 ພັນຄົນ.

7.7 ສູ້ຊົນສ້າງບ້ານວັດທະນະທຳໃຫ້ໄດ້ 125 ບ້ານ ແລະ ຄອບຄົວວັດທະນະທຳໃຫ້ໄດ້ 40 ພັນຄອບຄົວ, ສູ້ຊົນຂະຫຍາຍພື້ນທີ່ຄວາມໄກຂອງສະຖານີວິທະຍຸກະຈາຍສຽງລົງເມືອງ ແລະ ບ້ານ ເພີ່ມຂຶ້ນ ໃຫ້ໄດ້ 10,71% ຂອງພື້ນທີ່ທົ່ວປະເທດ.

7.8 ສູ້ຊົນເພີ່ມອັດຕາສ່ວນເພດຍິງເຂົ້າໃນຄະນະນຳ ນັບແຕ່ຂັ້ນເມືອງຂຶ້ນໄປ ເມື່ອຮອດປີ 2015 ໃຫ້ໄດ້ 15% ຂຶ້ນໄປ ແລະ ເພີ່ມອັດຕາສ່ວນກຳລັງແຮງງານເພດຍິງ ໃຫ້ກວມ 40% ເມື່ອຮອດປີ 2015 ເພື່ອປະກອບສ່ວນເຂົ້າໃນການພັດທະນາຄຽງຄູ່ກັບເພດຊາຍ.

7.9 ສູ້ຊົນຈັດຕັ້ງໂຄສະນາກົດໝາຍ ເພື່ອສ້າງສະຕິເຄົາລົບກົດໝາຍໃຫ້ໄດ້ຢ່າງໜ້ອຍ 3 ກຸ່ມບ້ານ ຕໍ່ເມືອງ, ສ້າງບ້ານປອດຄະດີໃຫ້ໄດ້ຢ່າງໜ້ອຍເມືອງລະ 10 ບ້ານ ແລະ ປັບປຸງໜ່ວຍໄກ່ເກ່ຍຂໍ້ຂັດແຍ່ງຂັ້ນບ້ານ ໃຫ້ໄດ້ເມືອງລະ 15 ບ້ານຂຶ້ນໄປ, ສ້າງບຸກຄາລະກອນກົດໝາຍ ໃຫ້ໄດ້ 100 ເມືອງ ປະມານ 5.000 ຄົນ.

**ມາດຕາທີ 8: ຄາດໝາຍສູ້ຊົນດ້ານສິ່ງແວດລ້ອມ ແລະ ຊັບພະຍາກອນທຳມະຊາດ ມີດັ່ງນີ້:**

8.1 ຟື້ນຟູປ່າໄມ້ໃຫ້ໄດ້ 2,83 ລ້ານເຮັກຕາ, ປູກຕົ້ນໄມ້ໃຫ້ໄດ້ 357,36 ພັນເຮັກຕາ ແລະ ສຳຫລວດຈັດສັນ 3 ປະເພດປ່າ ໃຫ້ໄດ້ 23%, ຍົກລະດັບການປົກຫຸ້ມຂອງປ່າ ໃຫ້ເພີ່ມຂຶ້ນຈາກ 53% ໃນປີ 2010 ເປັນ 55% ຂອງເນື້ອທີ່ທົ່ວປະເທດ ໃນປີ 2011.

8.2 ສ້າງຕົວແບບໃນການຄຸ້ມຄອງສິ່ງແວດລ້ອມຕົວເມືອງໃຫ້ກາຍເປັນຕົວເມືອງສີຂຽວ ແລະ ສະອາດຢູ່ 4 ຕົວເມືອງໃຫຍ່ ຄື: ນະຄອນຫຼວງວຽງຈັນ, ຫຼວງພະບາງ, ເມືອງໄກສອນ ພົມວິຫານ ແລະປາກເຊ.

8.3 ສູ້ຊົນປົກປັກຮັກສາປ່າໄມ້ທີ່ມີຢູ່ໃນປະຈຸບັນໃຫ້ອຸດົມສົມບູນ ເພື່ອອະນຸລັກຊີວະນາໆພັນ ແລະ ເປັນແຫຼ່ງດູດຊຶມຊັບອາຍກາກບໍນິກ ແລະ ປົກປັກຮັກສາສິ່ງແວດລ້ອມ.

**ມາດຕາທີ 9: ຮັບປະກັນປະຕິບັດແຜນລາຍຮັບ ແລະ ລາຍຈ່າຍງົບປະມານປະຈຳສົກປີຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ ໃຫ້ປະກົດເປັນຈິງ ຄື :**

9.1 ລາຍຮັບງົບປະມານ.

| | ມູນຄ່າ | | ໂຄງປະກອບ | |
|---|---|---|---|---|
| **- ລວມຍອດລາຍຮັບງົບປະມານທັງໝົດ (ລວມທັງທຶນຊ່ວຍເຫລືອລ້າ)** | **13.021,65** | **ຕື້ກີບ;** | **100,00** | **%** |
| ໃນນັ້ນ: | | | | |
| **ກ. ລາຍຮັບງົບປະມານພາຍໃນ** | **9.530,23** | **ຕື້ກີບ;** | **73,19** | **%** |
| 1) ລາຍຮັບຈາກສ່ວຍສາອາກອນ | 4.487,30 | ຕື້ກີບ; | 34,46 | % |
| 2) ລາຍຮັບຈາກທີ່ດິນ | 131,04 | ຕື້ກີບ; | 1,01 | % |
| - ຄ່າທຳນຽມນຳໃຊ້ທີ່ດິນ (ພາສີທີ່ດິນ) | 82,00 | ຕື້ກີບ; | 0,63 | % |
| - ຄ່າຈົດທະບຽນ ແລະ ຄ່າທຳນຽມ | 29,00 | ຕື້ກີບ; | 0,22 | % |
| - ຄ່າເຊົ່າ ,ສຳປະທານ ແລະ ທັນສິດນຳໃຊ້ | 16,00 | ຕື້ກີບ; | 0,12 | % |
| - ລາຍຮັບວິຊາການ(ສະເພາະທີ່ດິນ) | 4,04 | ຕື້ກີບ; | 0,03 | % |
| 3) ລາຍຮັບຈາກພາສີ(ຂາເຂົ້າ+ຂາອອກ) | 3.050,00 | ຕື້ກີບ; | 23,42 | % |
| 4) ລາຍຮັບຈາກການຄຸ້ມຄອງລັດວິສາຫະກິດ | 675,84 | ຕື້ກີບ; | 5,19 | % |
| 5) ລາຍຮັບຈາກຊັບສິນຂອງລັດ | 1.109,66 | ຕື້ກີບ; | 8,52 | % |
| ໃນນັ້ນ: | | | | |
| - ລາຍຮັບຊັບສິນປົກກະຕິ | 898,46 | ຕື້ກີບ; | 6,90 | % |
| - ທັນຊັບສິນຢູ່ຕ່າງປະເທດ ເປັນທຶນ | 131,20 | ຕື້ກີບ; | 1,01 | % |

| | | | | |
|---|---|---|---|---|
| - ຄ່າພາກຫລວງຈາກໂຄງການນ້ຳເທີນ 2 | 80,00 | ຕື້ກີບ; | 0,61 | % |
| 6) ລາຍຮັບຂາຍໄມ້ | 50,00 | ຕື້ກີບ; | 0,38 | % |
| 7) ລາຍຮັບອື່ນໆ | 26,39 | ຕື້ກີບ; | 0,20 | % |
| **ຂ. ລາຍຮັບຈາກການຊ່ວຍເຫລືອລ້າ** | **3.491,43** | **ຕື້ກີບ;** | **26,81** | **%** |
| 1) ຊ່ວຍເຫຼືອລ້າຈາກຕ່າງປະເທດເປັນໂຄງການທີ່ກະຊວງການເງິນຄຸ້ມຄອງ | 971,48 | ຕື້ກີບ; | 7,46 | % |
| 2) ຊ່ວຍເຫຼືອລ້າຈາກຕ່າງປະເທດ ເປັນໂຄງການທີ່ກະຊວງ ຜທ ຄຸ້ມຄອງ | 2.249,95 | ຕື້ກີບ; | 17,28 | % |
| 3) ຊ່ວຍເຫຼືອນອກໂຄງການ ຂອງລັດຖະບານຍີ່ປຸ່ນ | 70,00 | ຕື້ກີບ; | 0,54 | % |
| 4) ຊ່ວຍເຫຼືອລ້າດັດແກ້ມະຫາພາກ | 200,00 | ຕື້ກີບ; | 1,54 | % |

9.2 ລາຍຈ່າຍງົບປະມານ.

| | | | | |
|---|---|---|---|---|
| **- ແຜນລາຍຈ່າຍງົບປະມານທັງໝົດ** | **15.160,22** | **ຕື້ກີບ;** | **100,00** | **%** |
| ໃນນັ້ນ: | | | | |
| 1) ລາຍຈ່າຍເງິນເດືອນ | 2.860,00 | ຕື້ກີບ; | 18,87 | % |
| 2) ລາຍຈ່າຍເງິນອຸດໜູນຕ່າງໆ | 900,00 | ຕື້ກີບ; | 5,94 | % |
| 3) ລາຍຈ່າຍບໍລິຫານ - ຊື້ໃໝ່ | 1.360,69 | ຕື້ກີບ; | 8.98 | % |
| - ບໍລິຫານ+ຊື້ໃໝ່ປົກກະຕິ | 1.229,49 | ຕື້ກີບ; | 8,11 | % |
| - ຊື້ຊັບສິນບັດຄົງທີ່ຢູ່ຕ່າງປະເທດ | 131,20 | ຕື້ກີບ; | 0,87 | % |
| 4) ລາຍຈ່າຍດັດສົມ | 808,63 | ຕື້ກີບ; | 5,33 | % |
| ໃນນັ້ນ: | | | | |
| - ລາຍຈ່າຍດັດສົມທົ່ວໄປ | 631,82 | ຕື້ກີບ; | 4,17 | % |
| - ລ່າຍຈ່າຍຊົເກມ (ໃຊ້ໜີ້ລວງໜ້າທະນະຄານ) | 126,81 | ຕື້ກີບ; | 0,84 | % |
| - ຈັດສັນອາຊີບຄົງທີ່ | 50,00 | ຕື້ກີບ; | 0,33 | % |
| 5) ລາຍຈ່າຍເງິນແຮ ແລະ ອື່ນໆ | 100,00 | ຕື້ກີບ; | 0,66 | % |
| 6) ຄັງສະສົມແຫ່ງລັດ | 150,00 | ຕື້ກີບ; | 0,99 | % |
| 7) ລາຍຈ່າຍປະກອບສ່ວນອົງການຈັດຕັ້ງສາກົນ | 31,45 | ຕື້ກີບ; | 0,21 | % |
| 8) ລາຍຈ່າຍຊຳລະໜີ້ສິນຕ່າງໆ | 2.089,09 | ຕື້ກີບ; | 13,78 | % |
| ໃນນັ້ນ: | | | | |
| • ຈ່າຍຊຳລະໜີ້ສິນຕ່າງປະເທດ | 1.151,50 | ຕື້ກີບ; | 7,60 | % |
| • ຈ່າຍຊຳລະໜີ້ສິນພາຍໃນ | 937,59 | ຕື້ກີບ; | 6,18 | % |
| 9) ລາຍຈ່າຍການລົງທຶນຂອງລັດ | 6.860,35 | ຕື້ກີບ; | 45,25 | % |

ໃນນັ້ນ:

- ທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ 5.100,00 ຕື້ກີບ; 33,64 %

ໃນນັ້ນ:

- ຊ່ວຍເຫລືອລ້າ-ກູ້ຢືມເປັນໂຄງການທີ່ກະຊວງການເງິນ ຄຸ້ມຄອງ 2.850,05 ຕື້ກີບ; 18,80 %
- ຊ່ວຍເຫລືອລ້າເປັນໂຄງການທີ່ ກະຊວງ ຜທ ຄຸ້ມຄອງ 2.249,95 ຕື້ກີບ; 14,84 %

- ຈ່າຍລົງທຶນຂອງລັດພາຍໃນ 1.760,35 ຕື້ກີບ; 11,61 %

ໃນນັ້ນ:

- ລົງທຶນປົກກະຕິ 1.322,60 ຕື້ກີບ; 8,72 %
- ກອງທຶນບູລະນະທາງ 300,00 ຕື້ກີບ; 1,98 %
- ກອງທຶນພັດທະນາຊັບພະຍາກອນປ່າໄມ້ 15,00 ຕື້ກີບ; 0,10 %
- ແຜນງານບູລິມະສິດຕາມສັນຍາ ນ້ຳເທີນ 2 80,00 ຕື້ກີບ; 0,53 %
- ລາຍຈ່າຍ ເກັບກູ້ຄືນ ຂອງອົງການກວດສອບ (ຈ່າຍ 6 ເດືອນທ້າຍປີ) 42,75 ຕື້ກີບ; 0,28 %

9.3 ແຫຼ່ງດຸນດ່ຽງງົບປະມານທັງໝົດ **2.138,57 ຕື້ກີບ; 100,00 %**

ໃນນັ້ນ:

1). ກູ້ຢືມຈາກຕ່າງປະເທດ 1.878.57 ຕື້ກີບ; 87,84 %

2). ພັນທະບັດລັດຖະບານ 260,00 ຕື້ກີບ; 12,16 %

**ມາດຕາທີ 10: ຮັບປະກັນປະຕິບັດແຜນການລົງທຶນປະຈຳສົກປີ ຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ຮັບຮອງເອົາໃຫ້ປະກົດເປັນຈິງ ຄື :**

10.1 ການລົງທຶນທົ່ວສັງຄົມ ທັງໝົດປະມານ 32% ຂອງ GDP ເປັນທຶນປະມານ 19.600 ຕື້ກີບ; ໃນນັ້ນ, ການລົງທຶນຂອງລັດ ປະມານ 11,19% ຂອງ GDP ເປັນທຶນ ປະມານ 6.860,35 ຕື້ກີບ, ໃນນັ້ນ ເປັນທຶນພາຍໃນ 1.760,35 ຕື້ກີບ ແລະ ທຶນຕ່າງປະເທດ 5.100 ຕື້ກີບ; ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ປະມານ 10.520 ຕື້ກີບ ແລະ ສິນເຊື່ອທະນາຄານ ປະມານ 2.220 ຕື້ກີບ.

10.2 ການລົງທຶນຂອງລັດ ມີທັງໝົດ 4.452 ໂຄງການ, ມີມູນຄ່າ 6.860,35 ຕື້ກີບ; ໃນນີ້, ທຶນພາຍໃນຈຳນວນ 1.760,35 ຕື້ກີບ ແລະ ທຶນຊ່ວຍເຫລືອລ້າ ແລະ ກູ້ຢືມ ຈຳນວນ 5.100 ຕື້ກີບ.

- ໂຄງປະກອບການລົງທຶນຂອງລັດ ມີຄື:
  - + ຂົງເຂດເສດຖະກິດ ກວມເອົາ 30%;
  - + ຂົງເຂດສັງຄົມ ກວມເອົາ 35%;
  - + ການກໍ່ສ້າງພື້ນຖານໂຄງລ່າງ ກວມເອົາ 35%.
- ຮັບປະກັນສະໜອງທຶນພາຍໃນ (ງົບປະມານລັດ) ໃຫ້ໄດ້ 1.760,35 ຕື້ກີບ; ທຶນພາຍໃນໄດ້ຈັດແບ່ງຕາມບູລິມະສິດ ດັ່ງນີ້:
  - + ໂຄງການສົມທົບທຶນກັບຕ່າງປະເທດ 844 ໂຄງການ ມູນຄ່າ 92,01 ຕື້ກີບ.

+ ຊຳລະໜີ້ໂຄງການລົງທຶນຂອງລັດ 504 ໂຄງການ ມູນຄ່າ 238,52 ຕື້ກີບ.

+ ໂຄງການສືບຕໍ່ 1.336 ໂຄງການ ມູນຄ່າ 763,26 ຕື້ກີບ.

+ ໂຄງການໃໝ່ 1.768 ໂຄງການ ມູນຄ່າ 666,56 ຕື້ກີບ.

- ຮັບປະກັນຍາດແຍ່ງແຫລ່ງທຶນການຊ່ວຍເຫລືອລ້າ ແລະ ກູ້ຢືມ ຈາກຕ່າງປະເທດໃຫ້ໄດ້ ປະມານ 5.100 ຕື້ກີບ ຫລື ປະມານ 600 ລ້ານໂດລາສະຫະລັດ.

10.3 ສູ້ຊົນດຶງດູດການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ປະມານ 10.520 ຕື້ກີບ (ການນຳເຂົ້າທຶນຕົວຈິງ) ຫລື ເທົ່າກັບປະມານ 1.240 ລ້ານໂດລາສະຫະລັດ.

10.4 ເອົາໃຈໃສ່ດຶງດູດ ແລະ ລະດົມຂົນຂວາຍການລົງທຶນຈາກປະຊາຊົນໃນທົ່ວປະເທດຢ່າງກວ້າງຂວາງ ແລະ ຍູ້ໃຫ້ທະນາຄານປ່ອຍສິນເຊື່ອໃຫ້ໄດ້ ປະມານ 2.220 ຕື້ກີບ.

**ມາດຕາທີ 11: ຄາດໝາຍແກ້ໄຂໜີ້ສິນການລົງທຶນຂອງລັດ ມີດັ່ງນີ້:**

11.1 ຜ່ານການສັງລວມເບື້ອງຕົ້ນ ໜີ້ສິນການລົງທຶນຂອງລັດຮອດເດືອນ 3 ປີ 2010 ມີທັງໝົດ 511 ໂຄງການ, ມູນຄ່າລວມຂອງໂຄງການ 3.621 ຕື້ກີບ, ມູນຄ່າປະຕິບັດຕົວຈິງ 3.102 ຕື້ກີບ ໄດ້ຊຳລະຜ່ານມາແລ້ວ 1.489 ຕື້ກີບ, ຍັງຄ້າງຊຳລະ 1.613 ຕື້ກີບ.

11.2 ໃນສົກປີ 2010-2011 ແຜນຊຳລະໜີ້ການລົງທຶນຂອງລັດ ເທົ່າກັບ 238,52 ຕື້ກີບ ເພື່ອຊຳລະໃຫ້ 504 ໂຄງການ; ຂະແໜງການ ແລະ ທ້ອງຖິ່ນ ທີ່ມີແຜນຊຳລະໜີ້ຕ້ອງຖືສຳຄັນການຊຳລະໃຫ້ໄປຕາມແຜນການທີ່ອະນຸມັດ, ເດັດຂາດບໍ່ໃຫ້ອວ່າຍທຶນດັ່ງກ່າວໄປປະຕິບັດເປົ້າໝາຍອື່ນ.

11.3 ສູ້ຊົນແກ້ໄຂໜີ້ສິນການລົງທຶນຂອງລັດ (ທຶນພາຍໃນ) ໃຫ້ຫລຸດຜ່ອນລົງ ແລະ ຂີດຂັ້ນໜີ້ໃນໄລຍະ ຂອງແຜນການ 5 ປີ ຄັ້ງທີ VI (2006-2010) ຄືນຫລັງ.

## ໝວດທີ III

## ແຜນວຽກ ແລະ ຄວາມຮັບຜິດຊອບຂອງກະຊວງ-ອົງການທຽບເທົ່າ ແລະ ອົງການປົກຄອງທ້ອງຖິ່ນ

**ມາດຕາທີ 12: ມອບໃຫ້ ກະຊວງແຜນການ ແລະ ການລົງທຶນ ປະຕິບັດດັ່ງນີ້:**

12.1 ເປັນໃຈກາງໃນການຄົ້ນຄວ້າສ້າງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015). ປະສານສົມທົບກັບບັນດາກະຊວງ, ອົງການ ແລະ ທ້ອງຖິ່ນ ຄຸ້ມຄອງ, ຕິດຕາມ ແລະ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ສົກປີ 2010-2011 ໃຫ້ບັນລຸຕາມຄາດໝາຍ ແລະ ເປັນໄປຕາມດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ.

12.2 ຈັດຕັ້ງຜັນຂະຫຍາຍກົດໝາຍການລົງທຶນຂອງລັດ ເພື່ອຮັບປະກັນການລົງທຶນຂອງລັດເປັນໄປຕາມກົດໝາຍ ແລະ ມີປະສິດທິຜົນ; ສ້າງລະບອບ, ລະບຽບ ແລະ ກົນໄກການປະເມີນໂຄງການລົງທຶນຂອງລັດ; ໃນນີ້, ໃຫ້ເອົາໃຈໃສ່ປະຕິບັດການປະເມີນໂຄງການກ່ອນພິຈາລະນາເອົາເຂົ້າແຜນການລົງທຶນປະຈຳສົກປີ, ຕິດຕາມກວດກາປະເມີນຜົນໄລຍະການຈັດຕັ້ງປະຕິບັດໂຄງການ ແລະ ໄລຍະກ່ອນການມອບຮັບນຳໃຊ້ໂຄງການ.

12.3 ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ພາກສ່ວນຕ່າງໆ ຕິດຕາມສະພາບເສດຖະກິດຂອງປະເທດ ແລະ ສາກົນ ໂດຍສະເພາະແມ່ນຜົນກະທົບຈາກວິກິດການການເງິນ-ເສດຖະກິດຂອງໂລກ, ສະພາບການແຂງຄ່າຂອງເງິນຕາ ແລະ ເງິນກີບ ພ້ອມທັງຄົ້ນຄວ້າວິທີແກ້ໄຂບັນຫາທີ່ເກີດຂຶ້ນ ເພື່ອລາຍງານ ແລະ ສະເໜີຕໍ່ລັດຖະບານອອກມາດຕະການແກ້ໄຂຢ່າງທັນການ.

12.4 ເປັນເຈົ້າການກະກຽມຈັດກອງປະຊຸມໂຕະມົນ ຄັ້ງທີ 10 ໃນວັນທີ 27 ຕຸລາ 2010 ເພື່ອລະດົມທຶນຮອນ ແລະ ປຶກສາຫາລືກັບຄູ່ຮ່ວມພັດທະນາໃນການຈັດຕັ້ງປະຕິບັດແຜນງານ, ໂຄງການຊ່ວຍເຫຼືອທາງການເພື່ອການພັດທະນາ; ພ້ອມດຽວກັນນັ້ນ, ກໍຕ້ອງຂຶ້ນແຜນຄວາມຕ້ອງການທຶນສົມທົບພາຍໃນ ຕໍ່ແຜນງານ, ໂຄງການຊ່ວຍເຫຼືອດັ່ງກ່າວໃຫ້ແທດເໝາະສົມເຫດສົມຜົນ. ສົມທົບກັບກະຊວງການເງິນ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າກົນໄກການຄຸ້ມຄອງທຶນຊ່ວຍເຫລືອ ແລະ ກູ້ຢືມຈາກຕ່າງປະເທດ ໃຫ້ລວມສູນສະດວກແກ່ການຕິດຕາມ, ກວດກາ, ລາຍງານ ແລະ ຮັບປະກັນໃຫ້ການນໍາໃຊ້ທຶນດັ່ງກ່າວໄປເຖິງປະຊາຊົນ, ມີປະສິດທິຜົນ, ໂປ່ງໃສ ແລະ ການປະສານງານທີ່ດີ.

12.5 ສົມທົບກັບກະຊວງທີ່ກ່ຽວຂ້ອງ ປັບປຸງກົນໄກການບໍລິການການລົງທຶນປະຕູດຽວໃຫ້ມີຄວາມເປັນເອກະພາບ, ວ່ອງໄວ, ໂປ່ງໃສ ແລະ ມີປະສິດທິຜົນ. ສືບຕໍ່ໂຄສະນາດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ໃຫ້ມີບັນຍາກາດດີ ບັນລຸຕາມຄາດໝາຍຂອງແຜນການ.

12.6 ເປັນໃຈກາງປະສານສົມທົບກັບບັນດາສະຖາບັນຄົ້ນຄວ້າຂອງກະຊວງ-ອົງການ ດໍາເນີນການຄົ້ນຄວ້າວິທະຍາສາດ ແລະ ດໍາເນີນການປະເມີນສຶກສາຄວາມເປັນໄປໄດ້ ໃນການປະຕິບັດໂຄງການໃໝ່, ໃຫຍ່ ເພື່ອຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ເປັນຕົ້ນ: ໂຄງການຄົ້ນຄວ້າການຫັນທີ່ດິນເປັນທຶນ, ໂຄງການຄົ້ນຄວ້າການສ້າງເທດສະບານ, ໂຄງການຄົ້ນຄວ້າສ້າງປະເທດລາວເປັນພື້ນທີ່ສີຂຽວຂອງໂລກ (ເພື່ອການທ່ອງທ່ຽວ), ຄົ້ນຄວ້າສ້າງທາງລົດໄຟ ແລະ ສະໜາມບິນ, ໂຄງການສ້າງເຂດເສດຖະກິດສະເພາະ, ເຂດເສດຖະກິດພິເສດ ແລະ ເຂດພັດທະນາ; ໂຄງການສົ່ງເສີມການຄົ້ນຄວ້າແນວພັນພືດ ແລະ ສັດ ແລະ ອື່ນໆ.

12.7 ສ້າງດໍາລັດຈັດຕັ້ງປະຕິບັດກົດໝາຍສະຖິຕິ, ດໍາເນີນການເຜີຍແຜ່ກົດໝາຍສະຖິຕິ ແລະ ຜັນຂະຫຍາຍຍຸດທະສາດການພັດທະນາລະບົບສະຖິຕິແຫ່ງຊາດ ຮອດປີ 2020 ໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

12.8 ເປັນໃຈກາງປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ, ເຜີຍແຜ່ ແລະ ແນະນໍາການຈັດຕັ້ງປະຕິບັດນິຕິກໍາ, ນະໂຍບາຍຕ່າງໆກ່ຽວກັບການຄຸ້ມຄອງເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ.

12.9 ສືບຕໍ່ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ຊຸກຍູ້, ເຜີຍແຜ່ ແລະ ຊອກຫາແຫລ່ງທຶນເພື່ອຈັດຕັ້ງປະຕິບັດແຜນແມ່ບົດພັດທະນາອຸດສະຫະກໍາພາກເໜືອ ແລະ ສືບຕໍ່ຈັດຕັ້ງປະຕິບັດແຜນແມ່ບົດຮ່ວມມືເຂດສາມຫລ່ຽມພັດທະນາ (CLV).

**ມາດຕາທີ 13: ມອບໃຫ້ ກະຊວງການເງິນ ປະຕິບັດດັ່ງນີ້** :

13.1 ສືບຕໍ່ປັບປຸງການຈັດຕັ້ງ ຂອງ 3 ຂະແໜງການພາສີ, ສ່ວຍສາອາກອນ ແລະ ຄັງເງິນແຫ່ງຊາດ ໂດຍລົງເລິກທາງດ້ານຄຸນນະພາບເປັນຕົ້ນຕໍ, ປັບປຸງການຄຸ້ມຄອງລວມສູນຕາມສາຍຕັ້ງໃຫ້ເຂັ້ມແຂງເຂົ້າສູ່ລະບົບ ໂດຍຫັນການຄຸ້ມຄອງໄປສູ່ລະບົບທັນສະໄໝ, ເພີ່ມທະວີການປະສານງານຕາມຄວາມຮັບຜິດ

ຊອບທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍລະຫວ່າງສາຍຕັ້ງ ແລະ ອຳນາດການປົກຄອງທ້ອງຖິ່ນ. ປັບປຸງ ແລະ ສ້າງຂຶ້ນຕື່ມບັນດານິຕິກຳທີ່ເຫັນວ່າບໍ່ທັນສອດຄ່ອງ, ບໍ່ທັນຄົບຖ້ວນ, ພ້ອມກັນນັ້ນ ກໍ່ໃຫ້ມີການປະເມີນຜົນກ່ຽວກັບການທົບທວນວຽກງານດັ່ງກ່າວຢ່າງເປັນປົກກະຕິ ເປັນຕົ້ນແມ່ນ ການແບ່ງຂັ້ນຄຸ້ມຄອງ ລະຫວ່າງ ກະຊວງການເງິນ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເພື່ອຮັບປະກັນເຮັດໃຫ້ການຄຸ້ມຄອງ 3 ຂະແໜງການສາຍຕັ້ງມີປະສິດທິຜົນ, ມີຄວາມເຂັ້ມແຂງ, ຮັບປະກັນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດໃຫ້ມີປະສິດທິຜົນສູງ.

13.2 ສືບຕໍ່ສ້າງ ແລະ ປັບປຸງບັນດານິຕິກຳ ທີ່ຕິດພັນກັບການຄຸ້ມຄອງການເງິນ ເພື່ອໃຫ້ສອດຄ່ອງກັບລະບຽບກົດໝາຍ ໃນການຈັດຕັ້ງປະຕິບັດແຕ່ລະໄລຍະ ເປັນຕົ້ນ ປັບປຸງກົດໝາຍວ່າດ້ວຍພາສີ, ກົດໝາຍວ່າດ້ວຍສ່ວຍສາອາກອນ, ເຜີຍແຜ່ ແລະ ຜັນຂະຫຍາຍດຳລັດວ່າດ້ວຍຄັງເງິນແຫ່ງຊາດ, ປັບປຸງລະບຽບການເບີກຈ່າຍງົບປະມານຜ່ານລະບົບຄັງເງິນແຫ່ງຊາດ, ເຂັ້ມງວດໃນການປະຕິບັດວິໄນການເງິນ ເປັນຕົ້ນແມ່ນ ປະຕິບັດຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດລະບຽບການກ່ຽວກັບການເກັບ ແລະ ນຳໃຊ້ງົບປະມານລາຍຮັບວິຊາການ ແລະ ກອງທຶນຂອງບັນດາຫົວໜ່ວຍງົບປະມານໂດຍໃຫ້ມີມາດຕະການຮັດກຸມຢ່າງຊັດເຈນ. ປັບປຸງ ແລະ ນຳໃຊ້ກຳນົດໝາຍແບ່ງປັນລາຍຈ່າຍບໍລິຫານປົກກະຕິ ເພື່ອເປັນບ່ອນອີງໃນການສ້າງແຜນງົບປະມານໃຫ້ສອດຄອງກັບສະພາບຄວາມເປັນຈິງຫຼາຍຂຶ້ນ, ຄົ້ນຄວ້າ ແລະ ປະກາດໃຊ້ນະໂຍບາຍການທັບຊັບສິນເປັນທຶນ; ສືບຕໍ່ຄົ້ນຄວ້າ ແລະ ປັບປຸງການບັນຊີແຫ່ງລັດ, ອອກປຶ້ມຄູ່ມືບັນຊີແຫ່ງລັດ ແລະ ການບັນຊີວິສາຫະກິດ ເພື່ອປະຕິບັດໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການບັນຊີ (ສະບັບປັບປຸງ), ອອກລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນທີ່ໄດ້ຈາກການເກັບລາຍຮັບເກີນແຜນ.

- ຂະແໜງສ່ວຍສາອາກອນຄົ້ນຄວ້າ ແລະ ນຳສະເໜີການເພີ່ມອັດຕາອາກອນຊົມໃຊ້ແບບເດັດຖານສຳລັບສິນຄ້ານຳເຂົ້າ ແລະ ການຜະລິດພາຍໃນ ເຫຼົ້າ, ເບຍ, ຢາສູບ ໂດຍການນຳສະເໜີອອກລັດຖະບັນຍັດຂອງປະທານປະເທດ ເພື່ອທົດແທນລາຍຮັບຈາກການປັບອັດຕາອາກອນກຳໄລລົງມາເປັນອັດຕາດຽວ ແລະ ວາງລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນບຳເນັດຕໍ່ຜູ້ມີຜົນງານ, ເລັ່ງທວງ ແລະ ເກັບກູ້ລາຍຮັບທີ່ເຊື່ອງອຳ ແລະ ລາຍຮັບເກີນແຜນ ສົກປີ 2010-2011.
- ຄຸ້ມຄອງເກັບລາຍຮັບທີ່ເປັນລາຍຮັບຂອງພູດສູນກາງ ເຊັ່ນ: ຄ່າທຳນຽມວິຊາກັບດ່ານລວມສູນຢູ່ກະຊວງການຕ່າງປະເທດ.

13.3 ຄຸ້ມຄອງຮ່ວງລາຍຮັບທີ່ລັດຖະບານໄດ້ກຳນົດລະບຽບການອອກ ໃຫ້ລວມສູນເຂົ້າງົບປະມານແຫ່ງລັດຕາມກົດໝາຍວ່າ ດ້ວຍງົບປະມານແຫ່ງລັດ, ໃນນີ້ ໃຫ້ສຸມໃສ່ບາງບັນຫາດັ່ງນີ້:

- ກຳນົດປະເພດລາຍຮັບທີ່ເປັນພູດຂອງສູນກາງ ແລະ ທ້ອງຖິ່ນໃຫ້ລະອຽດ, ຊັດເຈນ ໂດຍອີງຕາມມາດຕາ ທີ 37 (ແຫຼ່ງລາຍຮັບທີ່ເປັນພູດຂອງສູນກາງ) ແລະ ມາດຕາທີ 38 (ແຫຼ່ງລາຍຮັບທີ່ເປັນພູດຂອງທອງຖິ່ນ) ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ.
- ສົມທົບກັບຫຼາຍພາກສ່ວນ, ຂະແໜງການ ນັບທັງຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຊອກຮູ້ປະກົດການລະເມີດລະບຽບກົດໝາຍ ແລະ ການເຊື່ອງອຳລາຍຮັບຂອງບັນດາຫົວໜ່ວຍທຸລະກິດທີ່ມີຈຸດປະສົງຫຼີກລ້ຽງພັນທະຕໍ່ງົບປະມານລວມທັງລາຍຮັບວິຊາການຂອງບັນດາອົງການ ແລະ ຂະແໜງການ, ການລະເມີດລະບຽບການນຳເຂົ້າສິນຄ້າແບບບໍ່ຖືກຕ້ອງເພື່ອແກ້ໄຂໃຫ້ທັນສະພາບການ ແລະ ເກັບກູ້ເອົາລາຍຮັບເຂົ້າງົບປະມານຢ່າງຄົບຖ້ວນ.

- ເປັນເຈົ້າການໃນການປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ສົກປີ 2010-2011 ໃຫ້ໄດ້ຕາມຄາດໝາຍ, ໂດຍສຸມໃສ່ຂຸດຄົ້ນທຸກແຫຼ່ງລາຍຮັບ ແລະ ເກັບລາຍຮັບລວມສູນເຂົ້າງົບປະມານແຫ່ງລັດ ເພື່ອຮັບປະກັນການປະຕິບັດລາຍຈ່າຍງົບປະ ມານໄປຕາມແຜນລາຍຈ່າຍ ທີ່ສະພາແຫ່ງຊາດໄດ້ຮັບຮອງເອົາ.
- ບຸກບືນສຸດຂີດເພື່ອຂຸດຄົ້ນທຸກແຫຼ່ງລາຍຮັບທີ່ຍັງບົ່ມຊ້ອນ, ເກັບໃຫ້ໄດ້ໝົດ ແລະ ຖອກເຂົ້າງົບປະມານໃຫ້ຄົບຖ້ວນ, ພ້ອມກັນນັ້ນ ກໍ່ຕ້ອງຈໍາກັດ ແລະ ອັດຊ່ອງຫວ່າງການຮົ່ວໄຫຼຂອງລາຍຮັບ ດ້ວຍການເພີ່ມທະວີການຕິດຕາມກວດກາ, ມີມາດຕະການປະຕິບັດວິໄນການເງິນ ແລະ ລະບຽບລວມສູນງົບປະມານຕໍ່ກັບຜູ້ລະເມີດຢ່າງເຂັ້ມງວດ.
- ຈັດຕັ້ງປະຕິບັດລະບຽບກົດໝາຍການເງິນຢ່າງເຂັ້ມງວດ ເປັນເອກະພາບໃນຂອບເຂດທົ່ວປະເທດ. ຕ້ອງເດັດຂາດແກ້ໄຂຢ່າງຂາດຕົວ ຕໍ່ການຕົກລົງຫຼຸດຜ່ອນ, ຍົກເວັ້ນພາສີ-ອາກອນ ແບບບໍ່ຖືກຕ້ອງ ຊຶ່ງເປັນຊ່ອງຫວ່າງໃຫ້ແກ່ການຮົ່ວໄຫຼຕົກເຮ່ຍເສຍຫາຍຂອງລາຍຮັບງົບປະມານລັດ, ໃນນັ້ນ ໃຫ້ສຸມໃສ່ເຂັ້ມງວດໃນການຄຸ້ມຄອງການນໍາເຂົ້ານໍ້າມັນເຊື້ອໄຟທຸກປະເພດຢ່າງເຂັ້ມງວດ, ຫ້າມຍົກເວັ້ນຫລຸດຜ່ອນພາສີ-ອາກອນນໍາເຂົ້ານໍ້າມັນເຊື້ອໄຟຮັບໃຊ້ໂຄງການຂອງລັດ. ທຸກຫົວໜ່ວຍການກໍ່ສ້າງຕ້ອງຄິດໄລ່ຕາມລະບຽບການ ໂດຍໃຫ້ຄິດໄລ່ຄ່າພາສີ-ອາກອນເຂົ້ານໍາ ໃນລາຄາຫົວໜ່ວຍກໍ່ສ້າງ.
- ປັບປຸງຂອດບໍລິການໃນການຄຸ້ມຄອງເກັບລາຍຮັບໃຫ້ກະທັດຮັດ, ວ່ອງໄວ, ຈະແຈ້ງ, ໂດຍການຫັນນໍາໃຊ້ເຄື່ອງມືທັນສະໄໝດ້ວຍລະບົບຄອມພິວເຕີ ພ້ອມທັງຮັບປະກັນຄວາມຖືກຕ້ອງຊັດເຈນ ແລະ ໂປ່ງໃສ ກຽມພ້ອມບໍລິການໃຫ້ຜູ້ປະກອບການໃຫ້ມີຄວາມເປັນທໍາ. ສົມທົບກັບທຸກຂະແໜງການ, ພາກສ່ວນທີ່ກ່ຽວຂ້ອງ ເພື່ອກະຕຸກຊຸກຍູ້ໃນການຈັດຕັ້ງປະຕິບັດເກັບອາກອນມູນຄ່າເພີ່ມໃຫ້ໄດ້ຜົນດີໃນຂອບເຂດທົ່ວປະເທດ ໂດຍໃຫ້ອໍານາດການປົກຄອງແຕ່ລະທ້ອງຖິ່ນແຕ່ງຕັ້ງຄະນະຊີ້ນໍາຕິດຕາມການຈັດຕັ້ງປະຕິບັດເກັບອາກອນມູນຄ່າເພີ່ມ, ໄປພ້ອມໆກັນກໍ່ຕ້ອງເອົາໃຈໃສ່ສຶກສາອົບຮົມໂຄສະນາເຜີຍແຜ່ໃຫ້ພາກສ່ວນທຸລະກິດ, ປະຊາຊົນ, ຜູ້ປະກອບການ ແລະ ສະມາຊິກພັກ ພະນັກງານ ເພື່ອຮັບຮູ້ ແລະ ເຂົ້າໃຈ, ປະກອບເຄື່ອງມືທີ່ຈໍາເປັນໃນການປັບປຸງລະບົບບັນຊີຂອງວິສາຫະກິດ, ບົນພື້ນຖານອາກອນມູນຄ່າເພີ່ມ, ກົດໝາຍສ່ວຍສາອາກອນສະບັບປັບປຸງໃໝ່ ແລະ ລະບຽບການຕ່າງໆ ເພື່ອເຮັດໃຫ້ອາກອນມູນຄ່າເພີ່ມຖືກນໍາໃຊ້ຢ່າງມີປະສິດທິຜົນ.
- ຕັ້ງໜ້າ ແລະ ມີມາດຕະການເດັດຂາດ ເກັບກູ້ໜີ້ຕ້ອງຮັບທີ່ຍັງຕົກຄ້າງ ໃນປີຜ່ານມາ ເປັນຕົ້ນແມ່ນໜີ້ຕ້ອງຮັບຈາກການຈ່າຍເງິນລ່ວງໜ້າຂອງຄັງເງິນແຫ່ງຊາດ, ໜີ້ຕ້ອງຮັບ ຫຼື ຊັບສິນທີ່ໄດ້ຈາກການຕັດສິນຄະດີຕ່າງໆ ຂອງສານແຕ່ລະຂັ້ນ, ໜີ້ປ່ອຍກູ້ໃຫ້ວິສາຫະກິດຕ່າງໆ ທີ່ຜ່ານມາ.

13.4 ດ້ານລາຍຈ່າຍ: ຄຸ້ມຄອງ ແລະ ນໍາພາການຈັດຕັ້ງປະຕິບັດທຸກຮ່ອງລາຍຈ່າຍທີ່ສະພາແຫ່ງຊາດໄດ້ຮັບຮອງໃຫ້ຖືກຕ້ອງຕາມແຜນງານ, ໂຄງການ, ແຜນຄົນ, ແຜນເງິນ ພ້ອມທັງຈັດແຜນລາຍຈ່າຍງົບປະມານ ສົກປີ 2010-2011 ເຂົ້າໃນແຜນວຽກຈຸດສຸມ ໂດຍສຸມໃສ່ບາງວຽກດັ່ງນີ້:

- ສູ້ຊົນຈັດຕັ້ງປະຕິບັດລາຍຈ່າຍງົບປະມານໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ທີ່ສະພາແຫ່ງຊາດ ໄດ້ຮັບຮອງເອົາແລ້ວນັ້ນ ເພື່ອຮັບປະກັນການກະຕຸ້ນເສດຖະກິດ ແລະ ການຜະລິດສິນຄ້າໃຫ້ມີທ່າອ່ຽງດີຂຶ້ນ.
- ການປະຕິບັດລາຍຈ່າຍຕ້ອງປະຕິບັດ ຕາມລະບຽບການຂອງການເງິນ, ຕາມນະໂຍບາຍລາຍຈ່າຍແບບຮັດກຸມ, ປະຢັດມັດທະຍັດ ແລະ ເຂັ້ມງວດໃນການປະຕິບັດວິໄນການເງິນ.

- ເປັນເຈົ້າການໃນການຄຸ້ມຄອງ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດລາຍຈ່າຍງົບປະມານຕົວຈິງ ທີ່ຂຶ້ນກັບຕົນຮັບຜິດຊອບໃຫ້ໄປຕາມແຜນບູລິມະສິດຂອງລັດຖະບານ ແລະ ໄປຕາມໂຄງປະກອບແຜນລາຍຈ່າຍ ທີ່ສະພາແຫ່ງຊາດຮັບຮອງ ເປັນຕົ້ນແມ່ນ ໃຫ້ບັນດາຂະແໜງການ ແລະ ທ້ອງຖິ່ນຈັດສັນລາຍຈ່າຍເຂົ້າໃນຂະແໜງສຶກສາ ແລະ ສາທາລະນະສຸກ ໃຫ້ໄດ້ຕາມຄາດໝາຍທີ່ສະພາແຫ່ງຊາດໄດ້ກຳນົດໄວ້, ບໍ່ໃຫ້ມີການຈ່າຍນອກແຜນງົບປະມານ ຢ່າງເດັດຂາດ.
- ຂະແໜງການທີ່ມີລາຍຮັບຄ່າທຳນຽມ ແລະ ລາຍຮັບວິຊາການ ຕ້ອງເປີດບັນຊີເງິນຝາກຂອງຕົນຢູ່ໃນລະບົບຄັງເງິນແຫ່ງຊາດ, ລວມທັງການເຄື່ອນໄຫວລາຍຮັບ-ລາຍຈ່າຍທັງໝົດ ຕ້ອງມອບຜ່ານລະບົບບັນຊີຢູ່ຄັງເງິນແຫ່ງຊາດ. ລາຍຈ່າຍຂອງບ້ວງລາຍຮັບວິຊາການ ແລະ ລາຍຈ່າຍກອງທຶນ ຕ້ອງນອນຢູ່ໃນແຜນງົບປະມານແຫ່ງລັດ ແລະ ໃຫ້ຈ່າຍຕາມແຜນທີ່ສະພາແຫ່ງຊາດຮັບຮອງຢ່າງເຂັ້ມງວດ.
- ສຳລັບການນຳໃຊ້ເງິນເກີນແຜນບ້ວງຂອງແຂວງ ສົກປີ 2009-2010 ລັດຖະບານ ອະນຸຍາດໃຫ້ບັນດາແຂວງ ສ້າງແຜນລາຍຈ່າຍບ້ວງເງິນດັ່ງກ່າວຂອງຕົນບໍ່ເກີນ 70% ຂອງລາຍຮັບເກີນແຜນທັງໝົດພາຍຫລັງກວດກາ 0 ໂມງສຳເລັດ, ສ່ວນທີ່ເຫລືອອີກ 30% ແມ່ນຈະອະນຸຍາດໃຫ້ຈ່າຍພາຍຫລັງກວດກາຂາດຕົວສຳເລັດແລ້ວ ກ່ອນຈະນຳໃຊ້ຕ້ອງໄດ້ນຳສະເໜີແຜນການໃຊ້ຈ່າຍຕໍ່ລັດຖະບານເພື່ອຂໍການອະນຸມັດຈາກສະພາແຫ່ງຊາດຕາມລະບຽບການ, ເປົ້າໝາຍການຈ່າຍນັ້ນ ໃຫ້ຊຳລະໜີ້ບັນດາໂຄງການລົງທຶນຂອງລັດພາຍໃນແຂວງຂອງຕົນ ຕ່ຳສຸດບໍ່ໃຫ້ຫລຸດ 50% ສ່ວນທີ່ເຫລືອຈຶ່ງຈັດເຂົ້າໃນວຽກງານບູລິມະສິດອື່ນໆຕໍ່ໄປ.

13.5 ການແກ້ໄຂເຫດການສຸກເສີນໄພພິບັດທຳມະຊາດ ແລະ ວຽກງານບັງເອີນຕ່າງໆ ເຊັ່ນ: ໄຟໄໝ້, ນ້ຳຖ້ວມ, ລົມພະຍຸ ແລະ ໂລກລະບາດ ໂດຍຫລັກການແມ່ນໃຫ້ນຳໃຊ້ເງິນແຮລັດຖະບານ ແລະ ເງິນແຮຂອງແຂວງເພື່ອແກ້ໄຂ. ໃນກໍລະນີແກ້ໄຂວຽກສຸກເສີນ ກະທັນຫັນ ຮີບດ່ວນ ເພື່ອປະຕິບັດໃຫ້ທັນສະພາບການ ໃຫ້ຍົກເວັ້ນການປະມູນ ທາບທາມລາຄາ, ໃຫ້ພາກສ່ວນທີ່ກ່ຽວຂ້ອງສາມາດປະຕິບັດໄດ້ເລີຍ ໂດຍອີງຕາມການຕົກລົງຂອງຂັ້ນເທິງ ຫລື ຄະນະກຳມະການແກ້ໄຂສະພາບການດັ່ງກ່າວ ແຕ່ໃຫ້ເບິ່ງລາຄາຕົວຈິງໃຫ້ສົມເຫດສົມຜົນກັບລາຄາທ້ອງຕະຫລາດ; ແຕ່ກໍລະນີການປັບປຸງຟື້ນຟູປົວແປງຜົນກະທົບໃຫ້ກັບສູ່ສະພາບປົກກະຕິ ເປັນຕົ້ນ: ຟື້ນຟູພື້ນຖານໂຄງລ່າງ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ກໍຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍທີ່ກຳນົດໄວ້ ທັງນີ້ກໍເພື່ອນຳໃຊ້ງົບປະມານໃຫ້ໄດ້ຮັບຜົນປະໂຫຍດສູງສຸດ.

13.6 ໃນໄລຍະຕົ້ນປີ ທີ່ລາຍຮັບງົບປະມານບໍ່ທັນຮັບປະກັນໃຫ້ແກ່ການປະຕິບັດລາຍຈ່າຍໄດ້ນັ້ນ ໃຫ້ກະຊວງການເງິນ ມີສິດຢືມເງິນລ່ວງໜ້າຈາກທະນາຄານແຫ່ງ ສປປ ລາວ ໃນວົງເງິນບໍ່ກາຍແຜນລາຍຈ່າຍງົບປະມານງວດ 1, ແຕ່ຕ້ອງມີກົນໄກຊຳລະສະສາງຄືນໃຫ້ທະນາຄານພາຍໃນສົກງົບປະມານນັ້ນ ເພື່ອຮັບປະກັນໃຫ້ແກ່ການຮັກສາສະຖຽນລະພາບທາງດ້ານການເງິນແຫ່ງຊາດ ຕາມທີ່ໄດ້ເຄີຍປະຕິບັດຜ່ານມາ.

13.7 ກະຊວງການເງິນ ສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ຄຸ້ມຄອງການນຳໃຊ້ແຫຼ່ງທຶນກູ້ຢືມແລະຊ່ວຍເຫຼືອລ້າຈາກຕ່າງປະເທດທີ່ບໍ່ມີເງື່ອນໄຂຜູກມັດ, ດອກເບ້ຍຕ່ຳ ໄລຍະກູ້ຢືມຍາວ ເພື່ອປະຕິບັດໂຄງການພັດທະນາທີ່ເປັນບູລິມະສິດຂອງລັດຖະບານຢ່າງມີປະສິດທິຜົນ.

13.8 ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ເພື່ອຈັດເກັບອາກອນທີ່ດິນ ໂດຍໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍລາຍຮັບຈາກທີ່ດິນ.

**ມາດຕາທີ 14: ມອບໃຫ້ ທະນາຄານແຫ່ງ ສປປ ລາວ ປະຕິບັດ ດັ່ງນີ້ :**

14.1 ຄົ້ນຄວ້າວາງນະໂຍບາຍເງິນຕາໃຫ້ສົມດູ່ກັບການຂະຫຍາຍຕົວຂອງເສດຖະກິດ; ຄຸ້ມຄອງ ແລະ ດັດສົມປະລິມານເງິນໃນຂອດຈໍລະຈອນຕາມການຂະຫຍາຍຕົວຂອງເສດຖະກິດ ຢ່າງຈິດຈໍ່ຕົ້ມອີກ, ຄຸ້ມຄອງ ແລະ ດັດສົມທາງດ້ານມະຫາພາກຕໍ່ກັບນະໂຍບາຍດ້ານເງິນຕາ, ຮັບປະກັນບັນລຸໄດ້ຕາມຄາດໝາຍທີ່ກຳນົດໄວ້. ຄຸ້ມຄອງ ແລະ ປັບປຸງທະນາຄານທຸລະກິດລັດ ໃຫ້ມີຄວາມສາມາດໃນການບໍລິການ ຢ່າງມີປະສິດທິພາບ ແລະ ໄດ້ມາດຕະຖານສາກົນເທື່ອລະກ້າວ ເພື່ອສ້າງຄວາມເຊື່ອຖືໃຫ້ແກ່ລູກຄ້າ; ເພີ່ມທະວີເອົາໃຈໃສ່ການແກ້ໄຂບັນຫາໜີ້ສິນຄ້າງຄາ ແລະ ໜີ້ບໍ່ເກີດດອກອອກຜົນ ໂດຍໃຫ້ມີມາດຕະການປະຕິບັດທີ່ຊັດເຈນ ແລະ ມີປະສິດທິພາບ; ອຳນວຍຄວາມສະດວກເງິນລ່ວງໜ້າໃຫ້ງົບປະມານຕາມມາດຕາ 13 ຂໍ້ 13.6 ຂອງດຳລັດສະບັບນີ້ ໃຫ້ທັນກັບສະພາບຄວາມຕ້ອງການຕົວຈິງ.

14.2 ເພີ່ມການຊີ້ນຳບັນດາທະນາຄານ ເປັນຕົ້ນ ທະນາຄານທຸລະກິດຂອງລັດ ໃນການລະດົມເງິນຝາກໃຫ້ໄດ້ຕາມຄາດໝາຍ ແລະ ປ່ອຍສິນເຊື່ອໃຫ້ໄດ້ ປະມານ 2.220 ຕື້ກີບ, ສົ່ງເສີມການຜະລິດ ແລະ ການບໍລິການ; ປ່ອຍສິນເຊື່ອໃຫ້ໄດ້ຕາມແຜນການທີ່ກຳນົດໄວ້ ເພື່ອຊຸກຍູ້ການຜະລິດເຂົ້າ, ສະບຽງອາຫານ ແລະ ຜະລິດສິນຄ້າອື່ນໆ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດໃຫ້ໄດ້ຢ່າງພຽງພໍ, ໃນນີ້ ໃຫ້ເອົາໃຈໃສ່ເປັນພິເສດຕໍ່ການຕິດຕາມກວດກາການປ່ອຍສິນເຊື່ອໃຫ້ຖືກຕາມເປົ້າໝາຍ ແລະ ການນຳໃຊ້ສິນເຊື່ອໃຫ້ເກີດດອກອອກຜົນ. ການປ່ອຍສິນເຊື່ອຕ້ອງໄປຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ.

14.3 ເພີ່ມແຫລ່ງທຶນສິນເຊື່ອ ເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍ, ຊຸກຍູ້ທະນາຄານນະໂຍບາຍຢູ່ແຕ່ລະຂັ້ນ ໃຫ້ເຄື່ອນໄຫວປ່ອຍເງິນກູ້ໃຫ້ກຸ່ມເປົ້າໝາຍ, ແຕ່ຕ້ອງອີງໃສ່ໂຄງການຜະລິດສິນຄ້າ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນ ເພື່ອປ່ອຍກູ້ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ.

14.4 ສົ່ງເສີມການນຳໃຊ້ເງິນກີບ ໃຫ້ກວ້າງຂວາງກວ່າເກົ່າ, ປັບປຸງລະບົບທະນະຄານທຸລະກິດຂອງລັດ ແລະ ຫຸ້ນສ່ວນ ໃຫ້ມີຄວາມເຂັ້ມແຂງ ດ້ວຍການເພີ່ມທຶນໃຫ້ພຽງພໍ ແລະ ປັບປຸງການດຳເນີນງານໃຫ້ມີຄວາມສາມາດແຂ່ງຂັນສູງ ແລະ ມີຄວາມທັນສະໄໝຍິ່ງຂຶ້ນ; ສົ່ງເສີມການຊຳລະຜ່ານລະບົບທະນາຄານ, ເປີດກວ້າງການບໍລິການເບີກຈ່າຍເງິນເດືອນຂອງອົງການບໍລິຫານ ແລະ ວິສາຫະກິດ ຜ່ານບັນຊີຢູ່ທະນາຄານ; ຄຸ້ມຄອງກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນຢ່າງຮັດກຸມ ຕາມລະບຽບກົດໝາຍ.

**ມາດຕາທີ 15: ມອບໃຫ້ ກະຊວງກະສິກຳ-ປ່າໄມ້ ປະຕິບັດດັ່ງນີ້:**

15.1 ສຸມທຸກກຳລັງ ແລະ ປະຕິບັດບັນດາມາດຕະການສົ່ງເສີມທີ່ຕັ້ງໜ້າເພື່ອໃຫ້ການຜະລິດເຂົ້າ ແລະ ພືດເປັນສິນຄ້າໃຫ້ໄດ້ຕາມແຜນ, ຮັບປະກັນໃຫ້ການຜະລິດລະດູນາປີ ແລະ ການປູກພືດເປັນສິນຄ້າໃນລະດູຝົນໃຫ້ໄດ້ຮັບຜົນດີ; ປັບປຸງ ແລະ ສ້າງຕັ້ງກຸ່ມການຜະລິດໃຫ້ເຂັ້ມແຂງຂຶ້ນຕື່ມ.

15.2 ສະໜອງແນວພັນ, ປັບປຸງ-ຟື້ນຟູລະບົບຊົນລະປະທານ; ກະກຽມຮອບດ້ານ ເພື່ອຕ້ານແລ້ງ-ຕ້ານຖ້ວມ ໂດຍເອົາໃຈໃສ່ຕໍ່ເຂດທີ່ມີຄວາມສ່ຽງເພື່ອແກ້ໄຂໃຫ້ທັນການ ແລະ ມີປະສິດທິພາບ; ຮີບຮ້ອນຄົ້ນຄວ້າ ແລະ ກະກຽມມາດຕະການ ແລະ ໂຄງການລະອຽດ ເພື່ອຕອບໂຕ້ກັບໄພແຫ້ງແລ້ງໃນລະດູຝົນ ແລະ ກະກຽມຢ່າງແຂງແຮງໃຫ້ແກ່ການຜະລິດລະດູແລ້ງ ເພື່ອຮັກສາລະດັບການຂະຫຍາຍດ້ານກະສິກຳ ໃຫ້ໄດ້ຕາມຄາດໝາຍ. ຄົ້ນຄວ້າບັນດາມາດຕະການລະອຽດ ກ່ຽວກັບການສົ່ງເສີມການຜະລິດກະສິກຳ-ປ່າໄມ້ ຕິດພັນກັບການຕ້ານແລ້ງ-ຕ້ານຖ້ວມ ສົກປີ 2010-2011 ເພື່ອໃຫ້ລັດຖະບານອອກເປັນຄຳສັ່ງແນະນຳ. ຮີບຮ້ອນປະຕິບັດໂຄງການຈຸດສຸມຂອງລັດຖະບານກ່ຽວກັບການຈັດສັນ ແລະ ພັດທະນາທີ່ດິນກະສິກຳ.

15.3 ສືບຕໍ່ຜັນຂະຫຍາຍຍຸດທະສາດປ່າໄມ້ຮອດປີ 2020 ອອກເປັນໂຄງການ ແລະ ແຜນວຽກລະອຽດ. ສືບຕໍ່ປັບປຸງ ແລະ ຂະຫຍາຍຕາໜ່າງຄຸ້ມຄອງປ່າສະຫງວນແຫ່ງຊາດ 21 ແຫ່ງ, ສຳຫລວດ ແລະ ກຳນົດເຂດປ່າຜະລິດແຫ່ງຊາດ, ເອົາໃຈໃສ່ສຶກສາສຳຫລວດ ແລະ ກຳນົດເຂດປ່າປ້ອງກັນຍອດນ້ຳ ແລະ ສາຂາຍ່ອຍຕ່າງໆ, ສຳຫລວດແບ່ງເຂດດິນປ່າໄມ້ປະເພດຕ່າງໆ, ດຳເນີນການຟື້ນຟູປ່າທຳມະຊາດ ໄປຄຽງຄູ່ກັບການປຸກລະດົມການປູກໄມ້ເພື່ອເພີ່ມອັດຕາການປົກຫຸ້ມຂອງປ່າໄມ້ ໃຫ້ໄດ້ປະມານ 55% ພາຍໃນປີ 2011; ໃນນັ້ນ, ປ່າສະຫງວນ 3,5 ລ້ານເຮັກຕາ, ປ່າປ້ອງກັນ 4,7 ລ້ານເຮັກຕາ ແລະ ປ່າຜະລິດ 3 ລ້ານເຮັກຕາ.

15.4 ປະສານສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ, ອົງການຄຸ້ມຄອງທີ່ດິນແຫ່ງຊາດ ແລະ ທ້ອງຖິ່ນຕ່າງໆ ປະຕິບັດຄຳສັ່ງ ເລກທີ 17/ນຍ, ລົງວັນທີ 22/09/2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້ ຢ່າງເຂັ້ມງວດ.

15.5 ເຂັ້ມງວດກວດກາ ການບຸກລຸກເຂົ້າເຂດປ່າສະຫງວນ ໂດຍນຳໃຊ້ມາດຕະການທາງດ້ານກົດໝາຍຢ່າງເດັດຂາດ, ປັບປຸງກວດກາການເຄື່ອນຍ້າຍສັດເຂົ້າ-ອອກຕາມຈຸດດ່ານສາກົນຕ່າງໆ.

15.6 ປະສານສົມທົບແໜ້ນກັບຂະແໜງພະລັງງານ ເພື່ອສືບຕໍ່ຈັດຕັ້ງປະຕິບັດນະໂຍບາຍອຸດໜູນລາຄາພະລັງງານ ເພື່ອຮັບໃຊ້ການຜະລິດກະສິກຳ ເປັນຕົ້ນ: ການຜະລິດເຂົ້າ ແລະ ສະບຽງອາຫານ.

15.7 ຊຸກຍູ້ການຜະລິດກະສິກຳ ໃຫ້ຕິດພັນກັບອຸດສາຫະກຳປຸງແຕ່ງ ໂດຍສຸມໃສ່ການຂະຫຍາຍກຳລັງການຜະລິດ ແລະ ປັບປຸງການພົວພັນການຜະລິດໃຫ້ດີຂຶ້ນ. ສຸມທຶນຮອນເຂົ້າໃສ່ວຽກງານສົ່ງເສີມດ້ານວິຊາການ ເປັນຕົ້ນ ການຄົ້ນຄວ້າ-ທົດລອງ ແນວພັນພືດ ແລະ ພັນສັດ ພ້ອມທັງຜັນຂະຫຍາຍຜົນສຳເລັດດັ່ງກ່າວເຂົ້າສູ່ຂະບວນການຜະລິດຕົວຈິງ. ອອກລະບຽບການ ແລະ ແຈ້ງການຕ່າງໆເພື່ອຊຸກຍູ້ການຜະລິດໃຫ້ທ່ວງທັນກັບລະດູການ.

15.8 ຊີ້ນຳກົມວິຊາການ, ຂະແໜງການສາຍຕັ້ງຂອງຕົນຢູ່ທ້ອງຖິ່ນ ໃຫ້ການບໍລິການ ແລະ ຊ່ວຍເຫລືອແນະນຳແນວພັນ, ເຕັກນິກວິຊາການດ້ານປູກຝັງ ແລະ ລ້ຽງສັດ, ປ້ອງກັນສັດຕູພືດ, ພະຍາດສັດໃຫ້ຊາວກະສິກອນ ແນໃສ່ຍົກສູງສະມັດຕະພາບການຜະລິດ. ປັບປຸງສູນເຕັກນິກກະສິກຳ-ປ່າໄມ້ ທີ່ມີແລ້ວ 168 ແຫ່ງ ໃຫ້ສາມາດຖ່າຍທອດເຕັກນິກ ແລະ ເຮັດໜ້າທີ່ບໍລິການໃຫ້ແກ່ຊາວກະສິກອນ. ສົມທົບກັບຂະແໜງການທີ່ກ່ຽວຂ້ອງປະເມີນປະສິດທິຜົນໂຄງການຊົນລະປະທານ ໃນທົ່ວປະເທດເພື່ອວາງແຜນພັດທະນາລະບົບຊົນລະປະທານໃນສະເພາະໜ້າ ແລະ ຍາວນານ. ສຳຫລວດອອກແບບໂຄງການໃໝ່ຈຳນວນໜຶ່ງທີ່ມີທິດທັນເປັນຊົນລະກະເສດໃນບ່ອນມີເງື່ອນໄຂ.

15.9 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານກະສິກຳ-ປ່າໄມ້ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 16: ມອບໃຫ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະຕິບັດດັ່ງນີ້ :**

16.1 ເພີ່ມທະວີ ແລະ ສົ່ງເສີມການສົ່ງອອກຢ່າງແຂງແຮງ ດ້ວຍການປັບປຸງການບໍລິການລັດໃຫ້ກະທັດຮັດ, ປັບປຸງບັນດານິຕິກຳທີ່ພົວພັນ ກັບການນຳເຂົ້າ ແລະ ສົ່ງອອກ ລວມທັງຂໍ້ກຳນົດຕ່າງໆ ກ່ຽວກັບການຄ້າຊາຍແດນ, ຜ່ານແດນ ແລະ ຂາອອກຕໍ່ໃຫ້ຄ່ອງຕົວ. ສືບຕໍ່ສົມທົບກັບຂະແໜງການ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຄົ້ນຄວ້ານະໂຍບາຍ, ກົດໝາຍ, ລະບຽບການຕ່າງໆ ເພື່ອພັດທະນາ ແລະ ຄຸ້ມຄອງເຂດອຸດສາຫະກຳ, ເຂດການຄ້າເສລີ ແລະ ການບໍລິການຜ່ານ ທີ່ລັດຖະບານໄດ້ຕົກລົງແລ້ວໃຫ້ສຳເລັດໂດຍໄວ.

16.2 ຄົ້ນຄວ້າເພື່ອວາງນະໂຍບາຍ ແລະກົນໄກໃນການສົ່ງເສີມ ແລະ ເພີ່ມມູນຄ່າການສົ່ງອອກ ກັບບັນດາປະເທດຄູ່ຄ້າ, ປະເທດໃນກຸ່ມອາຊຽນ, ສະຫະພາບເອີຣົບ ແລະ ສຸມໃສ່ການຂະຫຍາຍຕະຫລາດການສົ່ງອອກໃຫ້ກວ້າງອອກສູ່ສາກົນ, ເປີດຕະຫລາດໃໝ່ອອກສູ່ບັນດາປະເທດທີ່ມີທ່າແຮງ ແລະ ຄົ້ນຄວ້າ ສິນຄ້າໃໝ່ທີ່ມີທ່າແຮງບົ່ມຊ້ອນຂອງຊາດ. ສືບຕໍ່ເຈລະຈາ ເພື່ອເຂົ້າເປັນສະມາຊິກອົງການການຄ້າໂລກ.

16.3 ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ແຜນແມ່ບົດພັດທະນາວິສະຫາກິດຂະໜາດນ້ອຍ ແລະ ກາງ, ດຳລັດ ເລກທີ 42/ນຍ ວ່າດ້ວຍການສົ່ງເສີມ ແລະ ພັດທະນາວິສາຫະກິດຂະໜາດນ້ອຍ ແລະ ກາງ ຢູ່ ສປປ ລາວ ເພື່ອຊຸກຍູ້ການຜະລິດໃຫ້ກວ້າງຂວາງຂຶ້ນກວ່າເກົ່າ ໂດຍສົ່ງເສີມໃຫ້ທຸກພາກສ່ວນເສດຖະກິດເຂົ້າຮ່ວມຢ່າງຕັ້ງໜ້າ.

16.4 ປະສານສົມທົບກັບ ສະພາອຸດສາຫະກຳ-ການຄ້າ ແລະ ທະນາຄານຄົ້ນຄວ້າສ້າງໂຄງການເພື່ອປ່ອຍສິນເຊື່ອຕາມກຸ່ມເປົ້າໝາຍ ແລະ ບັນດາໂຄງການຜະລິດເປັນສິນຄ້າແບບຍືນຍົງ ແລະ ສົ່ງເສີມທຸລະກິດຂະໜາດນ້ອຍ-ຂະໜາດກາງ.

16.5 ເພີ່ມທະວີປະຕິບັດພາລະບົດບາດຄຸ້ມຄອງ-ດັດສົມຕະຫຼາດ; ຕິດຕາມຢ່າງໃກ້ສິດສະພາບການເໜັງຕີງຂອງລາຄາສິນຄ້າ, ສະພາບການສະໜອງ ແລະ ຄວາມຕ້ອງການສິນຄ້າອຸປະໂພກບໍລິໂພກ ໂດຍສະເພາະແມ່ນເຂົ້າ ແລະ ສະບຽງອາຫານ ໃຫ້ດຳເນີນມາດຕະການແຊກແຊງໃນເມື່ອຈຳເປັນເພື່ອໃຫ້ລາຄາມີຄວາມສະຫງົບສົມເຫດສົມຜົນ ຮັບປະກັນບໍ່ໃຫ້ເກີດສະພາບຂາດແຄນ, ສະກັດກັ້ນການກັກຕູນ ເພື່ອສວຍໂອກາດຂຶ້ນລາຄາຕາມລຳພັງໃຈ; ຮີບຮ້ອນປັບປຸງລັດວິສາຫະກິດ ສະບຽງອາຫານ ໃຫ້ມີຄວາມເຂັ້ມແຂງຕິດພັນກັບການປັບປຸງກຸ່ມເກັບຊື້ ແລະ ກຸ່ມສະໜອງປັດໄຈຮັບໃຊ້ການຜະລິດ; ປັບປຸງຄັງແຮເຂົ້າຂອງລັດເພື່ອຮັບປະກັນ ການສະໜອງສະບຽງອາຫານຢ່າງໜັກແໜ້ນ ແລະ ເພື່ອເປັນເຄື່ອງມືທີ່ມີປະສິດທິພາບໃນການແຊກແຊງຕະຫຼາດ; ຄຸ້ມຄອງລາຄານ້ຳມັນເຊື້ອໄຟຕາມກົນໄກຂອງລັດຖະບານຢ່າງຄ່ອງຕົວ, ຮັບປະກັນການສະໜອງແກ່ສັງຄົມ ເປັນປົກກະຕິ (ບໍ່ໃຫ້ເກີດສະພາບຂາດແຄນ) ແລະ ບໍ່ໃຫ້ມີການເກື້ອກູນຈາກລັດຖະບານ; ກຳຈັດການສວຍໂອກາດລັກໂລບ ແລະ ກັກຕູນເພື່ອເກັງກຳໄລ.

16.6 ຈັດຕັ້ງ ແລະ ປັບປຸງກຸ່ມຫັດຖະກຳໃຫ້ເຂັ້ມແຂງ, ເອົາໃຈໃສ່ຍົກລະດັບຄຸນນະພາບຜະລິດຕະພັນ ແລະ ຊອກຫາຕະຫລາດຫັດຖະກຳຢູ່ຕ່າງປະເທດ, ສົມທົບກັບຂະແໜງທ່ອງທ່ຽວເພື່ອຜະລິດເຄື່ອງທີ່ລະນຶກໃຫ້ຖືກກັບຄວາມຕ້ອງການຂອງນັກທ່ອງທ່ຽວ.

16.7 ຊີ້ນຳ ແລະ ໃຫ້ການສະໜັບສະໜູນດ້ານການຕະຫລາດ ແລະ ສົ່ງເສີມການຜະລິດແບບຜູກພັນ 2 ສົ້ນ ໂດຍໃຫ້ອົງການທີ່ກ່ຽວຂ້ອງຮັບຮູ້ ແລະ ຊ່ວຍໃນການຄຸ້ມຄອງການປະຕິບັດຂໍ້ຜູກພັນຂອງແຕ່ລະຝ່າຍ.

16.8 ຈັດຕັ້ງເທດສະການ ແລະ ງານຕະຫລາດນັດເປັນປະຈຳ ເພື່ອໂຄສະນາ, ຈຳໜ່າຍຜະລິດຕະພັນສິນຄ້າອຸດສາຫະກຳ-ຫັດຖະກຳ, ແລກປ່ຽນບົດຮຽນ ແລະ ຂໍ້ມູນຂ່າວສານຕ່າງໆ.

16.9 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານອຸດສາຫະກຳ ແລະ ການຄ້າ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 17: ມອບໃຫ້ ກະຊວງພະລັງງານ ແລະ ບໍ່ແຮ່ ປະຕິບັດດັ່ງນີ້:**

17.1 ຊຸກຍູ້ບັນດາໂຄງການກໍ່ສ້າງເຂື່ອນ ແລະ ໂຮງງານຜະລິດໄຟຟ້າໃຫ້ມີຜົນຄືບໜ້າ ແລະ ໃຫ້ສຳເລັດຕາມແຜນການ. ຕິດຕາມການປ່ຽນແປງຂອງລາຄາແຮ່ທາດໃນຕະຫລາດໂລກຢ່າງຈິດຈໍ່ ເພື່ອເພີ່ມປະລິມານການຂຸດຄົ້ນ, ການປຸງແຕ່ງ ແລະ ເພີ່ມປະລິມານການສົ່ງອອກຢ່າງເໝາະສົມ, ພິຈາລະນາຂໍ້ສະເໜີຕ່າງໆຂອງຜູ້ປະກອບການຢ່າງເໝາະສົມ ເພື່ອໃຫ້ໂຄງການດຳເນີນໄປໄດ້ປົກກະຕິ ແລະ ເປັນຜົນດີຕໍ່ທຸກຝ່າຍບົນພື້ນຖານການຍຶດໝັ້ນໃນສັນຍາ ແລະ ກົດໝາຍ. ສືບຕໍ່ປັບປຸງບັນດາລະບຽບການຕ່າງໆທີ່ຍັງບໍ່ທັນສອດຄ່ອງ, ມີຊ່ອງຫວ່າງ ແລະ ຊ້ຳຊ້ອນກັນ; ສ້າງລະບຽບການ ອັນຈຳເປັນ ເພື່ອອຳນວຍ ຄວບຄຸມ ສົ່ງເສີມການຜະລິດ ແລະ ການລົງທຶນ.

17.2 ດຳເນີນການກວດກາບັນດາກິດຈະການສຳຫລວດ ແລະ ຂຸດຄົ້ນແຮ່ທາດ, ມີມາດຕະການແກ້ໄຂທີ່ແທດເໝາະ ແລະ ຄ່ອງຕົວ ບົນພື້ນຖານສັນຍາ ແລະ ລະບຽບກົດໝາຍ, ຮັບປະກັນຜົນປະໂຫຍດອັນຊອບທຳຂອງທຸກຝ່າຍ.

17.3 ດຳເນີນການຄົ້ນຄວ້າໂຄງການຜະລິດ ແລະ ນຳໃຊ້ພະລັງງານທົດແທນນ້ຳມັນ, ປະຕິບັດນະໂຍບາຍປະຢັດໄຟຟ້າ ແລະ ຫຼຸດຜ່ອນໄຟຟ້າຕົກເຮ່ຍ; ກວດກາ ແລະ ສ້ອມແປງສະຖານີໄຟຟ້າຮັບໃຊ້ຊົນລະປະທານຢູ່ທຸກໆບ່ອນ. ປະສານສົມທົບກັບກະຊວງກະສິກຳ-ປ່າໄມ້ ປະຕິບັດນະໂຍບາຍອຸດໜູນລາຄາພະລັງງານໄຟຟ້າສຳລັບຊົນລະປະທານ ເພື່ອຮັບໃຊ້ການຜະລິດກະສິກຳ ເປັນຕົ້ນແມ່ນການຜະລິດເຂົ້າ ແລະ ສະບຽງອາຫານ.

17.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານພະລັງງານ ແລະ ບໍ່ແຮ່ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 18: ມອບໃຫ້ ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ປະຕິບັດດັ່ງນີ້:**

18.1 ຕິດຕາມ, ຊຸກຍູ້, ກວດກາການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ແລະ ສະຫລຸບສັງລວມບັນຫາຕ່າງໆ ເພື່ອລາຍງານຕໍ່ລັດຖະບານ, ເພີ່ມທະວີບົດບາດປະສານງານ ລະຫວ່າງ ບັນດາຂະແໜງການ-ອົງການຂັ້ນສູນກາງກັບທ້ອງຖິ່ນ ໃນການຈັດຕັ້ງປະຕິບັດບັນດາແຜນງານ, ໂຄງການ ແລະ ກິດຈະການຕ່າງໆທີ່ມີເປົ້າໝາຍແກ້ໄຂຄວາມທຸກຍາກ.

18.2 ຄົ້ນຄວ້າປັບປຸງກົນໄກການປະສານງານ ລະຫວ່າງ ຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງສູນກາງ ກັບທ້ອງຖິ່ນ, ສ້າງລະບຽບການ ແລະ ກົນໄກຄຸ້ມຄອງນຳໃຊ້ທຶນຈາກແຫຼ່ງຕ່າງໆ ເຂົ້າໃນໂຄງການພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ; ພ້ອມດຽວກັນນັ້ນ, ກໍ່ຊຸກຍູ້ຂະແໜງການ ແລະ ທ້ອງຖິ່ນປະຕິບັດລະບອບການລາຍງານວຽກງານດັ່ງກ່າວຢ່າງປົກກະຕິ ແລະ ການສຳຫລວດເພື່ອປັບປຸງຖານຂໍ້ມູນຄວາມທຸກຍາກ.

18.3 ປະສານກັບຂະແໜງການ ແລະ ທ້ອງຖິ່ນ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໂຄງການຫຼຸດຜ່ອນຄວາມທຸກຍາກຕ່າງໆ ທີ່ລັດຖະບານຈັດສັນງົບປະມານສຳລັບສົກປີ 2010-2011 ເພື່ອສັງລວມບັນຫາທັງດ້ານດີ ແລະ ດ້ານອ່ອນ, ບົດຮຽນຖອດຖອນໄດ້ລາຍງານ ຕໍ່ລັດຖະບານ. ສຳລັບໂຄງການຫຼຸດຜ່ອນຄວາມທຸກຍາກຢູ່ກຸ່ມບ້ານ ມອບໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກແຫ່ງຊາດ ເປັນຜູ້ຊີ້ນຳ, ຊຸກຍູ້ ແລະ ຕິດຕາມກວດກາ; ໂຄງການທີ່ມອບໃນຂະແໜງໃດແມ່ນມອບໃຫ້ຂະແໜງການນັ້ນຢູ່ທ້ອງຖິ່ນ ເປັນຜູ້ຄຸ້ມຄອງ, ຈັດຕັ້ງປະຕິບັດ ແລະ ສະຫລຸບລາຍງານຕາມລະບຽບການ. ທ້ອງຖິ່ນບໍ່ສາມາດຍ້າຍ ຫລື ອວ່າຍທຶນດັ່ງກ່າວໄປປະຕິບັດເປົ້າໝາຍອື່ນ.

18.4 ເພີ່ມແຫລ່ງທຶນສິນເຊື່ອເພື່ອແກ້ໄຂຄວາມທຸກຍາກຂອງທະນາຄານນະໂຍບາຍ ໂດຍໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສົມທົບກັບບັນດາກະຊວງ-ອົງການກ່ຽວຂ້ອງ ແລະ ທະນາຄານ ຄົ້ນຄວ້າສ້າງໂຄງການເພື່ອສະເໜີຂໍກູ້ຢືມນຳທະນາຄານໂລກ ແລະສະຖາບັນອື່ນໆຕື່ມ. ຊຸກຍູ້ທະນາຄານນະໂຍບາຍ ຢູ່ແຕ່ລະຂັ້ນໃຫ້ເຄື່ອນໄຫວປ່ອຍເງິນກູ້ ໃຫ້ກຸ່ມເປົ້າໝາຍ, ແຕ່ຕ້ອງອີງໃສ່ໂຄງການຜະລິດສິນຄ້າ ແລະ ລຶບລ້າງຄວາມທຸກຍາກຂອງທ້ອງຖິ່ນ ເພື່ອປ່ອຍເງິນກູ້ຢ່າງມີຈຸດສຸມ ແລະ ມີປະສິດທິຜົນ.

18.5 ປະສານສົມທົບກັບກະຊວງແຜນການ ແລະ ການລົງທຶນ ແລະ ພາກສ່ວນທີ່ກ່ຽວຂ້ອງດຳເນີນການເຜີຍແຜ່ດຳລັດເລກທີ 285/ນຍ, ລົງວັນທີ 13/10/2009 ວ່າດ້ວຍມາດຕະຖານຄວາມທຸກຍາກ ແລະມາດຕະຖານພັດທະນາ ໄລຍະ 2010-2015. ດຳເນີນການສຳຫລວດຄວາມທຸກຍາກເພື່ອປັບປຸງຖານຂໍ້ມູນຄວາມທຸກຍາກທົ່ວປະເທດ.

18.6 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກເພື່ອບັນລຸຕາມຄາດ ໝາຍທີ່ກຳນົດໃນແຜນການ ສົກປີ 2010-2011.

**ມາດຕາທີ 19: ມອບໃຫ້ ກະຊວງໂຍທາທິການ ແລະ ຂົນສົ່ງ ປະຕິບັດດັ່ງນີ້:**

19.1 ສືບຕໍ່ຕິດຕາມ ບັນດາໂຄງການກໍ່ສ້າງຂົວ-ທາງ ໃຫ້ມີຜົນຄືບໜ້າ ແລະ ສຳເລັດຕາມສັນຍາ, ໃນນີ້ໃຫ້ເອົາໃຈໃສ່ບັນດາໂຄງການທີ່ເປັນຍຸດທະສາດທາງຜ່ານເໜືອ-ໃຕ້ ແລະ ຕາເວັນອອກ-ຕາເວັນຕົກ, ໂຄງການກໍ່ສ້າງເສັ້ນທາງຮອງຮັບການສະເຫລີມສະຫລອງນະຄອນຫລວງວຽງຈັນ ຄົບຮອບ 450 ປີ. ກຽມຄວາມພ້ອມເພື່ອຮັບມືກັບອຸທົກກະໄພທີ່ອາດເກີດຂຶ້ນໃນສົກປີນີ້ ໂດຍສະເພາະ ໃນເຂດທີ່ມີຄວາມສ່ຽງ.

19.2 ໃຫ້ເຈລະຈາກັບປະເທດເພື່ອນບ້ານ ກ່ຽວກັບການຂົນສົ່ງຜ່ານແດນ ແນໃສ່ເຮັດໃຫ້ບໍລິສັດພາຍໃນສາມາດຂົນສົ່ງສິນຄ້າຜ່ານປະເທດເຮົາໄດ້ຫລາຍຂຶ້ນ ໂດຍມີການຄ່ຽນຖ່າຍທີ່ສະດວກເປັນລະບົບ, ພ້ອມນັ້ນ ກໍຊຸກຍູ້ໃຫ້ສະມາຄົມຂົນສົ່ງປັບປຸງຕົວເອງ ແລະ ຍົກລະດັບຄວາມສາມາດໃຫ້ທຽບທັນປະເທດອື່ນ. ເປັນເຈົ້າການສະເໜີເຈລະຈາເຮັດສັນຍາເປີດສາຍການບິນກັບປະເທດຕ່າງໆໃຫ້ຫລາຍຂຶ້ນ.

19.3 ສືບຕໍ່ຄົ້ນຄວ້າດຳລັດກ່ຽວກັບກຳນົດໝາຍມາດຖານລາຄາຫົວໜ່ວຍການກໍ່ສ້າງ ແລະ ສ້ອມແປງຕ່າງໆ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນ, ການກຳນົດລາຄາກາງເພື່ອການປະມູນໂຄງການ, ການຄຸ້ມຄອງ, ກວດກາ ແລະ ປະເມີນຜົນໂຄງການ ແລະ ກິດຈະການລົງທຶນຕ່າງໆ.

19.4 ສົມທົບກັບ ທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ, ອຳນາດການປົກຄອງນະຄອນຫຼວງ ແລະ ແຂວງ ປັບປຸງວຽກງານໂຍທາທິການ ແລະ ຂົນສົ່ງ ໃນບັນດາຕົວເມືອງ ໃຫ້ສອດຄ່ອງກັບ

ສະພາບຄວາມເປັນຈິງໃນການຄຸ້ມຄອງຕົວເມືອງ. ສືບຕໍ່ພັດທະນາ ແລະ ຄຸ້ມຄອງບັນດາຕົວເມືອງໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະອາດງາມຕາ ແລະ ມີສິ່ງແວດລ້ອມທີ່ດີ.

19.5 ສົມທົບກັບທະບວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ແລະ ແຂວງກ່ຽວຂ້ອງ ຄົ້ນຄວ້າ, ປະເມີນຜົນການກໍ່ສ້າງເທດສະບານຂອງແຂວງ, ເມືອງຈຳນວນໜຶ່ງທີ່ໄດ້ກຳນົດໃນແຜນການປີ.

19.6 ໃຫ້ສືບຕໍ່ຄົ້ນຄວ້າຮ່າງກຳນົດໝາຍລາຄາຫົວໜ່ວຍການກໍ່ສ້າງພື້ນຖານໂຄງລ່າງ ໃຫ້ສຳເລັດສົມບູນເພື່ອປະກາດໃຊ້ໂດຍໄວ.

19.7 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານໂຍທາທິການ ແລະ ຂົນສົ່ງ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 20: ມອບໃຫ້ ອົງການໄປສະນີ ແລະ ໂທລະຄົມແຫ່ງຊາດ ປະຕິບັດດັ່ງນີ້:**

20.1 ສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວຽກງານໄປສະນີ, ໂທລະຄົມ ແລະ ອິນເຕີເນັດໃຫ້ແທດເໝາະກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ.

20.2 ຂະຫຍາຍຫ້ອງການໄປສະນີໃຫ້ໄດ້ຕື່ມ 4 ແຫ່ງ, ໂດຍໃຫ້ສຸມໃສ່ຂະຫຍາຍໄປສູ່ເຂດບ້ານຈຸດສຸມທີ່ມີເງື່ອນໄຂ.

20.3 ລວມສູນການສື່ສານແຫ່ງຊາດ ເຂົ້າອອກຜ່ານປະຕູດຽວ ເພື່ອໃຫ້ສາມາດຄຸ້ມຄອງຄວາມປອດໄພດ້ານຂໍ້ມູນຂ່າວສານ.

20.4 ສ້າງຕັ້ງກອງຄຸ້ມຄອງຄື້ນຄວາມຖີ່ວິທະຍຸ ແລະ ອຸປະກອນທັນສະໄໝ ໃຫ້ສາມາດຄຸ້ມຄອງ, ກວດກາ, ດັດສົມ ແລະ ວັດແທກຄື້ນຄວາມຖີ່ວິທະຍຸ ໃນຂອບເຂດທົ່ວປະເທດ.

20.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານໄປສະນີ ແລະ ໂທລະຄົມ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011

**ມາດຕາທີ 21: ມອບໃຫ້ ອົງການຄຸ້ມຄອງທີ່ດິນແຫ່ງຊາດ ປະຕິບັດດັ່ງນີ້:**

21.1 ສືບຕໍ່ສຳຫຼວດຈັດສັນທີ່ດິນ, ຈັດແບ່ງເຂດ, ແບ່ງປະເພດ; ສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໃຫ້ສາມາດໃຊ້ໄດ້ໃນໄລຍະຂອງແຜນການ 5 ປີ (2011-2015).

21.2 ຄຸ້ມຄອງ, ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍປ່າໄມ້, ກົດໝາຍວ່າ*ດ້ວຍທີ່ດິນ ແລະ ນິຕິກຳອື່ນທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ເພີ່ມທະວີເອົາໃຈໃສ່ຕໍ່ກັບການຫັນປ່ຽນປະເພດ*ດິນ, ການອະນຸມັດໃຫ້ເຊົ່າ ແລະ ສຳປະທານທີ່ດິນ. ການໃຫ້ເຊົ່າ ແລະ ສຳປະທານທີ່ດິນຂອງລັດ ຕ້ອງປະຕິບັດຕາມດຳລັດ 135/ນຍ ລົງວັນທີ 25 ພຶດສະພາ 2009 ວ່າດ້ວຍການເອົາທີ່ດິນລັດໃຫ້ເຊົ່າ ຫລືສຳປະທານ ຢ່າງເຂັ້ມງວດ.

21.3 ຈັດຕັ້ງປະຕິບັດການອອກໃບຕາດິນ, ການມອບດິນ-ມອບປ່າໃຫ້ປະຊາຊົນ ຢ່າງເປັນລະບົບ ໂດຍຈັດສັນເນື້ອທີ່ການຜະລິດແບບຄົງທີ່ ແລະ ທີ່ຢູ່ອາໄສໃຫ້ສອດຄ່ອງກັບມາດຕະການປົກປັກຮັກສາສະພາບແວດລ້ອມທີ່ຍືນນານ; ພ້ອມກັນນັ້ນ, ກໍ່ກວດກາຄືນການອອກໃບຕາດິນທີ່ຊ້ຳຊ້ອນກັນໃນໄລຍະຜ່ານມາ ແລະ ມີມາດຕະການແກ້ໄຂຢ່າງສອດຄ່ອງ.

21.4 ປະສານສົມທົບກັບອຳນາດການປົກຄອງທ້ອງຖິ່ນ (ແຂວງ, ເມືອງ, ບ້ານ) ເພື່ອຈັດເກັບຄ່າທຳນຽມທີ່ດິນ ແລະ ຄ່າວິຊາການ ໂດຍໃຫ້ມີກົນໄກທີ່ຈະແຈ້ງ ແລະ ສ້າງຂໍ້ມູນສະຖິຕິເພື່ອເປັນພື້ນຖານໃຫ້ແກ່ການຂະຫຍາຍລາຍຮັບຈາກທີ່ດິນ.

21.5 ສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ກວດກາຄືນການຊົດເຊີຍສິດນຳໃຊ້ທີ່ດິນໃນບ່ອນທີ່ຍັງມີບັນຫາ.

21.6 ຮີບຮ້ອນຄົ້ນຄວ້າສ້າງນິຕິກຳທີ່ຈຳເປັນ ພ້ອມທັງວາງນະໂຍບາຍ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ຊັດເຈນ ແລະ ຮັດກຸມ, ມີມາດຕະການສະກັດກັ້ນການຈັບຈອງທີ່ດິນ, ການມອບໂອນສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ພ້ອມກັນນັ້ນ, ກໍດຳເນີນການເຜີຍແຜ່ກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງໃຫ້ກວ້າງຂວາງ ແລະ ທົ່ວເຖິງ.

21.7 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການຄຸ້ມຄອງ ແລະ ນຳໃຊ້ທີ່ດິນເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2010-2011.

**ມາດຕາທີ 22: ມອບໃຫ້ ອົງການທ່ອງທ່ຽວແຫ່ງຊາດ ປະຕິບັດດັ່ງນີ້:**

22.1 ເພີ່ມທະວີການໂຄສະນາຂະຫຍາຍຕະຫລາດທ່ອງທ່ຽວຜ່ານສື່ຕ່າງໆທັງພາຍໃນ ແລະ ຕ່າງປະເທດ, ຈັດເທດສະການ, ງານຕະຫລາດນັດ ແລະ ຂະບວນຄາລາວານທ່ອງທ່ຽວ; ຂະຫຍາຍຕະຫລາດທ່ອງທ່ຽວພາຍໃນປະເທດ (ລາວທ່ອງທ່ຽວລາວ), ໃນອານຸພາກພື້ນ ແລະ ໃນໂລກ; ຈັບກາລະໂອກາດການສະເຫຼີມສະຫຼອງນະຄອນຫຼວງວຽງຈັນ ຄົບຮອບ 450 ປີ ເພື່ອໂຄສະນາເຜີຍແຜ່ໃຫ້ນາໆ ປະເທດຮູ້ຈັກປະເທດພວກເຮົາ ແລະ ສ້າງຄວາມສົນໃຈໃຫ້ແກ່ຊາວຕ່າງປະເທດເຂົ້າມາທ່ອງທ່ຽວຫຼາຍຂຶ້ນເຊິ່ງຈະມີຜົນໄດ້ຕໍ່ເສດຖະກິດ ໂດຍລວມຂອງປະເທດ.

22.2 ກະກຽມຄວາມພ້ອມທຸກດ້ານໃນການເປີດປີທ່ອງທ່ຽວລາວ ໃນປີ 2012 ໃຫ້ມີບັນຍາກາດຟົດຟື້ນ ໂດຍຖືເອົາທ່າແຮງທາງດ້ານປະເທດລາວເປັນເຂດພື້ນທີ່ສີຂຽວ ແລະ ອາກາດສົດຊື່ນ, ມໍລະດົກທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ເປັນຈຸດດຶງດູດຄວາມສົນໃຈຂອງນັກທ່ອງທ່ຽວ.

22.3 ສົມທົບກັບກະຊວງການຕ່າງປະເທດ ຊີ້ນຳບັນດາສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດ ເພື່ອຊ່ວຍເຫຼືອໃນການໂຄສະນາດຶງດູດນັກທ່ອງທ່ຽວ; ພ້ອມກັນນັ້ນ, ສົມທົບກັບກະຊວງການຕ່າງປະເທດ, ກະຊວງປ້ອງກັນຄວາມສະຫງົບ ຄົ້ນຄວ້າຫລຸດຄ່າທຳນຽມວີຊາ ຕາມຄວາມເໝາະສົມ, ອຳນວຍຄວາມສະດວກອອກວີຊາກັບທີ່ຢູ່ດ່ານສາກົນຕ່າງໆ ລວມທັງ ການເດີນທາງເຂົ້າ-ອອກປະເທດ, ຈັດຕັ້ງການຕໍ່ວີຊາໃຫ້ນັກທ່ອງທ່ຽວຢູ່ແຂວງ, ຂະຫຍາຍຂອບເຂດການນຳໃຊ້ບັດຜ່ານແດນສຳລັບນັກທ່ອງທ່ຽວທີ່ເຂົ້າມາເປັນກຸ່ມ ແລະ ຄົ້ນຄວ້າການຍົກເວັ້ນວີຊາໃຫ້ແກ່ພົນລະເມືອງປະເທດເພື່ອນມິດຈຳນວນໜຶ່ງຕື່ມ.

22.4 ສືບຕໍ່ສຳຫຼວດ, ຈັດສັນ ແລະ ພັດທະນາແຫຼ່ງທ່ອງທ່ຽວທາງທຳມະຊາດ, ປະຫວັດສາດ ແລະ ວັດທະນະທຳ ແລະ ກໍ່ສ້າງໂຄງລ່າງພື້ນຖານທ່ອງທ່ຽວໃຫ້ຫລາຍຂຶ້ນ ເປັນຕົ້ນ: ສ້າງເມືອງທ່ອງທ່ຽວປະຫວັດສາດ ວຽງໄຊ, ພູກູດຈອມເຫລັກ ແຂວງຊຽງຂວາງ, ແຫລ່ງທ່ອງທ່ຽວມໍລະດົກຂອງຊາດ, ສ້າງເມືອງທ່ອງທ່ຽວຄອນພະເພັງ, ພູເຂົາຄວາຍ, ດົງນາຕາດ (ແຂວງສະຫວັນນະເຂດ), ນາກາຍ, ຖ້ຳກ້ອລອດ (ແຂວງຄຳມ່ວນ), ຕາດຊອນ (ນະຄອນຫລວງວຽງຈັນ) ແລະ ຈຸດອື່ນໆ ໂດຍລັດ ແລະ ປະຊາຊົນ, ນັກທຸລະກິດຮ່ວມກັນສ້າງສິ່ງອຳນວຍໃຫ້ການເຂົ້າເຖິງແຫຼ່ງທ່ອງທ່ຽວຕ່າງໆ. ບຸກລະຄົນອຳນາດການປົກຄອງທຸກຂັ້ນ, ປະຊາຊົນ ແລະ ທຸກພາກສ່ວນ ເອົາໃຈໃສ່ວຽກງານການທ່ອງທ່ຽວເຮັດໃຫ້ຂະແໜງນີ້ປະກອບສ່ວນຢ່າງຕັ້ງໜ້າໃຫ້ແກ່ການເຕີບໂຕຂອງເສດຖະກິດ, ສ້າງລາຍໄດ້ ແລະ ລຶບລ້າງຄວາມທຸກຍາກຂອງປະຊາຊົນຢູ່ທ້ອງຖິ່ນ.

22.5 ສົມທົບກັບຂະແໜງການຕ່າງໆ, ສະມາຄົມທຸລະກິດທ່ອງທ່ຽວ, ສະມາຄົມໂຮງແຮມ-ຮ້ານອາຫານ, ສະມາຄົມຂົນສົ່ງ ເພື່ອປັບປຸງມາດຕະຖານການບໍລິການໃຫ້ຂຶ້ນສູ່ລະດັບສາກົນ ເຮັດໃຫ້ຄ່າບໍລິການການທ່ອງທ່ຽວສາມາດແກ່ງແຍ້ງໄດ້ ກັບຄ່າບໍລິການຂອງບັນດາປະເທດຢູ່ໃນອານຸພາກພື້ນ ແລະ ພາກພື້ນ.

22.6 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານ ທ່ອງທ່ຽວເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 23: ມອບໃຫ້ ຄະນະປັບປຸງທຸລະກິດ ປະຕິບັດດັ່ງນີ້:**

23.1 ປະສານສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປັບປຸງລະບົບການຈັດຕັ້ງ, ການຄຸ້ມຄອງການເງິນ, ການບໍລິຫານທຸລະກິດ ແລະ ການຕະຫລາດຂອງລັດວິສາຫະກິດ, ວິສະຫະກິດປະສົມ ແລະ ທຸລະກິດຮ່ວມມືກັບປະຊາຊົນ ໃຫ້ເຂັ້ມແຂງສາມາດແກ່ງແຍ້ງຕາມກົນໄກຕະຫລາດ.

23.2 ປະສານສົມທົບກັບບັນດາກະຊວງ-ອົງການ, ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງທຸກຂັ້ນ ສຶກສາອົບຮົມປຸກລະດົມ ພາກສ່ວນທຸລະກິດ ປະຕິບັດລະບຽບກົດໝາຍທຸລະກິດ, ກົດໝາຍບັນຊີ, ພາສີອາກອນ ແລະ ອື່ນໆ ຢ່າງເຂັ້ມງວດ.

23.3 ສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ, ທະນາຄານ ແລະ ອົງການທີ່ກ່ຽວຂ້ອງຄົ້ນຄວ້າ ວິທີແກ້ໄຂໜີ້ສິນທີ່ຄຸມເຄືອ ລະຫວ່າງລັດບໍລິຫານ ແລະ ທຸລະກິດ, ລະຫວ່າງທຸລະກິດ ກັບທຸລະກິດ ທີ່ແກ່ຍາວຫລາຍປີ ໃຫ້ສຳເລັດເທື່ອລະກ້າວ, ປັບປຸງຖານະການເງິນຂອງລັດວິສາຫະກິດ ໃຫ້ດີຂຶ້ນ ສາມາດກວດສອບໄດ້.

23.4 ປະສານສົມທົບກັບກະຊວງການເງິນ ເປັນເຈົ້າການທັບຊັບສິນທີ່ລັດລົງທຶນໃຫ້ບໍລິສັດຂອງລັດ ສາມາດເປັນເຈົ້າຂອງກຳມະສິດຢ່າງຂາດຕົວຕາມກົດໝາຍທຸລະກິດ. ປັບປຸງບາງລັດວິສະຫະກິດ ທີ່ມີທ່າແຮງໃຫ້ມີຄວາມເຂັ້ມແຂງ ເພື່ອກະກຽມເອົາເຂົ້າຕະຫລາດຫລັກຊັບ.

23.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການປັບປຸງທຸລະກິດ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2010-2011.

**ມາດຕາທີ 24: ມອບໃຫ້ ກະຊວງສຶກສາທິການ ປະຕິບັດດັ່ງນີ້:**

24.1 ປະຕິບັດກົດໝາຍການສຶກສາ ຂັ້ນປະຖົມແບບບັງຄັບ, ເອົາໃຈໃສ່ການສຶກສາຂັ້ນອະນຸບານ, ການສຶກສານອກໂຮງຮຽນ ແລະ ແຜນປະຕິບັດງານແຫ່ງຊາດການສຶກສາເພື່ອທຸກຄົນ; ເອົາໃຈໃສ່ສັບຊ້ອນ ແລະ ບັນຈຸຄູໃຫ້ທ່ວງທັນກັບເວລາ ພ້ອມທັງໃຫ້ແທດເໝາະກັບຄວາມຮຽກຮ້ອງຕ້ອງການຕົວຈິງ ຂອງທ້ອງຖິ່ນ. ປະຕິບັດນະໂຍບາຍຍົກຖານະບົດບາດຂອງຄູອາຈານໃຫ້ມີລັກສະນະເດັ່ນຊັດຂຶ້ນກ່ວາເກົ່າໃນສັງຄົມ. ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ ໄລຍະທີ 1 ແລະ ວາງແຜນການຈັດຕັ້ງປະຕິບັດ ໄລຍະທີ 2 ໂດຍອີງໃສ່ ບົດຮຽນທີ່ຖອດຖອນໄດ້ຈາກໄລຍະທີ 1. ພັດທະນາຫລັກສູດ ແລະ ສື່ການຮຽນ-ການສອນ, ການສຶກສາຂັ້ນສູງໃຫ້ມີຄຸນນະພາບ ແລະ ຄວາມສອດຄ່ອງກັບການພັດທະນາຂົງເຂດ ແລະ ເສດຖະກິດ-ສັງຄົມແຫ່ງຊາດ ໃນແຕ່ລະໄລຍະ.

24.2 ສືບຕໍ່ກໍ່ສ້າງ ແລະ ຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອສ້າງເງື່ອນໄຂເອື້ອອຳນວຍ ໃຫ້ແກ່ວຽກງານການສຶກສາ. ປຸກລະດົມພາກສ່ວນທຸລະກິດເອກະຊົນ ໃຫ້ເຂົ້າຮ່ວມຢ່າງຕັ້ງໜ້າໃນການພັດ

ທະນາວຽກງານການສຶກສາໂດຍສະເພາະວຽກງານອາຊີວະສຶກສາ ແລະ ການສຶກສາຊັ້ນສູງ ໃຫ້ມີບາດກ້າວກະໂດດຂັ້ນອັນໃໝ່ ສາມາດຮັບປະກັນໄດ້ຄຸນນະພາບ ໃນລະດັບອັນແນ່ນອນ.

24.3 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານສຶກສາທິການ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 25: ມອບໃຫ້ ກະຊວງສາທາລະນະສຸກ ປະຕິບັດດັ່ງນີ້:**

25.1 ປຸກລະດົມທົ່ວປວງຊົນໃຫ້ເຂົ້າຮ່ວມວຽກງານສາທາລະນະສຸກ ແລະ ຮັກສາສຸຂະພາບ, ທັນເອົາວຽກງານສາທາລະນະສຸກ ລົງສູ່ຮາກຖານຫຼາຍຂຶ້ນ ໂດຍເລີ່ມຈາກການສ້າງບ້ານແບບຢ່າງສາທາລະນະສຸກ. ສ້າງໃຫ້ໄດ້ພະນັກງານທີ່ມີຈັນຍາທຳ, ທ່າທີຮັບໃຊ້ ແລະ ມີຄວາມຊຳນານງານ ທີ່ຈະລົງໄປປະຈຳຢູ່ໂຮງໝໍພາກ, ແຂວງ, ເມືອງ, ສຸກສາລາ ແລະ ກຸ່ມບ້ານຕ່າງໆ.

25.2 ສືບຕໍ່ປະຕິບັດການປິ່ນປົວ ປະເພດເສຍຄ່າ ແລະ ບໍ່ເສຍຄ່າໃຫ້ສອດຄ່ອງກັບສະພາບຕົວຈິງ; ຮັບປະກັນຕິດຕາມຄຸ້ມຄອງ ແລະ ຊຸກຍູ້ສົ່ງເສີມພາກເອກະຊົນໃຫ້ມີບົດບາດປະກອບສ່ວນໃນວຽກງານປິ່ນປົວ ແລະ ຮັກສາສຸຂະພາບຂອງປະຊາຊົນ.

25.3 ແຕ່ລະໂຮງໝໍຕ້ອງເຊີດຊູຄວາມຮັບຜິດຊອບ ແລະ ເອົາໃຈໃສ່ໃຫ້ການຊ່ວຍເຫລືອປິ່ນປົວຜູ້ທຸກຍາກ. ໃຫ້ເລີ່ມດຳເນີນແຜນປັບປຸງກົນໄກບໍລິຫານ ໂຮງໝໍມະໂຫສົດ ແລະ ໂຮງໝໍຈຳນວນໜຶ່ງທີ່ມີເງື່ອນໄຂທັນໄປສູ່ກົນໄກໃໝ່; ສືບຕໍ່ຄົ້ນຄວ້າອອກດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍນະໂຍບາຍສົ່ງເສີມການລົງທຶນໃນຂະແໜງສາທາລະນະສຸກ. ກະກຽມພາຫະນະ, ອຸປະກອນການແພດທີ່ຈຳເປັນ, ຕິດຕາມ ແລະ ເຝົ້າລະວັງການລະບາດຂອງພະຍາດຮ້າຍແຮງຕ່າງໆ.

25.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານສາທາລະນະສຸກ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 26: ມອບໃຫ້ ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ປະຕິບັດດັ່ງນີ້:**

26.1 ຄົ້ນຄວ້າປັບປຸງເນື້ອໃນສື່ໂຄສະນາ ໃຫ້ດີຂຶ້ນດ້ວຍຫຼາຍຮູບຫຼາຍສີ, ວ່ອງໄວທັນການ, ເປັນສື່ໃນການໃຫ້ຄວາມຮູ້ຄວາມເຂົ້າໃຈ ທັງມີລັກສະນະສຶກສາອົບຮົມໄປຕາມແນວທາງນະໂຍບາຍຂອງພັກ, ໃຫ້ຄວາມຮູ້ ແລະ ສາລະຫລາຍດ້ານ ເຊັ່ນ: ດ້ານລະບຽບກົດໝາຍ, ວິທະຍາສາດ ແລະ ວິຊາການຕ່າງໆ; ເອົາໃຈໃສ່ໂຄສະນາສົ່ງເສີມການຜະລິດສິນຄ້າໃຫ້ເປັນຂະບວນກວ້າງຂວາງ, ໂຄສະນາໃຫ້ນັກທ່ອງທ່ຽວເຂົ້າມາທ່ອງທ່ຽວໃນປະເທດ.

26.2 ໂຄສະນາການສະເຫລີມສະຫລອງງານ ແລະ ວັນສຳຄັນຂອງຊາດ; ເຜີຍແຜ່ແນະນຳວັດທະນາທຳຮີດຄອງປະເພນີ, ຄວາມຮັ່ງມີຂອງທຳມະຊາດ, ແຫລ່ງທ່ອງທ່ຽວ ເພື່ອດຶງດູດນັກທ່ອງທ່ຽວເຂົ້າປະເທດ; ປູກສ້າງແນວຄິດ ແລະ ຄວາມເຄີຍຊິນປະຢັດໃຫ້ເກີດຂຶ້ນຢ່າງແຜ່ຫຼາຍໃນສັງຄົມ.

26.3 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານຖະແຫລ່ງຂ່າວ ແລະ ວັດທະນະທຳ ເພື່ອບັນລຸຕາມຄາດ ໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 27: ມອບໃຫ້ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ປະຕິບັດດັ່ງນີ້:**

27.1 ເອົາໃຈໃສ່ຈັດຕັ້ງເຜີຍແຜ່ບັນດາກົດໝາຍ ແລະ ນິຕິກຳຕ່າງໆທີ່ກ່ຽວຂ້ອງກັບຂະແໜງແຮງງານໃຫ້ສັງຄົມຮັບຮູ້ຢ່າງກວ້າງຂວາງ; ຄົ້ນຄວ້າ ແລະ ປະກາດໃຊ້ລະບຽບການຄຸ້ມຄອງແຮງງານຕ່າງດ້າວ

ທີ່ເຮັດວຽກໃນ ສປປ ລາວ ພ້ອມທັງປະຕິບັດໃຫ້ເຂັ້ມງວດ. ຊຸກຍູ້ໃຫ້ຜູ້ລົງທຶນປະຕິບັດລະບຽບການໃຊ້ແຮງງານລາວ, ສົມທົບກັບສະຫະພັນກຳມະບານລາວລົງເຜີຍແຜ່ ແລະ ສຶກສາອົບຮົມກຳມະກອນຢູ່ໃນບັນດາໂຮງງານໃຫ້ເຂົາເຈົ້າເຂົ້າໃຈສະພາບຜົນກະທົບຂອງວິກິດການ.

27.2 ສົມທົບກັບກະຊວງການຕ່າງປະເທດຊີ້ນຳສະຖານທູດ ແລະ ສະຖານກົງສູນລາວຢູ່ຕ່າງປະເທດເພີ່ມຄວາມເອົາໃຈໃສ່ຕໍ່ການຕິດຕາມ, ຄຸ້ມຄອງຊ່ວຍເຫລືອແຮງງານລາວຢູ່ຕ່າງປະເທດ.

27.3 ຄົ້ນຄວ້າ ແລະວິໄຈກ່ຽວກັບການເຄື່ອນຍ້າຍແຮງງານ ແລະ ຄວາມອາດສາມາດດູດຊຶມແຮງງານໃນລະບົບເສດຖະກິດ, ສ້າງສູນຂໍ້ມູນຂ່າວສານ ແລະ ສູນບໍລິການຈັດຫາງານຢູ່ບັນດາຕົວເມືອງໃຫຍ່. ສ້າງບົດວິພາກຄວາມຕ້ອງການແຮງງານ.

27.4 ເອົາໃຈໃສ່ຄຸ້ມຄອງແຮງງານຕ່າງປະເທດທີ່ເຂົ້າມາອອກແຮງງານ ຢູ່ ສປປ ລາວ ຢ່າງເຂັ້ມງວດ. ຕັ້ງໜ້າປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ໃຫ້ການຊ່ວຍເຫລືອຜູ້ປະສົບໄພຕ່າງໆ ແລະ ພັດທະນາຜູ້ດ້ອຍໂອກາດ.

27.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານແຮງງານ ແລະ ສະຫວັດດີການສັງຄົມເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 28: ມອບໃຫ້ ຄະນະກຳມະການກິລາແຫ່ງຊາດ ປະຕິບັດດັ່ງນີ້:**

28.1 ພັດທະນາກິລາໃຫ້ມີຄວາມເຂັ້ມແຂງ, ຖືເອົາບົດຮຽນ ແລະ ຜົນສຳເລັດໃນການຈັດງານກິລາຄັ້ງທີ 25 ທີ່ວຽງຈັນ ເພື່ອຜັນຂະຫຍາຍໃຫ້ກວ້າງ ແລະ ເລິກເຊິ່ງກວ່າເກົ່າ.

28.2 ສືບຕໍ່ກະກຽມງານມະຫາກຳກິລາແຫ່ງຊາດ ຄັ້ງທີ IX ໃນທ້າຍປີ 2011 ທີ່ແຂວງຫລວງພະບາງ ໂດຍປຸກລະດົມໃຫ້ພາກລັດ, ເອກະຊົນ ແລະ ຊັ້ນຄົນຕ່າງໆ ເຂົ້າຮ່ວມໃນການສ້າງຂະບວນການງານແຂ່ງຂັນດັ່ງກ່າວ ໃຫ້ມີລັກສະນະຟົດຟື້ນຄືກັບການຈັດງານມະຫາກຳກິລາ ຊີເກມ ຄັ້ງທີ 25 ທີ່ວຽງຈັນ.

28.3 ກະກຽມບັນດາພື້ນຖານໂຄງລ່າງດ້ານກິລາ ເພື່ອຮອງຮັບໃຫ້ແກ່ການຈັດງານແຂ່ງຂັນກິລາແຫ່ງຊາດຄັ້ງທີ X ທີ່ແຂວງອຸດົມໄຊ ໃນປີ 2014.

28.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການກິລາ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 29: ມອບໃຫ້ ອົງການວິທະຍາສາດ ແລະ ເຕັກໂນໂລຊີແຫ່ງຊາດ ປະຕິບັດດັ່ງນີ້:**

29.1 ສົມທົບກັບມະຫາວິທະຍາໄລແຫ່ງຊາດ ແລະ ສະຖາບັນຄົ້ນຄວ້າວິທະຍາສາດດຳເນີນໂຄງການຄົ້ນຄວ້າວິທະຍາສາດການນຳໃຊ້ ສຳລັບຂະແໜງ ທີ່ເຫັນວ່າເໝາະສົມ ສຳລັບປະເທດເຮົາ, ໃນນີ້ ນັບທັງໂຄງການຮ່ວມມືຄົ້ນຄວ້າກັບສາກົນ, ໂຄງການກໍ່ສ້າງນັກຄົ້ນຄວ້າໃນດ້ານຕ່າງໆທັງຢູ່ພາຍໃນ ແລະ ຕ່າງປະເທດ.

29.2 ສ້າງແຜນລະດົມແຫຼ່ງທຶນເຂົ້າໃນການຄົ້ນຄວ້າວິທະຍາສາດ-ເຕັກນິກ ຈາກພາຍໃນ ສົມທົບກັບການຍາດແຍ່ງການຊ່ວຍເຫຼືອຈາກຕ່າງປະເທດ; ສ້າງແຜນນຳໃຊ້ຜົນສຳເລັດດ້ານວິທະຍາສາດ ຂອງໂລກເຂົ້າໃນການພັດທະນາ. ເອົາວຽກງານຊັບສິນທາງປັນຍາ, ມາດຖານ ແລະ ວັດແທກເຂົ້າຮັບໃຊ້ສັງຄົມ ແລະ ປະຊາຊົນໃຫ້ນັບມື້ກວ້າງຂວາງ, ສືບຕໍ່ປະສານສົມທົບ ແລະ ຮ່ວມມືກັບອົງການມາດຕະຖານສາກົນ ແລະ ອົງການມາດຕະຖານຂອງພາກພື້ນເພື່ອປັບປຸງວຽກງານມາດຕະຖານ ແລະ

ຄຸນນະພາບ ຢູ່ ສປປ ລາວ. ຍາດແຍ່ງການຮ່ວມມືຊ່ວຍເຫຼືອວຽກງານວັດແທກໄລຍະ II ຈາກຕ່າງ ປະເທດ.

29.3 ຄົ້ນຄວ້າພັດທະນາ, ນຳໃຊ້ ແລະ ສົ່ງເສີມການນຳໃຊ້ເຕັກໂນໂລຊີຂໍ້ມູນຂ່າວສານ (IT) ເຂົ້າໃນການພັດທະນາແຕ່ລະຂະແໜງການ, ໂດຍສະເພາະການປະຕິບັດໂຄງການບໍລິຫານລັດແບບເອເລັກໂທນິກ ໄລຍະ III. ເອົາໃຈໃສ່ກະກຽມຊຸກຍູ້ການຮ່ວມມື ປະຕິບັດໂຄງການດາວທຽມລາວຮ່ວມມືກັບ ສປ ຈີນ ທີ່ຂັ້ນເທິງຕົກລົງ ແລະ ໄດ້ເຊັນສັນຍາການຄ້າກັບບໍລິສັດຜະລິດດາວທຽມ ແລະ ລູກສອນໄຟ ແລ້ວໃຫ້ສຳເລັດ.

29.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານວິທະຍາສາດ ແລະ ເຕັກໂນໂລຊີເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 30: ມອບໃຫ້ ອົງການຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ປະຕິບັດດັ່ງນີ້:**

30.1 ສືບຕໍ່ປັບປຸງກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ສ້າງ ແລະ ປະກາດໃຊ້ມາດຖານຄຸນນະພາບສິ່ງແວດລ້ອມ; ດຳເນີນການປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມຂອງບັນດາໂຄງການຕ່າງໆ ແລະ ຕິດຕາມກວດກາການປະຕິບັດມາດຕະການຫຼຸດຜ່ອນຜົນກະທົບຕໍ່ດ້ານສິ່ງແວດລ້ອມ ແລະ ສັງຄົມ ຈາກດ້ານຕ່າງໆ.

30.2 ຈັດຕັ້ງປະຕິບັດການຄຸ້ມຄອງຊັບພະຍາກອນນ້ຳແບບປະສົມປະສານ ໃນລະດັບອ່າງແມ່ນ້ຳຂອງ ແລະ ອ່າງຍ່ອຍ ພ້ອມທັງ ສ້າງຕັ້ງຄະນະກຳມະການຄຸ້ມຄອງອ່າງແມ່ນ້ຳ ຢູ່ອ່າງນ້ຳງື່ມ ແລະ ອ່າງນ້ຳເທີນ-ນ້ຳກະດິງ ແລະ ອື່ນໆ; ສ້າງລະບົບການເຕືອນລະວັງໄພພິບັດທຳມະຊາດ; ຜັນຂະຫຍາຍຍຸດທະສາດກ່ຽວກັບການປ່ຽນແປງດິນຟ້າອາກາດ ເຂົ້າເປັນແຜນງານ ປັບຕົວ ແລະ ຫລຸດຜ່ອນຜົນກະທົບຕໍ່ການປ່ຽນແປງດິນຟ້າອາກາດ ເພື່ອເຊື່ອມເຂົ້າແຜນພັດທະນາເສດຖະກິດ-ສັງຄົມ ຄັ້ງທີ VII.

30.3 ສ້າງຈິດສຳນຶກຂອງປວງຊົນ ກ່ຽວກັບການປົກປັກຮັກສາສິ່ງແວດລ້ອມ ແລະ ໄພຂົ່ມຂູ່ຈາກການປ່ຽນແປງດິນຟ້າອາກາດ ເປັນຕົ້ນ ແມ່ນການຮັກສາແຫຼ່ງນ້ຳ ແລະ ການຈຳກັດມົນລະພິດ. ຕິດຕາມ ແລະ ພະຍາກອນສະພາບອາກາດອອກຂ່າວ ເປັນປົກກະຕິ, ສະໜອງຂໍ້ມູນອຸຕຸການບິນເປັນປົກກະຕິຕໍ່ເນື່ອງ.

30.4 ປະຕິບັດພາລະບົດບາດ ຊຸກຍູ້ສົ່ງເສີມການຮ່ວມມືໃນກອບອານຸພາກພື້ນແມ່ນ້ຳຂອງ (GMS) ແລະ ຄະນະກຳມະການແມ່ນ້ຳຂອງສາກົນ.

30.5 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານຊັບພະຍາກອນນ້ຳ ແລະ ສິ່ງແວດລ້ອມ ເພື່ອ ບັນລຸຕາມຄາດໝາຍທີ່ກຳນົດໃນແຜນການສົກປີ 2010-2011.

**ມາດຕາທີ 31: ມອບໃຫ້ ອົງການຂອງພັກ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ປະຕິບັດດັ່ງນີ້:**

31.1 ປະຕິບັດຕາມຂອບເຂດສິດ ແລະ ໜ້າທີ່ຄວາມຮັບຜິດຊອບຂອງຕົນທີ່ໄດ້ຮັບມອບໝາຍຈາກພັກ-ລັດຖະບານ; ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມໃນການພັດທະນາວຽກງານຂອງຕົນ ເພື່ອສະໜັບສະໜູນແກ່ການບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2010-2011. ສຶກສາອົບຮົມ, ເຕົ້າໂຮມຄວາມສາມັກຄີປະຊາຊົນບັນດາເຜົ່າ ແລະ ບຸກລະດົມມວນຊົນເຂົ້າຮ່ວມໃນການສ້າງເສດຖະກິດ-ສັງຄົມ, ປະຕິບັດລະບຽບກົດໝາຍ ແລະ ແກ້ໄຂບັນຫາປະກົດການຫຍໍ້ທໍ້ດ້ານສັງຄົມ.

31.2 ຈັດຕັ້ງປະຕິບັດມາດຕະການໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນການລົງທຶນຂອງລັດ ແລະ ແຜນງົບປະມານຂອງລັດ ສົກປີ 2010-2011 ແລະ ຈັດຕັ້ງປະຕິບັດມາດຕະການແກ້ໄຂໜີ້ສິນຂອງລັດທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

**ມາດຕາທີ 32: ມອບໃຫ້ ກະຊວງປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ປະຕິບັດດັ່ງນີ້:**

32.1 ເອົາໃຈໃສ່ວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແນໃສ່ເຮັດໃຫ້ທົ່ວປະເທດມີຄວາມສະຫງົບຢ່າງໜັກແໜ້ນ; ສ້າງສະພາບແວດລ້ອມທີ່ອຳນວຍໃຫ້ການສ້າງສາພັດທະນາເສດຖະກິດ-ສັງຄົມໃນທຸກພື້ນທີ່ຂອງປະເທດ; ປຸກລະດົມຂົນຂວາຍ ແລະ ຈັດຕັ້ງມະຫາຊົນເຂົ້າຮ່ວມວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ຮາກຖານຢ່າງກວ້າງຂວາງ.

32.2 ມອບໃຫ້ຄະນະພັກ-ອຳນາດການປົກຄອງທຸກຂັ້ນ ເຮັດວຽກງານປ້ອງກັນຊາດ ແລະ ປ້ອງກັນຄວາມສະຫງົບ ໂດຍມີທຸກຂະແໜງການ ແລະ ທ້ອງຖິ່ນ ເຂົ້າຮ່ວມໃນການຮັກສາສະຖຽນລະພາບດ້ານການເມືອງ, ຮັກສາຄວາມສະຫງົບເປັນລະບຽບຮຽບຮ້ອຍໃນສັງຄົມ; ປະຕິບັດໂຄງການພັດທະນາຊາຍແດນໃຫ້ມີປະສິດທິຜົນ. ມອບໃຫ້ເຈົ້າແຂວງ, ຮອງເຈົ້າແຂວງເປັນເຈົ້າການຊີ້ນຳ ນຳພາ ແລະ ແກ້ໄຂ ໂດຍມີທຸກພາກສ່ວນເຂົ້າຮ່ວມ ແລະ ມີກຳລັງປ້ອງກັນຄວາມສະຫງົບ ແລະ ປ້ອງກັນຊາດ ເປັນຫລັກແຫລ່ງ.

32.3 ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ ເປັນຕົ້ນແມ່ນ ບັນຫາຢາເສບຕິດ, ອາຊະຍາກຳຕ່າງໆ, ອຸປະຕິເຫດບົນທ້ອງຖະໜົນ ແລະ ການມົ້ວສຸມຜິດລະບຽບກົດໝາຍ ໂດຍມີມາດຕະການປະຕິບັດຢ່າງລະອຽດ ແລະ ເດັດຂາດ.

32.4 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານປ້ອງກັນປະເທດ-ກະຊວງປ້ອງກັນຄວາມສະຫງົບ ເພື່ອບັນລຸຕາມຄາດໝາຍທີ່ກຳນົດໃນແຜນການ ສົກປີ 2010-2011.

**ມາດຕາທີ 33: ມອບໃຫ້ ກະຊວງຍຸຕິທຳ ປະຕິບັດດັ່ງນີ້:**

33.1 ສົມທົບກັບບັນດາກະຊວງທີ່ກ່ຽວຂ້ອງ ຄົ້ນຄວ້າເພື່ອສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳອື່ນໆ ທີ່ຈະນຳເຂົ້າຜ່ານກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຊຸດທີ VI ເທື່ອທີ 10 ແລະ ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດຊຸດທີ VII ເທື່ອທີ 1; ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍຢ່າງເປັນລະບົບ ແລະ ກວ້າງຂວາງ ແນໃສ່ເຮັດໃຫ້ທົ່ວສັງຄົມຮັບຮູ້, ເຂົ້າໃຈດີຂຶ້ນ ແລະ ມີສະຕິເຄົາລົບກົດໝາຍສູງຂຶ້ນ, ເຮັດໃຫ້ການຈັດຕັ້ງປະຕິບັດກົດໝາຍມີຄວາມເປັນເອກະພາບໃນທົ່ວປະເທດ ແລະ ມີຄວາມສັກສິດຂຶ້ນ; ພ້ອມກັນນີ້, ກໍ່ໃຫ້ຈັດຕັ້ງການກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ທີ່ໄດ້ປະກາດໃຊ້ແລ້ວ.

33.2 ສົມທົບກັບບັນດາຂະແໜງການ ໂດຍສະເພາະອົງການປົກປ້ອງກົດໝາຍ ປັບປຸງແບບແຜນວິທີເຮັດວຽກ ແລະ ຈັນຍາທຳຂອງພະນັກງານແນໃສ່ສ້າງຄວາມເຊື່ອໝັ້ນຂອງສັງຄົມ ຕໍ່ອົງການປົກປ້ອງກົດໝາຍແຕ່ລະຂັ້ນໃຫ້ນັບມື້ນັບສູງ, ຍົກສູງຄວາມຖືກຕ້ອງ ໃນການຕັດສິນຄະດີຄຽງຄູ່ກັບການເພີ່ມຄວາມສັກສິດ ແລະ ເດັດຂາດ ໃນການປະຕິບັດຄຳຕັດສິນຂອງສານ.

33.3 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານຍຸຕິທຳ ເພື່ອບັນລຸຕາມຄາດໝາຍທີ່ກຳນົດ ໃນແຜນການ ສົກປີ 2010-2011.

**ມາດຕາທີ 34: ມອບໃຫ້ ອົງການກວດກາລັດຖະບານ ແລະ ອົງການກວດສອບແຫ່ງລັດປະຕິບັດດັ່ງນີ້:**

34.1 ເພີ່ມທະວີການຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ການປະຕິບັດຮ່ວງລາຍຮັບ ແລະ ລາຍຈ່າຍຕ່າງໆ ຂອງງົບປະມານແຫ່ງລັດຂອງບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ລົງຮອດຂັ້ນເມືອງ ແລະ ບ້ານ ແຕ່ທົ່ວທີ ເພື່ອຮັບປະກັນໃຫ້ການປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນລາຍຮັບ-ລາຍຈ່າຍໄປຕາມແຜນການທີ່ສະພາແຫ່ງຊາດ ໄດ້ອະນຸມັດ ແລ້ວລາຍງານໃຫ້ລັດຖະບານເປັນແຕ່ລະໄລຍະ. ປະຕິບັດມາດຕະການເຂັ້ມງວດ ໃນການຕ້ານການສໍ້ລາດບັງຫລວງ ແລະ ເອົາໃຈໃສ່ການຄົ້ນຄວ້າ ແກ້ໄຂຄຳຮ້ອງທຸກຂໍຄວາມເປັນທຳຂອງປະຊາຊົນ.

34.2 ກວດກາຄວາມຖືກຕ້ອງໃນການຈັດຕັ້ງ ແລະ ການນຳໃຊ້ທຶນຂອງບັນດາກອງທຶນຕ່າງໆ ທີ່ຂະແໜງການສູນກາງ ແລະ ທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເຮັດໃຫ້ລາຍຮັບ ແລະ ລາຍຈ່າຍລວມສູນຜ່ານບັນຊີງົບປະມານແຫ່ງລັດຕາມກົດໝາຍກຳນົດໄວ້ ແລະ ເພື່ອເສີມຂະຫຍາຍຄຸນປະໂຫຍດຂອງແຫຼ່ງທຶນຕ່າງໆຂຶ້ນຕື່ມອີກ.

**ມາດຕາທີ 35: ມອບໃຫ້ ກະຊວງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ປະຕິບັດດັ່ງນີ້:**

35.1 ສືບຕໍ່ປັບປຸງກົດໝາຍວ່າດ້ວຍລັດຖະບານ ແລະ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ລວມທັງຄົ້ນຄວ້າປັບປຸງນະໂຍບາຍ ແລະ ມາດຕະການຕ່າງໆ ໃນການຜັນຂະຫຍາຍບັນດາກົດຫມາຍດັ່ງກ່າວ, ການແບ່ງ ແລະ ມອບສິດ, ໜ້າທີ່ ແລະ ຄວາມຮັບຜິດຊອບ ລະຫວ່າງສູນກາງ ແລະ ທ້ອງຖິ່ນໃຫ້ສອດຄ່ອງ, ລະອຽດຈະແຈ້ງ ໃນການຄຸ້ມຄອງເສດຖະກິດ-ສັງຄົມ.

35.2 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມດ້ານການຄຸ້ມຄອງລັດຖະກອນ ເພື່ອບັນລຸຕາມຄາດໝາຍທີ່ກຳນົດ ໃນແຜນການ ສົກປີ 2010-2011.

**ມາດຕາທີ 36: ມອບໃຫ້ສະຖາບັນວິທະຍາສາດສັງຄົມ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ, ສະຖາບັນຄົ້ນຄວ້າກະສິກຳ, ສະຖາບັນຄົ້ນຄວ້າເສດຖະກິດການຄ້າ ແລະ ສະຖາບັນຄົ້ນຄວ້າອື່ນໆ ປະຕິບັດດັ່ງນີ້:**

36.1 ມອບໃຫ້ສະຖາບັນວິທະຍາສາດສັງຄົມ ຄົ້ນຄວ້າປະຫວັດສາດລາວ ໃນໄລຍະຕໍ່ຕ້ານ ແລະ ເປັນທົ່ວເມືອງຂຶ້ນຂອງຕ່າງຊາດ, ຄວາມສະເໝີພາບບັນດາເຜົ່າຕໍ່ໜ້າກົດໝາຍ ໃນການພັດທະນາເສດຖະກິດ-ສັງຄົມ ແລະ ການເຄື່ອນຍ້າຍຂອງເຜົ່າລາວຈາກເຂດພາກໃຕ້ຂອງຈີນ. ຄົ້ນຄວ້າຄຳຮ່ວມຕະກູນພາສາລາວ-ໄທ.

36.2 ມອບໃຫ້ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ກະຊວງແຜນການ ແລະ ການລົງທຶນ ສຶກສາຄວາມເປັນໄປໄດ້ໂຄງການລະດັບຊາດ ເພື່ອຮັບໃຊ້ແຜນການ 5 ປີ ຄັ້ງທີ VII (2011-2015) ແລະສືບຕໍ່ຄົ້ນຄວ້າການຫັນເປັນອຸດສະຫະກຳ ແລະ ທັນສະໄໝ.

36.3 ມອບໃຫ້ສະຖາບັນຄົ້ນຄວ້າກະສິກຳ ກະຊວງກະສິກຳ ແລະ ປ່າໄມ້ ສືບຕໍ່ຄົ້ນຄວ້າແນວພັນສັດ ແລະແນວພັນພືດ ເປັນຕົ້ນ: ແນວພັນຖົ່ວເຫລືອງ, ແນວພັນສາລີ, ແນວພັນສັດນ້ຳ.

36.4 ມອບໃຫ້ສະຖາບັນຄົ້ນຄວ້າເສດຖະກິດການຄ້າ ກະຊວງອຸດສະຫະກຳ ແລະ ການຄ້າ ຄົ້ນຄວ້າຕົວແບບໜຶ່ງເມືອງໜຶ່ງຜະລິດຕະພັນ ຢູ່ແຂວງ ຫລວງພະບາງ ແລະ ອຸດົມໄຊ.

36.5 ມອບໃຫ້ບັນດາສູນ, ສະຖາບັນຄົ້ນຄວ້າວິທະຍາສາດ ຂຶ້ນແຜນ ແລະ ດຳເນີນການຄົ້ນຄວ້າທາງດ້ານວິທະຍາສາດ ເພື່ອນຳໃຊ້ຜົນຂອງການຄົ້ນຄວ້າ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາທີ 37: ມອບໃຫ້ ຄະນະເລຂາທິການລັດຖະບານ ປະຕິບັດດັ່ງນີ້:**

37.1 ເປັນໃຈກາງປະສານກັບບັນດາຂະແໜງການ ແລະ ທ້ອງຖິ່ນ ດຳເນີນການກວດກາຄືນໂດຍໄວ ບັນດານິຕິກຳ ເປັນຕົ້ນແມ່ນ ຄຳສັ່ງ ແລະ ລະບຽບການຕ່າງໆຂອງລັດຖະບານ, ຂອງກະຊວງ-ອົງການ ແລະ ຂອງທ້ອງຖິ່ນ, ຖ້າຫາກເຫັນວ່າອັນໃດບໍ່ສອດຄ່ອງກັບນະໂຍບາຍ, ລະບຽບການ ຫລື ກົດໝາຍທີ່ວາງອອກ ໃຫ້ຮີບຮ້ອນປັບປຸງແກ້ໄຂ, ງົດການປະຕິບັດ ຫລື ລົບລ້າງ.

37.2 ໃຫ້ສືບຕໍ່ປັບປຸງ ແລະ ສ້າງກົນໄກປະສານງານທີ່ມີປະສິດທິຜົນ ລະຫວ່າງ ຫ້ອງວ່າການສູນກາງພັກ, ຫ້ອງວ່າການສະພາແຫ່ງຊາດ, ຫ້ອງວ່າການສຳນັກງານປະທານປະເທດ ແລະ ຄະນະເລຂາທິການລັດຖະບານ, ພ້ອມທັງມີລະບົບສ່ອງແສງລາຍງານໃຫ້ສະພາແຫ່ງຊາດເປັນປົກກະຕິ.

37.3 ເປັນໃຈກາງປະສານສົມທົບກັບກະຊວງ-ອົງການທີ່ກ່ຽວຂ້ອງ ສ້າງຕັ້ງຄະນະສະເພາະກິດ ເພື່ອກວດກາການຕັ້ງດ່ານ ຫລື ຈຸດກວດກາສິນຄ້າ ທີ່ບໍ່ຖືກຕ້ອງຕາມກົດໝາຍ, ເມື່ອພົບເຫັນບັນຫາໃຫ້ສົມທົບກັບອົງການປົກຄອງທ້ອງຖິ່ນກ່ຽວຂ້ອງ ດຳເນີນການແກ້ໄຂຢ່າງສອດຄ່ອງ ແລະ ຖືກຕ້ອງຕາມກົດໝາຍ.

37.4 ປັບປຸງລະບອບປະສານງານ ໃນການແກ້ໄຂບັນຫາຕ່າງໆລະຫວ່າງກະຊວງ, ອົງການ ດ້ວຍກັນ ແລະ ລະຫວ່າງກະຊວງ-ອົງການ ກັບ ທ້ອງຖິ່ນ ເພື່ອໃຫ້ມີຄວາມກົມກຽວ ເປັນເອກະພາບ ແລະ ເກີດກຳລັງແຮງສັງລວມໃນການແກ້ໄຂບັນຫາຕ່າງໆ ເຮັດໃຫ້ການປະຕິບັດທິດທາງ ແລະ ມາດຕະການຕ່າງໆທີ່ວາງອອກໃຫ້ມີຄວາມສັກສິດ.

37.5 ຊ່ວຍລັດຖະບານໃນການຕິດຕາມ ຊຸກຍູ້ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011.

**ມາດຕາທີ 38: ມອບໃຫ້ ບັນດາກະຊວງ, ອົງການຂັ້ນສູນກາງ, ນະຄອນຫຼວງວຽງຈັນ ແລະ ແຂວງ ປະຕິບັດດັ່ງນີ້:**

38.1 ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດຕາມຂອບເຂດສິດ ທີ່ຕົນຮັບຜິດຊອບ; ພ້ອມກັນນັ້ນ, ຄຸ້ມຄອງກວດກາແຜນລາຍຈ່າຍງົບປະມານໃຫ້ໄປຕາມແຜນການທີ່ສະພາແຫ່ງຊາດ ອະນຸມັດ, ຮັບປະກັນບົນຈິດໃຈປະຢັດມັດທະຍັດ, ຖືກຕ້ອງຕາມຈຸດປະສົງເປົ້າໝາຍ ແລະ ບໍ່ປະຕິບັດເກີນແຜນ ຫລື ນອກແຜນອະນຸມັດ ເດັດຂາດ.

38.2 ບັນດາກະຊວງ, ອົງການ, ນະຄອນຫຼວງ ແລະ ແຂວງ ສ້າງເງື່ອນໄຂ, ລະດົມ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ເຂົ້າຮ່ວມໃນການລົງທຶນຜະລິດສິນຄ້າ ແລະ ບໍລິການຕາມຂອບນະໂຍບາຍ ແລະ ກົດໝາຍ.

38.3 ນະຄອນຫລວງ ແລະ ແຂວງຕ່າງໆ ຈັດເກັບລາຍຮັບພູດຂອງທ້ອງຖິ່ນໃຫ້ໄດ້ຕາມແຜນ ຫລື ລື່ນແຜນ, ພ້ອມກັນນັ້ນ ກໍອຳນວຍຄວາມສະດວກໃຫ້ແກ່ການເກັບລາຍຮັບຂອງ 3 ຂະແໜງການ ສາຍຕັ້ງທີ່ຂຶ້ນກັບກະຊວງການເງິນ ເພື່ອໃຫ້ການເກັບລາຍຮັບພູດຂອງສູນກາງໃຫ້ບັນລຸຕາມແຜນ ຫລື ລື່ນແຜນ.

38.4 ຂະແໜງການ, ທ້ອງຖິ່ນ, ບຸກຄົນໃດໜຶ່ງ ບໍ່ສາມາດຫຼຸດຜ່ອນ ຫຼື ຍົກເວັ້ນພາສີອາກອນ ແລະ ຄ່າທຳນຽມທຸກປະເພດທີ່ບໍ່ເປັນໄປຕາມລະບຽບກົດໝາຍຕາມລຳພັງ, ທຸກການຍົກເວັ້ນດັ່ງກ່າວນັ້ນແມ່ນລັດຖະບານເປັນຜູ້ຕົກລົງ ໂດຍຜ່ານການຄົ້ນຄວ້າສະເໜີຂອງກະຊວງການເງິນ ຖ້າຂະແໜງການໃດ ຫຼື ທ້ອງຖິ່ນໃດຫາກຝ່າຝືນ ແມ່ນຈະຖືກພິຈາລະນາດ້ານວິໄນຢ່າງເຂັ້ມງວດ. ຫ້າມບຸກຄົນ ແລະ ການຈັດຕັ້ງເກັບຄ່າທຳນຽມ ແລະ ຄ່າບໍລິການທີ່ບໍ່ນອນຢູ່ໃນລະບຽບກົດໝາຍ. ບັນດາຂະແໜງການ

ແລະ ທ້ອງຖິ່ນ ກ່ອນຈະອະນຸມັດເຊັນສັນຍາປະຕິບັດໂຄງການຕ່າງໆ ຕ້ອງໄດ້ຄຳນຶງເຖິງລະບຽບກົດໝາຍກ່ຽວກັບພາສີ, ສ່ວຍສາອາກອນ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

38.5 ອົງການການປົກຄອງທ້ອງຖິ່ນເອົາໃຈໃສ່ຊຸກຍູ້ການຜະລິດຂອງປະຊາຊົນ ແລະ ສ້າງເງື່ອນໄຂໃຫ້ປະຊາຊົນ ໄດ້ເຂົ້າເຖິງປັດໄຈການຜະລິດ. ບັນຫາສຳຄັນແມ່ນຄວນຊຸກຍູ້ໃຫ້ມີການລະດົມກຳລັງການຜະລິດທີ່ເປັນເອກະເທດກະແຈກກະຈາຍເຂົ້າກັນ ໂດຍຄຳນຶງເຖິງການມີສ່ວນຮ່ວມ, ການແບ່ງຜົນປະໂຫຍດທີ່ເໝາະສົມ,

ມີຄວາມຕື່ນຕົວສະໝັກໃຈ ໂດຍມີຕົວແບບທີ່ສາມາດເຮັດໃຫ້ປະຊາຊົນເຫັນໄດ້ ຜົນຂອງການເຂົ້າຮ່ວມ ພ້ອມທັງຈັດຕັ້ງໃຫ້ມີການລະດົມທຶນດ້ວຍຮູບການສະຫະກອນສິນເຊື່ອໄປ ພ້ອມ.

38.6 ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຂຶ້ນໂຄງການຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຖາວອນໃຫ້ປະຊາຊົນ ໂດຍມີການຈັດລະດັບຄວາມສຳຄັນ ແລະ ຄວາມຈຳເປັນ ຫລື ລະດັບບູລິມະສິດຢ່າງຈະແຈ້ງ ສົ່ງໃຫ້ລັດຖະບານ ສ້າງເປັນແຜນກວມລວມທົ່ວປະເທດໃນແຕ່ລະສົກປີ.

38.7 ຄະນະຮັບຜິດຊອບການຈັດຕັ້ງງານສະເຫລີມສະຫລອງ ສົມທົບກັບນະຄອນຫລວງວຽງຈັນ ແລະພາກສ່ວນຕ່າງໆທີ່ກ່ຽວຂ້ອງ ຈັດຕັ້ງງານສະເຫລີມສະຫລອງນະຄອນຫລວງວຽງຈັນ ຄົບຮອບ 450 ປີໃຫ້ມີຄວາມຟົດຟື້ນ ແລະ ມີຜົນສຳເລັດ; ໃຫ້ຖືການສະເຫລີມສະຫລອງດັ່ງກ່າວເປັນບຸນໃຫຍ່ຂອງຊາດ, ໃຫ້ໄດ້ທັງຮູບການ ແລະ ການປຸກລະດົມນ້ຳໃຈສາມັກຄີຮັກຊາດທົ່ວປວງຊົນ. ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ປະກອບສ່ວນ ແລະ ປຸກລະດົມພະນັກງານ, ສະມາຊິກພັກ, ກຳລັງປ້ອງກັນຊາດ-ປ້ອງກັນສະຫງົບ, ຫົວໜ່ວຍເສດຖະກິດ ແລະ ປະຊາຊົນ ເຂົ້າຮ່ວມການສະເຫລີມສະຫລອງງານດັ່ງກ່າວ ຢ່າງເປັນຂະບວນການຟົດຟື້ນ.

38.8 ປະຕິບັດບັນດາທິດທາງ, ໜ້າທີ່ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ທີ່ກ່ຽວພັນກັບຄວາມຮັບຜິດຊອບຂອງຕົນເອງ.

## ໝວດທີ IV

## ມາດຕະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2010-2011

**ມາດຕາທີ 39: ການຊຸກຍູ້ການເຕີບໂຕທາງດ້ານເສດຖະກິດ, ຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກ ແລະ ການພັດທະນາແບບຍືນຍົງ:**

39.1 ສືບຕໍ່ນຳໃຊ້ເສດຖະກິດຫຼາຍພາກສ່ວນ, ອອກແຮງລະດົມການລົງທຶນໃຫ້ໄດ້ຢ່າງຕ່ຳ 32% ຂອງ GDP, ລະດົມທຶນໃຫ້ໄດ້ຕາມຄາດໝາຍ, ຍົກສູງປະສິດຕິຜົນຂອງການນຳໃຊ້ທຶນ (ຕົວເລກ ICOR ໃຫ້ໄດ້ 3,5 ຈາກປະຈຸບັນ ເທົ່າ 4); ປະກອບສ້າງສິ່ງແວດລ້ອມທີ່ເອື້ອອຳນວຍຕໍ່ການແຂ່ງຂັນ ທີ່ຍຸຕິທຳໃນການດຳເນີນທຸລະກິດ; ປັບປຸງ ແລະ ພັດທະນາເສດຖະກິດ; ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງ ສະແຫວງຫາໂຄງການທີ່ເປັນຫົວຈັກການພັດທະນາກໍ່ຄືຫົວຈັກອຸດສະຫະກຳ ເຊັ່ນ: ໃຫ້ເລີ່ມສຳຫຼວດອອກແບບ ໂຄງການເສັ້ນທາງລົດໄຟ ແຕ່ຊາຍແດນຈີນ-ນະຄອນຫຼວງວຽງຈັນ, ສືບຕໍ່ ແລະ ກໍ່ສ້າງເຂື່ອນໄຟຟ້າ-ລະບົບສາຍສົ່ງຕ່າງໆ ໃຫ້ສຳເລັດຕາມແຜນການ; ປະຕິບັດນະໂຍບາຍຫັນເປັນອຸດສະຫະກຳ ແລະ ທັນສະໄໝ, ນຳໃຊ້ຜົນສຳເລັດທາງດ້ານວິທະຍາສາດເຕັກໂນໂລຊີ ເຂົ້າໃນການ

ພັດທະນາ, ນຳໃຊ້ທ່າແຮງບົ່ມຊ້ອນຂອງສັງຄົມເຂົ້າໃນການພັດທະນາ; ປະຕິບັດກົນໄກການຄົ້ນຄວ້າອະນຸມັດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດໃຫ້ໄວ, ຮັບປະກັນຜົນປະໂຫຍດຂອງປະເທດຊາດ ແລະ ໂປ່ງໃສ, ສືບຕໍ່ປັບປຸງບັນດາລະບຽບການຕ່າງໆ ຂອງຂະແໜງການພະລັງງານ-ບໍ່ແຮ່ ທີ່ເຫັນວ່າຍັງບໍ່ສອດຄ່ອງ, ມີຊ່ອງວ່າງ ແລະ ຊໍ້າຊ້ອນກັນ, ສຸມໃສ່ການຄຸ້ມຄອງກິດຈະການການລົງທຶນໃຫ້ເຂັ້ມງວດ ໂດຍສະເພາະ ທາງດ້ານບໍ່ແຮ່; ເພີ່ມທະວີຄວາມສາມາດໃນການ ລະດົມທຶນຊ່ວຍເຫລືອລ້າ ແລະ ກູ້ຢືມຈາກຕ່າງປະເທດ ໃຫ້ໄດ້ຕາມຄາດໝາຍ; ຫັນຊັບສິນເປັນທຶນ ເປັນຕົ້ນ: ຫັນເອົາໂຄງການບໍ່ແຮ່ຂະໜາດໃຫ່ຍ ທີ່ໄດ້ມີການສຳຫລວດຢ່າງລະອຽດແລ້ວ, ທີ່ດິນຕາມບໍລິເວນແລວເສັ້ນທາງແລ້ວສ້າງເປັນເທດສະບານເມືອງ ແລະ ໂຄງການອື່ນໆ; ເອົາໃຈໃສ່ຕິດຕາມກວດກາ ແລະ ແກ້ໄຂກ່ຽວກັບການປັ່ນປ່ວນ, ກັກຕຸນ ແລະ ສວຍໂອກາດຂຶ້ນລາຄາ.

39.2 ເພື່ອສູ້ຊົນຜະລິດເຂົ້າໃຫ້ໄດ້ 3,38 ລ້ານໂຕນ ແລະ ເນື່ອງຈາກໃນປີນີ້ຝົນຕົກບໍ່ຖືກຕາມລະດູການບາງເຂດຊາດນໍ້າ ເຮັດໃຫ້ປັກດຳບໍ່ທັນຕາມລະດູການ, ສະນັ້ນ ຕ້ອງໄດ້ຮັບປະກັນໃຫ້ການຜະລິດເຂົ້ານາແຊງມີສະມັດຕະພາບສູງ ໂດຍການກະກຽມແນວພັນເຂົ້າ ແລະ ພືດທົດແທນອື່ນໆ ໃຫ້ພຽງພໍກັບຄວາມຕ້ອງການ, ລວມທັງແນວພັນທີ່ທົນທານຕໍ່ສະພາບແຫ້ງແລ້ງ, ຮັບປະກັນການສະໜອງນໍ້າໃຫ້ພຽງພໍ, ພ້ອມກັນນີ້ ກໍ່ໃຫ້ຄົ້ນຄວ້ານະໂຍບາຍ ແລະ ຮູບການທີ່ເປັນຮູບປະທຳ ເພື່ອໃຫ້ພາກທຸລະກິດ (ພາຍໃນ ແລະ ຕ່າງປະເທດ) ລົງທຶນໃສ່ການປູກເຂົ້າ ແລະ ພືດສະບຽງເປັນສິນຄ້າ ເປັນຕົ້ນການເຮັດຊົນລະກະເສດ; ສູ້ຊົນຜະລິດກະແສໄຟຟ້າ ໃຫ້ໄດ້ 9.087,75 ລ້ານກິໂລວັດໂມງ ໂດຍຊຸກຍູ້ການກໍ່ສ້າງເຂື່ອນ ນຳລີກ 1/2 ແລະ ນໍ້າຍອນ ແລະ ເຂື່ອນອື່ນໆ ໃຫ້ສຳເລັດ ແລະ ຜະລິດກະແສໄຟຟ້າໃນທ້າຍປີ 2010 ແລະ ສູ້ຊົນສ້າງລາຍຮັບຈາກການທ່ອງທ່ຽວ ປະມານ 288 ລ້ານໂດລາສະຫະລັດ ດ້ວຍວິທີການໂຄສະນາການທ່ອງທ່ຽວລາວ, ຈັດເທດສະການທ່ອງທ່ຽວທາງດ້ານທຳມະຊາດ ແລະ ວັດທະນາທຳ ຢ່າງເປັນຂະບວນຟົດຟື້ນ.

39.3 ຮັບປະກັນການດຸ່ນດ່ຽງມະຫາພາກ: ດຸ່ນດ່ຽງທຶນ, ງົບປະມານ, ຂາອອກ-ຂາເຂົ້າ, ການສະສົມ, ການແກ້ໄຂໜີ້ສິນ, ນະໂຍບາຍການເງິນ-ເງິນຕາ (ເງິນເຟີ້, ອັດຕາແລກປ່ຽນ...), ແຮງງານ, ວັດຖຸດິບເພື່ອຜະລິດທຸລະກິດ; ປະຕິບັດນະໂຍບາຍລາຄາທີ່ສອດຄ່ອງກັບກົນໄກຕະຫຼາດ ແລະ ຄຸ້ມຄອງ ບາງລາຄາສິນຄ້າທີ່ເປັນຍຸດທະສາດ; ບູລະນະກົນໄກເສດຖະກິດຕະຫຼາດ ປະສານສົມທົບກັບກົນໄກການວາງແຜນ, ຍົກສູງປະສິດທິພາບຂອງການຄຸ້ມຄອງ ແລະ ຄວາມສັກສິດຂອງການຄຸ້ມຄອງລັດຄຸ້ມຄອງສັງຄົມ; ຕິດຕາມ ແລະ ສະດຸ້ງໄວຕໍ່ການຜັນແປຂອງເສດຖະກິດໂລກພາກພື້ນ, ການປ່ຽນແປງດິນຟ້າອາກາດ, ການພະຍາກອນໄພພິບັດທຳມະຊາດ.

39.4 ການຄົ້ນຄວ້າ ແລະ ປະກາດໃຊ້ແຜນທີ່ນຳໃຊ້ທີ່ດິນ, ແຜນທີ່ນຳໃຊ້ຊັບພະຍາກອນທຳມະຊາດ ຕາມທິດປະສິດທິຜົນ ແລະ ບໍ່ບົກແຫ້ງ: ສຶກສາອົບຮົມປະຊາຊົນທຸກຊັ້ນຄົນໃນສັງຄົມ ເຊື່ອມຊຶມຄວາມໝາຍສຳຄັນ ຂອງສິ່ງແວດລ້ອມ ແລະ ທຳມະຊາດ, ຮັບຮູ້ສິ່ງທ້າທາຍຂອງການປ່ຽນແປງດິນຟ້າອາກາດ, ປ່າໄມ້, ນໍ້າ, ຄວາມຊຸ່ມຊື່ນ, ຄວາມຮ້ອນ ແລະ ໄພທຳມະຊາດ; ເພີ່ມທະວີການນຳໃຊ້ອຸປະກອນເຄື່ອງມືທີ່ທັນສະໄໝ ເພື່ອຕິດຕາມດິນຟ້າອາກາດ. ປັບປຸງສ້າງສູນອຸຕຸນິຍົມ ເພື່ອຕິດຕາມ ແລະ ພະຍາກອນດີຂຶ້ນ; ປະຕິບັດລະບຽບກົດໝາຍທີ່ກ່ຽວຂ້ອງກັບສິ່ງແວດລ້ອມ, ປ່າໄມ້, ນໍ້າ, ດິນ ແລະ ບໍ່ແຮ່ຢ່າງເຂັ້ມງວດ. ປັບປຸງກົນຈັກ, ເຝິກອົບຮົມພະນັກງານທີ່ກ່ຽວຂ້ອງ ໃຫ້ມີຄວາມສາມາດພຽງພໍໃນການຄຸ້ມຄອງວຽກງານດັ່ງກ່າວທົ່ວປະເທດ ແຕ່ສູນກາງຮອດຮາກຖານ.

**ມາດຕາທີ 40: ການແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ:**

40.1 ເພື່ອເຮັດໃຫ້ອັດຕາຄວາມທຸກຍາກຫລຸດລົງຍັງເຫລືອປະມານ 24% ຂອງຈຳນວນປະຊາກອນທົ່ວປະເທດ ແລະ ອັດຕາຄົວເຮືອນທຸກຍາກໃຫ້ຍັງເຫລືອ ປະມານ 19% ຂອງຄົວເຮືອນທັງຫມົດ ໃນທ້າຍປີ 2011, ສືບຕໍ່ຫັນລົງຮາກຖານ-ການເມືອງ ຕິດພັນກັບການສ້າງບ້ານ ແລະ ກຸ່ມບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍ, ສ້າງບ້ານພັດທະນາໃນທຸກເມືອງຂອງເຂດຊົນນະບົດໃຫ້ໄດ້ 5-10% ຂອງຈຳນວນບ້ານຊົນນະບົດ, ພັດທະນາຊົນນະບົດເຂດທີ່ໝັ້ນປະຕິວັດ, ເຂດຈຸດສຸມພັດທະນາ ແລະ ແກ້ໄຂຄວາມທຸກຍາກຂອງຄອບຄົວ, ການຂະຫຍາຍການສຶກສາອະນາໄມ-ປ້ອງກັນພະຍາດ-ຮັກສາສຸຂະພາບ, ປະຕິບັດນະໂຍບາຍໃໝ່ ຂອງລັດຖະບານ ເປັນຕົ້ນເຊັ່ນ: ການຍົກເວັ້ນ ພາສີອາກອນໃຫ້ເມືອງທຸກຍາກ, ຊຸກຍູ້ສົ່ງເສີມການລົງທຶນເຂົ້າໄປສູ່ເຂດທຸກຍາກ ແລະ ມອບໃຫ້ບໍລິສັດໃຫຍ່ ທີ່ລົງທຶນໃນເຂດທຸກຍາກນັ້ນ ມີສ່ວນຮ່ວມຮັບຜິດຊອບພັດທະນາ, ສ້າງວຽກເຮັດງານທຳຕາມຄວາມສາມາດ, ເຮັດໃຫ້ປະຊາຊົນມີລາຍຮັບ ເພີ່ມຂຶ້ນ; ປະຕິບັດໂຄງການສ້າງເສັ້ນທາງ, ໄຟຟ້າ, ນ້ຳສະອາດ, ສຸກສາລາ, ໂຮງຮຽນຢູ່ໃນບ້ານ ຈຸດສຸມຂອງແຂວງ, ສູນກາງ ທີ່ໄດ້ກຳນົດໄວ້ ໃນສົກປີ 2010-2011. ລັດຖະບານໄດ້ຈັດສັນງົບປະມານ ສຳລັບແກ້ໄຂຄວາມທຸກຍາກ ແລະ ພັດທະນາຊົນນະບົດ ທັງໝົດ 135,51 ຕື້ກີບ, ໃນນີ້ ທຶນຫລຸດຜ່ອນຄວາມທຸກຍາກຂັ້ນກຸ່ມບ້ານ 58,00 ຕື້ກີບ, ທຶນຈາກກອງທຶນຫລຸດຜ່ອນຄວາມທຸກຍາກ ຈຳນວນ 47,51 ຕື້ກີບ, ທຶນກອງທຶນພັດທະນາຊາຍແດນ (6 ຈຸດສຸມຂອງລັດຖະບານ) ຈຳນວນ 30,00 ຕື້ກີບ; ນອກນັ້ນ, ຍັງມີສິນເຊື່ອຈາກທະນາຄານນະໂຍບາຍ.

40.2 ໃຫ້ຄະນະຊີ້ນຳພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ ສົມທົບກັບ ຫ້ອງວ່າການສູນກາງພັກ, ຫ້ອງການພັດທະນາຊົນນະບົດ ຂັ້ນແຂວງ ກຳນົດເຂດ ແລະ ເປົ້າໝາຍ ໃນການຈັດສັນເພື່ອສ້າງທີ່ຢູ່ອາໄສ ແລະ ອາຊີບຄົງທີ່ ຫລື ເຕົ້າໂຮມບ້ານນ້ອຍເປັນບ້ານໃຫຍ່.

40.3 ໂຄງການພັດທະນາ 6 ຈຸດສຸມຂອງລັດຖະບານນັ້ນ ມອບໃຫ້ຫ້ອງການພັດທະນາຊາຍແດນ ຂອງຫ້ອງວ່າການສູນກາງພັກ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຕາມແຜນທີ່ສະພາຮັບຮອງຢ່າງເຄັ່ງຄັດ.

40.4 ສົ່ງເສີມການຜະລິດເປັນສິນຄ້າ ໃນເຂດຊົນນະບົດ, ໂດຍລັດຕ້ອງກຳນົດ ແລະ ຊີ້ນຳ ການຜະລິດຂອງປະຊາຊົນວ່າຈະຜະລິດຫຍັງ ເພື່ອໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫລາດ, ພ້ອມກັນນັ້ນກໍ່ສະໜອງແນວພັນ ແລະ ການຝຶກອົບຮົມໃຫ້ກຸ່ມຜະລິດ ໂດຍສະເພາະການຝຶກອົບຮົມໄລຍະສັ້ນເພື່ອສົ່ງເສີມການຜະລິດເປັນສິນຄ້າ, ທັງມີການຕິດຕາມ ຊຸກຍູ້ ແນະນຳ ແລະ ໃຫ້ການຊ່ວຍເຫລືອແກ່ເຂົາເຈົ້າ.

**ມາດຕາທີ 41: ການຈັດຕັ້ງປະຕິບັດເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ແລະ ຄາດໝາຍດ້ານສັງຄົມ:**

41.1 ໃຫ້ບັນດາຂະແໜງການ ແລະທ້ອງຖິ່ນ ເຜີຍແຜ່ແນະນຳ ແລະ ຈັດຕັ້ງຜັນຂະຫຍາຍເປົ້າໝາຍສະຫັດສະຫວັດດ້ານການພັດທະນາ ຕາມ 8 ເປົ້າໝາຍ 18 ຄາດໝາຍ 57 ຕົວຊີ້ວັດ; ສົ່ງເສີມການສ້າງລາຍໄດ້ໃຫ້ປະຊາຊົນເຂົ້າເຖິງການສຶກສາ, ການບໍລິການສາທາລະນະສຸກ; ສົມທົບແໜ້ນລະຫວ່າງການຍູ້ການເຕີບໂຕເສດຖະກິດ ໄປພ້ອມກັບການແກ້ໄຂຄວາມສະເໝີພາບ ແລະ ຄວາມກ້າວໜ້າທາງສັງຄົມ; ກໍ່ສ້າງ ແລະ ບູລະນະລະບົບສະຫວັດດີການສັງຄົມໃຫ້ດີຂຶ້ນ, ປ້ອງກັນໄພສັງຄົມ ແລະ ສຸຂະພາບ ພະລາໄມຂອງສັງຄົມ; ເປີດກວ້າງການຮ່ວມມືສາກົນ, ປະຕິບັດຄຳໝັ້ນສັນຍາ, ພັນທະກັບສາກົນ ແລະ ກັບຄູ່ຮ່ວມພັດທະນາ. ສົ່ງເສີມທຸກພາກສ່ວນເສດຖະກິດ ແລະ ເພີ່ມການ

ລົງທຶນເຂົ້າໃນຂະແໜງສັງຄົມ ເລີ່ມແຕ່ສົກງົບປະມານ 2010-2011 ໃຫ້ໄດ້ 35% ຂອງການລົງທຶນລັດ;

ປັບປຸງນະໂຍບາຍຕໍ່ພະນັກງານຜູ້ທີ່ລົງໄປເຮັດວຽກຢູ່ເຂດພູດອຍຫ່າງໄກສອກຫລີກທີ່ຍັງຫຍຸ້ງຍາກໃຫ້ເໝາະສົມ .

41.2 ບັນລຸຄາດໝາຍໃນຂະແໜງສຶກສາ ຄື: ໃຫ້ເດັກໃນກຸ່ມອາຍຸ 3-5 ປີ ໄດ້ເຂົ້າຮຽນໃນຊັ້ນອະນຸບານໃຫ້ໄດ້ 25%, ອັດຕາເຂົ້າຮຽນສຸດທິຊັ້ນປະຖົມ ໃຫ້ໄດ້ 95%, ອັດຕາການລອດເຫຼືອຂອງນັກຮຽນປ1-ປ5 ໃຫ້ໄດ້ 80%, ອັດຕາເຂົ້າຮຽນຊັ້ນມັດທະຍົມຕົ້ນ ໃຫ້ໄດ້ 68% ແລະ ມັດທະຍົມປາຍ ໃຫ້ໄດ້ 40%, ອັດຕາການຮູ້ໜັງສືຂອງຜູ້ໃຫຍ່ ອາຍຸ 15 ປີຂຶ້ນໄປ ໃຫ້ໄດ້ 83% ແລະ ອັດຕາການຮູ້ໜັງສືໃນເກນອາຍຸ 15-40 ປີ ໃຫ້ໄດ້ 90% ຕ້ອງສືບຕໍ່ຂະຫຍາຍການສຶກສາໄປສູ່ເຂດຫ່າງໄກສອກຫລີກ, ສືບຕໍ່ປະຕິບັດນະໂຍບາຍເສຍຄ່າ ແລະ ບໍ່ເສຍຄ່າໃນຂະແໜງການສຶກສາທຸກລະດັບ, ທຸກຊັ້ນ ແລະ ຫລຸດຜ່ອນການເສຍຄ່າໃນຊັ້ນສຶກສາອານຸບານ, ຊັ້ນປະຖົມ ໂດຍລັດເພີ່ມງົບປະມານໃຫ້ຊັ້ນຮຽນດັ່ງກ່າວ. ສົ່ງເສີມໃຫ້ທົ່ວສັງຄົມເຂົ້າຮ່ວມໃນວຽກງານການສຶກສານັບມື້ນັບກວ້າງຂວາງ; ຂະຫຍາຍໂຮງຮຽນເອກະຊົນ ແລະ ຖືໂຮງຮຽນດັ່ງກ່າວ ເປັນພາກສ່ວນໜຶ່ງທີ່ສຳຄັນຂອງລະບົບການສຶກສາແຫ່ງຊາດ.

41.3 ສະໜອງນ້ຳສະອາດໃຫ້ແກ່ປະຊາຊົນ ໃຫ້ໄດ້ 80%, ການນຳໃຊ້ວິດຖ່າຍຂອງປະຊາຊົນ ໃຫ້ໄດ້ 54%, ການສັກຢາກັນພະຍາດເດັກນ້ອຍ ໃຫ້ໄດ້ 85%, ອັດຕາການກວດທ້ອງກ່ອນກຳເນີດປະຕິບັດ ໃຫ້ໄດ້ 56,6%, ອັດຕາຊົມໃຊ້ວິທີຄຸມກຳເນີດ ປະຕິບັດໃຫ້ໄດ້ 51%. ນຳໃຊ້ເຕັກນິກ ແລະ ເຕັກໂນໂລຊີທັນສະໄໝ ເຂົ້າໃນການບໍລິການສາທາລະນະສຸກ. ສືບຕໍ່ສ້າງໜ່ວຍສະເພາະກິດປິ່ນປົວພະຍາດເຄື່ອນທີ່ ເພື່ອລົງຊ່ວຍທ້ອງຖິ່ນທີ່ຍັງທຸກຍາກໃຫ້ໄດ້ແຕ່ລະບ້ານ ໂດຍສະເພາະແມ່ນ ເຂດທີ່ມີຄວາມສ່ຽງສູງຕໍ່ການເຈັບເປັນ, ການຕາຍຂອງແມ່ ແລະ ເດັກ ປະມານ 4 ເທື່ອຕໍ່ປີ. ປັບປຸງສຸກສາລາທີ່ມີແລ້ວໃຫ້ມີມາດຕະຖານສູງຂຶ້ນສາມາດໃຫ້ບໍລິການ ແລະ ປິ່ນປົວສຸຂະພາບແກ່ປະຊາຊົນໄດ້ຢ່າງທັນການ, ຍົກສູງຄຸນນະພາບຂອງຄວາມສາມາດປ້ອງກັນພະຍາດ ແລະ ປິ່ນປົວຂອງໂຮງໝໍຊັ້ນຕ່າງໆ; ສືບຕໍ່ກໍ່ສ້າງ ແລະ ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານເພດພະດຸງຄັນ ໂດຍສະເພາະແມ່ນເພດຍິງ, ພະນັກງານແພດໃນການຊ່ວຍເກີດລູກໃຫ້ທົ່ວເຖິງໃນແຕ່ລະທ້ອງຖິ່ນ. ສະໜອງ ແລະ ຍົກລະດັບພະນັກງານແພດທີ່ປະຈຳຢູ່ສຸກສາລາ ໃຫ້ມີແພດຊັ້ນກາງ ແລະ ຊັ້ນສູງ .

41.4 ສ້າງເງື່ອນໄຂໃຫ້ປະຊາຊົນລາວທຸກທົ່ວໜ້າ ມີໂພສະນາການທີ່ດີ ແລະ ສາມາດຄ້ຳປະກັນສະບຽງອາຫານຢ່າງພຽງພໍ, ສຸມໃສ່ແກ້ໄຂບັນຫາການຂາດສານອາຫານ ໃນກຸ່ມຜູ້ດ້ອຍໂອກາດ ແລະ ແມ່ຍິງໃນໄວຈະເລີນພັນ ໂດຍສະເພາະແມ່ນ ແມ່ຍິງຖືພາ, ແມ່ຍິງຫລັງເກີດລູກ ແລະ ລ້ຽງລູກດ້ວຍນົມແມ່, ເດັກທີ່ມີອາຍຸຕ່ຳກວ່າ 5 ປີ ແລະ ເດັກໃນເກນເຂົ້າຮຽນ ເພື່ອຫລຸດຜ່ອນອັດຕາການຂາດສານອາຫານ ແລະ ອັດຕາການຕາຍຂອງແມ່ ແລະ ເດັກ.

41.5 ເຝິກ ແລະ ພັດທະນາສີມືແຮງງານໃຫ້ແກ່ກຳລັງແຮງງານ ໃຫ້ໄດ້ຫລາຍກວ່າ 44 ພັນຄົນ ແລະ ຈັດຫາວຽກເຮັດງານທຳໃໝ່ໃຫ້ແກ່ກຳລັງແຮງງານລາວ ໃຫ້ໄດ້ຫລາຍກວ່າ 55 ພັນຄົນ. ເປີດກວ້າງການຮ່ວມມືກັບທຸກພາກສ່ວນເສດຖະກິດທັງພາຍໃນ ແລະ ຕ່າງປະເທດ ເພື່ອສ້າງເງື່ອນໄຂການມີວຽກເຮັດງານທຳ ແລະ ສົ່ງແຮງງານໄປເຮັດວຽກຢູ່ຕ່າງປະເທດ. ຊຸກຍູ້ສົ່ງເສີມໃຫ້ນັກທຸລະກິດພາຍໃນ

ແລະ ຕ່າງປະເທດ ປະກອບສ່ວນພັດທະນາສີມືແຮງງານ ແລະ ເຝິກອົບຮົມວິຊາຊີບໃຫ້ກຳລັງແຮງງານລາວຢ່າງກວ້າງຂວາງ.

**ມາດຕາທີ 42: ເພີ່ມທະວີການຮ່ວມມືສາກົນ ຕິດພັນກັບການປົກປັກຮັກສາຄວາມສະຫງົບພາຍໃນປະເທດ:**

42.1 ສືບຕໍ່ເປີດກວ້າງການພົວພັນຮ່ວມມື ເພື່ອການພັດທະນາກັບສາກົນ ໂດຍຮັກສາບັນຍາກາດຂອງການຮ່ວມມື ຊ່ວຍເຫລືອກັນກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນຕ່າງໆ ໃຫ້ເປັນປົກກະຕິ ແລະ ໃຫ້ນັບມື້ນັບຂະຫຍາຍຕົວ, ບັນລຸການປະຕິບັດຂໍ້ຜູກພັນສັນຍາຕ່າງໆກັບອົງການສາກົນ, ຍົກສູງປະສິດທິຜົນຂອງການຮ່ວມມືໂດຍເລັ່ງໃສ່ປັບປຸງຂະບວນການໂຕະມົນ ແລະ ປັບປຸງບັນດາກົນໄກຄຸ້ມຄອງທຶນ, ນຳໃຊ້ການຊ່ວຍເຫລືອ ເພື່ອການພັດທະນາໃຫ້ມີປະສິດທິຜົນ; ຮັບປະກັນການປະຕິບັດແນວທາງການຕ່າງປະເທດໃນການເປີດກວ້າງການພົວພັນກັບບັນດາປະເທດ ແລະ ອົງການຈັດຕັ້ງສາກົນແບບຫລາຍທິດ-ຫລາຍຝ່າຍ ແລະຫລາຍລະດັບ ບົນພື້ນຖານການຢຶດໝັ້ນຜົນປະໂຫຍດຂອງຊາດ; ພ້ອມທັງສ້າງສະພາບແວດລ້ອມເອື້ອອຳນວຍໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາປະເທດຊາດຢ່າງເປັນເຈົ້າການ; ເພີ່ມທະວີການພົວພັນມິດຕະພາບ, ຄວາມສາມັກຄີພິເສດ ແລະ ການຮ່ວມມືຮອບດ້ານກັບ ສ.ສ ຫວຽດນາມ, ເສີມຂະຫຍາຍສາຍພົວພັນທີ່ ເປັນມູນເຊື້ອກັບ ສປ ຈີນ ບົນຈິດໃຈເປັນເພື່ອນມິດທີ່ດີ ແລະ ເປັນຄູ່ຮ່ວມມືທີ່ໄວ້ວາງໃຈ, ພົວພັນຮ່ວມມືກັບບັນດາປະເທດໃກ້ຄຽງທີ່ມີຊາຍແດນຮ່ວມກັນ, ຕັ້ງໜ້າເຂົ້າຮ່ວມການເຄື່ອນໄຫວຂອງອາຊຽນບົນພື້ນຖານຜົນປະໂຫຍດລວມ ແລະ ຊ່ວຍເຫລືອເຊິ່ງກັນ ແລະ ກັນຕາມຫລັກການພື້ນຖານຂອງອາຊຽນ.

42.2 ເພີ່ມທະວີການປັບປຸງ, ກໍ່ສ້າງກຳລັງປະກອບອາວຸດ ປກຊ-ປກສ ໃຫ້ໜັກແໜ້ນເຂັ້ມແຂງ. ເອົາໃຈໃສ່ຕໍ່ການປະກອບພາຫະນະ ແລະ ອຸປະກອນຮັບໃຊ້ວຽກງານໃຫ້ກຳລັງ ປກຊ ຢູ່ບັນດາພື້ນທີ່ຈຸດສຸມສຳຄັນ, ພູດອຍ, ຊາຍແດນ ເພື່ອມີເງື່ອນໄຂພຽງພໍ ໃຫ້ການສະກັດກັ້ນ ແລະ ຕ້ານທຸກກໍລະນີທີ່ສັບສົນ ແລະ ກໍ່ຄວາມບໍ່ສະຫງົບທາງການເມືອງ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ; ເອົາໃຈໃສ່ຄຸ້ມຄອງ, ປ້ອງກັນຊາຍແດນ, ເຂດດ່ານຟ້າ ຂອງປະເທດຊາດ ໂດຍການສ້າງເຂດເສດຖະກິດປ້ອງກັນຊາດຕ່າງໆ ຢູ່ບັນດາພື້ນທີ່ຍຸດທະສາດ, ສຸມໃສ່ກໍ່ສ້າງພື້ນຖານໂຄງລ່າງເສດຖະກິດ-ສັງຄົມ ຢູ່ຕາມເສັ້ນຊາຍແດນຕ່າງໆ ໂດຍສະເພາະແມ່ນຢູ່ບັນດາເຂດຍຸດທະສາດ, ຊຸກຍູ້ການກໍ່ສ້າງລະບົບເສັ້ນທາງກວດກາລາດຕະເວນຕາມຊາຍແດນທິດຕາເວັນຕົກ, ເສັ້ນທາງອອກສູ່ຊາຍແດນ ແລະ ສ້າງລະບົບຄ້າຍປ້ອງກັນຊາຍແດນ.

42.3 ປຸກລະດົມພໍ່ແມ່ປະຊາຊົນປະກອບສ່ວນເຂົ້າໃນວຽກງານປ້ອງກັນຄວາມສະຫງົບ ຖືເອົາວຽກງານປ້ອງກັນຄວາມສະຫງົບເປັນໜ້າທີ່ການເມືອງ ແລະ ເປັນຄວາມຮັບຜິດຊອບຂອງພົນລະເມືອງທຸກຄົນ; ຕ້ອງສະດຸ້ງໄວ ແລະ ຄົ້ນຄວ້າກັນແຕ່ຫົວທີ ເພື່ອຊອກຫາຈຸດຊ່ອງຫວ່າງ ຫລື ສັດຕູ ແລະ ຄົນບໍ່ດີອາດຈະແຊກແຊງພາຍໃນ ໂດຍຜ່ານກົນໄກຮ່ວມມື ແລະ ການລົງທຶນຂອງຕ່າງປະເທດ; ເພີ່ມທະວີພື້ນຖານວັດຖຸ, ເຕັກນິກໃຫ້ແກ່ການປະຕິບັດໂຄງການແຫ່ງຊາດ ກ່ຽວກັບການປ້ອງກັນຜູ້ລະເມີດກົດໝາຍ, ປາບປາມຢາເສບຕິດ, ຄວາມປອດໄພທາງຄົມມະນາຄົມ, ດັບເພີງ, ເພີ່ມທະວີຄວາມສາມາດຂອງກຳລັງໃນການແກ້ໄຂ ເຊັ່ນ: ໄພທຳມະຊາດ ແລະ ການກໍ່ອາດສະຍາກຳປະເພດຕ່າງໆ; ສືບຕໍ່ສົ່ງພະນັກງານລົງກໍ່ສ້າງຮາກຖານ ພັດທະນາບ້ານຢ່າງຕໍ່ເນື່ອງ, ປັບປຸງກຳລັງກອງຫລອນ-ປກສ ຂັ້ນບ້ານ ແລະ ກຸ່ມບ້ານໃຫ້ເປັນລະບົບຄົບຊຸດ ແລະ ມີຄວາມເຂັ້ມແຂງທາງດ້ານວິຊາສະເພາະ.

**ມາດຕາທີ 43: ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສັກສິດຂອງການຄຸ້ມຄອງລັດ ຕໍ່ເສດຖະກິດ-ສັງຄົມ:**

43.1 ເພີ່ມທະວີວຽກງານໂຄສະນາອົບຮົມ, ໂຄສະນາເຜີຍແຜ່ ມະຕິ 9 ຂອງພັກ, ມະຕິຕົກລົງຂອງສະພາແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ VII, ບັນດາລະບຽບກົດໝາຍ ໃຫ້ພະນັກງານລັດຖະກອນຂັ້ນຜູ້ບໍລິຫານ, ຂັ້ນວິຊາການ ແລະ ປະຊາຊົນບັນເຜົ່າ ເພື່ອໃຫ້ເຂົ້າໃຈຢ່າງເລິກຊຶ້ງ ເປັນໄປຕາມນະໂຍບາຍຂອງພັກ-ລັດ ແລະ ລະບຽບກົດໝາຍ.

43.2 ຍົກສູງຄວາມຮັບຜິດຊອບ ແລະ ເປັນເຈົ້າການຂອງຂະແໜງການ ແລະ ທ້ອງຖິ່ນ ໃນການເຄົາລົບ ແລະ ປະຕິບັດລະບຽບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ ແລະ ສັງຄົມ, ເພີ່ມທະວີວຽກງານ ຕິດຕາມ, ກວດກາຢູ່ທຸກຂົງເຂດລັດ; ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫລວງ ແລະ ເພີ່ມທະວີຄວາມສັກສິດ ໃນການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍລະບຽບກົດໝາຍ ໃຫ້ເຂັ້ມງວດຂຶ້ນ.

43.3 ເອົາໃຈໃສ່ຝຶກຝົນຫລໍ່ຫລອມທາງດ້ານຄຸນສົມບັດຂອງພະນັກງານ, ສະມາຊິກພັກທຸກຂັ້ນ, ປັບປຸງແບບແຜນດໍາລົງຊີວິດ, ຄວາມເປັນແບບຢ່າງ, ຕ້ານບັນດາປະກົດການຫຍໍ້ທໍ້ທາງສັງຄົມ ເປັນຕົ້ນ ແມ່ນການສໍ້ລາດບັງຫລວງ, ຢາເສບຕິດ, ອຸບັດຕິເຫດຕາມທ້ອງຖະໜົນ ແລະ ອື່ນໆ ໂດຍປຸກລະດົມທຸກຊັ້ນຄົນທຸກເພດໄວເຂົ້າຮ່ວມໃນຂະບວນການດັ່ງກ່າວ ດ້ວຍຫລາຍຮູບຫລາຍສີ ຢ່າງແຂງແຮງ.

43.4 ເອົາໃຈໃສ່ພັດທະນາຄວາມຮູ້ຄວາມສາມາດ ຂອງພະນັກງານລັດຖະກອນຂັ້ນຕ່າງໆ ໃນຂະແໜງການ ແລະ ທ້ອງຖິ່ນຕົນ ເພື່ອໃຫ້ສາມາດຕອບສະໜອງໃນການຄຸ້ມຄອງເສດຖະກິດ-ສັງຄົມ ໃນສະເພາະໜ້າ ແລະ ຍາວນານ ໂດຍຖືສໍາຄັນທາງດ້ານຄຸນນະພາບ, ຮັບປະກັນລັກສະນະຊົນຊັ້ນຂອງພັກ, ມີຫລັກໝັ້ນການເມືອງໜັກແໜ້ນ, ມີຄຸນສົມບັດປະຕິວັດ, ມີຄວາມສາມາດນໍາພາ-ຄຸ້ມຄອງເສດຖະກິດ-ສັງຄົມໃນລະດັບແນ່ນອນ.

43.5 ນໍາໃຊ້ບັນດາສູນຝຶກອົບຮົມຂອງແຕ່ລະຂະແໜງການທີ່ມີ ເພື່ອເປັນສະຖາບັນຍົກລະດັບຄວາມຮູ້-ຄວາມສາມາດດ້ານວິຊາສະເພາະຂອງຂະແໜງການຕົນ; ດຶງດູດ ແລະ ຍາດແຍ່ງເອົາທຶນຮອບລວມທັງບົດຮຽນ ຈາກບັນດາປະເທດເພື່ອນມິດ, ປະເທດຕ່າງໆຕະຫລອດເຖິງບັນດາອົງການ ແລະ ປະເທດຜູ້ໃຫ້ທຶນຕ່າງໆ ເພື່ອຍາດແຍ່ງຄວາມຮູ້ທີ່ສອດຄ່ອງກັບຍຸກແຫ່ງການເຊື່ອມໂຍງເສດຖະກິດຢ່າງແທ້ຈິງ.

**ມາດຕາທີ 44: ການຈັດຕັ້ງປະຕິບັດໂຄງການລົງທຶນຂອງລັດ, ການແບ່ງຄວາມຮັບຜິດຊອບ ແລະ ກົນໄກການປະສານງານແບ່ງຂັ້ນຄຸ້ມຄອງ:**

44.1 ການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດ ສົກປີ 2010-2011 ຕ້ອງປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ ສະບັບເລກທີ 08/ສພຊ, ລົງວັນທີ 26 ພະຈິກ 2009 ຢ່າງເຂັ້ມງວດ; ຫ້າມບໍ່ໃຫ້ຂະແໜງການ ແລະ ທ້ອງຖິ່ນ ເຮັດໂຄງການລົງທຶນນອກແຜນທີ່ສະພາແຫ່ງຊາດໄດ້ຮັບຮອງ; ທຸກອົງການຈັດຕັ້ງທີ່ໄດ້ຮັບການເບີກຈ່າຍຈາກງົບປະມານຂອງລັດ ຕ້ອງປະຕິບັດຕາມຮ່ວງລາຍຈ່າຍຂອງແຜນງົບປະມານທີ່ສະພາແຫ່ງຊາດໄດ້ຮັບຮອງເອົາແລ້ວຢ່າງເຄັ່ງຄັດ; ຖ້າມີການລະເມີດຈະຖືກປະຕິບັດວິໄນຕາມລະບຽບການ ແລະ ລັດຖະບານຈະບໍ່ຮັບຮູ້ໂຄງການລົງທຶນຂອງລັດທີ່ບໍ່ໄດ້ປະຕິບັດຕາມກົດໝາຍວ່າດ້ວຍການລົງທຶນຂອງລັດ.

44.2 ການຄິດໄລ່-ອອກແບບ ແລະ ປະເມີນມູນຄ່າໂຄງການລົງທຶນຂອງລັດ ຕ້ອງອີງໃສ່ຫຼັກວິຊາການ, ໃຫ້ມີການປະເມີນ ແລະ ຢັ້ງຢືນຈາກໜ່ວຍງານວິຊາການຂອງລັດຢ່າງຄັກແນ່; ຈຳກັດທຸກຮູບການສວຍໂອກາດ ເພື່ອເພີ່ມມູນຄ່າໂຄງການແບບບໍ່ສົມເຫດສົມຜົນ; ຫ້າມທຸກຮູບການປະມູນ, ການຈັດຊື້ ແລະ ການຈັດຈ້າງ ທີ່ບໍ່ຖືກຕ້ອງຕາມດຳລັດເລກທີ 03/ນຍ ລົງວັນທີ 09/01/2004 ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະ ການບໍລິການດ້ວຍທຶນຂອງລັດ. ສຳລັບໂຄງການທີ່ມີເງື່ອນໄຂ, ມີຜົນຕອບແທນທາງດ້ານເສດຖະກິດສູງ ຊຸກຍູ້ໃຫ້ເອກະຊົນລົງທຶນດ້ວຍຮູບແບບກໍ່ສ້າງ-ດຳເນີນການ-ມອບໂອນໃຫ້ລັດຖະບານ (BOT) ໂດຍໃຫ້ຂະແໜງການກ່ຽວຂ້ອງຄົ້ນຄວ້າຄັກແນ່ ຕາມລະບຽບກົດໝາຍ.

44.3 ໃນຂັ້ນຕອນເຈລະຈາຮ່າງສັນຍາ ຮັບເໝົາກໍ່ສ້າງ ແລະ ຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ ຕ້ອງໃຫ້ຂະແໜງແຜນການ ແລະ ການລົງທຶນ ແລະ ຂະແໜງການເງິນ ເຂົ້າຮ່ວມຕັ້ງແຕ່ຕົ້ນ ເພື່ອເບິ່ງຄວາມສາມາດຂອງງົບປະມານ ແລະ ລະບຽບການທາງດ້ານແຜນການ-ການເງິນ; ພ້ອມກັນນັ້ນ, ທຸກການສະເໜີຂໍເບີກຈ່າຍຄ່າໂຄງການ ແລະ ສັນຍາຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ (ປະເພດ 1, 2 ແລະ 3) ຕ້ອງໄດ້ຮັບການເຊັນຢັ້ງຢືນຈາກຂະແໜງແຜນການ ແລະ ການລົງທຶນ ຈຶ່ງຖືວ່າໃຊ້ໄດ້.

44.4 ທຸກໆໂຄງການຂອງກະຊວງ-ອົງການ ທີ່ກ່ຽວຂ້ອງກັບເປົ້າໝາຍພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ທີ່ໄປຈັດຕັ້ງປະຕິບັດຢູ່ທ້ອງຖິ່ນ ຕ້ອງໄດ້ແຈ້ງໃຫ້ອຳນາດການປົກຄອງທ້ອງຖິ່ນຮັບຮູ້ ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດຕາມຂອບເຂດສິດຢ່າງເໝາະສົມ.

44.5 ອຳນາດການປົກຄອງທ້ອງຖິ່ນ ຕ້ອງໄດ້ປຸກລະດົມປະຊາຊົນປະກອບສ່ວນດ້ານທຶນຮອນ, ແຮງງານ ແລະ ວັດສະດຸຂອງທ້ອງຖິ່ນ ເຂົ້າໃສ່ໂຄງການລົງທຶນຂອງລັດຢ່າງຕັ້ງໜ້າ, ຕາມຂອບເຂດຂອງລະບຽບກົດໝາຍທີ່ກ່ຽວຂ້ອງ. ໃຫ້ຖືໂຄງການທີ່ມີທຶນສົມທົບຂອງປະຊາຊົນ ເປັນບູລິມະສິດໜຶ່ງ ສຳລັບການລົງທຶນ.

44.6 ຂະແໜງການ ແລະ ທ້ອງຖິ່ນໃດ ຫາກມີແຫລ່ງທຶນອື່ນ ເພື່ອຊຳລະໃຫ້ໂຄງການລົງທຶນຂອງລັດ ຂໍໃຫ້ແຈ້ງເຖິງກະຊວງແຜນການ ແລະ ການລົງທຶນ ຮັບຊາບໃນນາມເປັນຜູ້ຄຸ້ມຄອງ ແລະ ດັດສົມດ້ານການພັດທະນາ ແລະ ລົງທຶນຂອງລັດ ເພື່ອໃຫ້ສາມາດຕິດຕາມການຊຳລະຄ່າໂຄງການລົງທຶນຂອງລັດໄດ້.

44.7 ໃຫ້ປະຕິບັດຕາມກົດໝາຍງົບປະມານແຫ່ງລັດ, ກົດໝາຍການລົງທຶນຂອງລັດ, ກົດໝາຍປົກຄອງທ້ອງຖິ່ນ ແລະ ກົດໝາຍອື່ນໆ ທີ່ກຳນົດໄວ້ແລ້ວຢ່າງເຂັ້ມງວດ, ປະຕິບັດການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ, ລະຫວ່າງຂະແໜງການດ້ວຍກັນ ຕາມສິດ ແລະ ພາລະບົດບາດທີ່ໄດ້ກຳນົດໄວ້.

44.8 ກະຊວງ-ອົງການກ່ຽວຂ້ອງຂັ້ນສູນກາງເຮັດບົດບາດຊຸກຍູ້, ຕິດຕາມ ແລະ ການປະຕິບັດໂຄງການລົງທຶນຂອງລັດຂອງທ້ອງຖິ່ນ. ໂຄງການໃຫຍ່ລະດັບຊາດ (Mega project ) ແມ່ນລັດຖະບານເປັນຜູ້ຄຸ້ມຄອງໂດຍມອບໃຫ້ກະຊວງ-ອົງການຂັ້ນສູນກາງກ່ຽວຂ້ອງເປັນຜູ້ປະຕິບັດ. ສຳລັບໂຄງການປະເພດ 1 ແລະ 2 ມອບໃຫ້ຂະແໜງການ ແລະ ທ້ອງຖິ່ນເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດ; ໂຄງການປະເພດ 1 ທີ່ກວມເອົາຫລາຍແຂວງ ແມ່ນກະຊວງ-ອົງການຂັ້ນສູນກາງທີ່ກ່ຽວຂ້ອງເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດ ແຕ່ ຖ້າໂຄງການຕັ້ງຢູ່ແຂວງດຽວ ແມ່ນມອບໃຫ້ແຂວງທີ່ໂຄງການຕັ້ງຢູ່ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດ.

44.9 ສຳລັບການຄຸ້ມຄອງໂຄງການປະເພດ 3 ໃນສົກປີນີ້ໃຫ້ແຂວງ ແລະ ນະຄອນຫລວງ ມອບໃຫ້ໜຶ່ງເມືອງ (ເມືອງປະເພດ I) ຂອງຕົນ ທີ່ເຫັນວ່າມີລະດັບການຄຸ້ມຄອງດີ, ມີຄວາມພ້ອມທາງດ້ານບຸກຄະລາກອນ ເປັນຜູ້ຄຸ້ມຄອງຈັດຕັ້ງປະຕິບັດ ເຊິ່ງແຂວງ ແລະ ນະຄອນຫລວງໃຫ້ການຊ່ວຍເຫລືອທາງດ້ານວິຊາການ, ຕິດຕາມ, ຊຸກຍູ້ ແລະ ກວດກາການຈັດຕັ້ງປະຕິບັດຂອງເມືອງ; ຈາກນັ້ນຖ້າເຫັນວ່າມີປະສິດຜົນໃນສົກປີຕໍ່ໄປຈຶ່ງຄົ້ນຄ້ວາເພື່ອຂະຫຍາຍໄປສູ່ເມືອງອື່ນ.

44.10 ອົງການປົກຄອງທ້ອງຖິ່ນ ມີຄວາມຮັບຜິດຊອບໂດຍກົງໃນການຈັດຕັ້ງປະຕິບັດແຜນການລົງທຶນຂອງລັດໃນຂັ້ນຂອງຕົນ ໃຫ້ຖືກຕ້ອງຕາມລະບຽບກົດໝາຍ ແລະ ມີປະສິດທິຜົນ. ໃນກໍລະນີ ທີ່ບັນດາກະຊວງ ແລະ ອົງການ ໄດ້ມອບໂຄງການລົງທຶນຂອງລັດໃຫ້ທ້ອງຖິ່ນຈັດຕັ້ງປະຕິບັດນັ້ນ ກໍ່ໃຫ້ທ້ອງຖິ່ນນັ້ນ ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາທີ 45: ການແກ້ໄຂໜີ້ສິນໃນສົກປີ 2010-2011, ໃຫ້ປະຕິບັດດັ່ງນີ້:**

45.1 ໃຫ້ຄະນະແກ້ໄຂໜີ້ສິນຂອງລັດຖະບານ ສືບຕໍ່ເກັບກຳ ແລະ ກວດກາຄວາມຖືກຕ້ອງຂອງໜີ້ສິນທັງໝົດໃຫ້ສຳເລັດ ແລະ ແຍກໃຫ້ເຫັນລະອຽດແຕ່ລະປະເພດໜີ້ ເພື່ອຈັດໂຄງສ້າງໜີ້ສິນ ແລະ ຈັດບູລິມະສິດໃນການແກ້ໄຂ ແລ້ວນຳສະເໜີຕໍ່ລັດຖະບານ; ພ້ອມກັນນັ້ນ ກໍໃຫ້ຈັດກອງປະຊຸມຮ່ວມກັບບັນດາຂະແໜງການ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງເພື່ອຄົ້ນຄ້ວາແຫຼ່ງທຶນ ແລະ ຊອກວິທີການແກ້ໄຂທີ່ເໝາະສົມ, ຈັດບູລິມະສິດໜີ້ສິນຕ້ອງຊຳລະໃນສົກປີງົບປະມານຕໍ່ໜ້າ ໃຫ້ທັນການ ແລະ ຖືກທິດ.

45.2 ໃຫ້ແຕ່ລະຂະແໜງການ ແລະ ທ້ອງຖິ່ນ ທີ່ມີໜີ້ສິນ ຈັດຕັ້ງປະຕິບັດການຊຳລະໜີ້ໂຄງການລົງທຶນຕາມແຜນທີ່ສະພາອະນຸມັດຢ່າງເຂັ້ມງວດ, ບໍ່ເຮັດໂຄງການນອກການຕົກລົງຂອງສະພາແຫ່ງຊາດ. ການປະຕິບັດໂຄງການ ແລະ ການຊຳລະຈ່າຍໂຄງການນອກການຕົກລົງຂອງສະພາແຫ່ງຊາດ ແລະ ລັດຖະບານ ຖືເປັນຄວາມຜິດທາງວິໄນບໍລິຫານ, ເວັ້ນເສຍແຕ່ເງິນດັ່ງກ່າວບໍ່ນອນໃນງົບປະມານຂອງລັດຖະບານ.

45.3 ການແກ້ໄຂໜີ້ໂຄງການລົງທຶນຂອງລັດໃຫ້ປະຕິບັດ ຕາມທິດທາງແກ້ໄຂໜີ້ສິນ, ຫລັກການ ແລະ ແຫລ່ງທຶນ ຄືດັ່ງນີ້:

+ <u>ດ້ານຫລັກການ:</u> ກ). ການຊຳລະແມ່ນປະຕິບັດຕາມຫລັກການຄວາມເປັນເອກະພາບ, ຍຸຕິທຳໂດຍເອົາອັດຕາສ່ວນຂອງທຶນ ທີ່ໄດ້ແຕ່ລະປີມາຈັດສັນໃຫ້, ຂ). ແກ້ໄຂໜີ້ສິນຕ້ອງລວມສູນຢູ່ບ່ອນດຽວ ໂດຍຜ່ານຄະນະແກ້ໄຂໜີ້ສິນຂອງລັດຖະບານເປັນຜູ້ຈັດສັນ, ຄ). ສ້າງເປັນແຜນງົບປະມານແກ້ໄຂໜີ້ສິນປະຈຳປີ ໂດຍຄຳນຶງເຖິງສະພາບຄ່ອງຕົວໃນລະບົບຄັງເງິນແຫ່ງຊາດ ແລະ ສະຖຽນລະພາບທາງດ້ານການເງິນ ເງິນຕາເປັນຫລັກ ແລ້ວສະເໜີຜ່ານລັດຖະບານ ຈຶ່ງປະຕິບັດຕາມການຕົກລົງ, ງ). ບູລິມະສິດຕໍ່ບາງໂຄງການທີ່ລັດເປັນໜີ້ ມີຄື ດັ່ງນີ້: (1). ແກ້ໄຂໃຫ້ຜູ້ລົງທຶນ ຫລື ພາກສ່ວນທີ່ເປັນໜີ້ຍາວນານ, (2). ແກ້ໄຂໃຫ້ຜູ້ລົງທຶນໃສ່ໂຄງການ ທີ່ມີປະສິດທິຜົນທາງດ້ານເສດຖະກິດສູງ ແລະ ໄດ້ຮັບຜົນຕອບແທນໄວ, (3). ແກ້ໄຂໃຫ້ພາກສ່ວນທຸລະກິດທີ່ມີໜີ້ສິນຫລາຍ, ມີຄວາມຫຍຸ້ງຍາກທາງດ້ານການເງິນໜັກໜ່ວງ ເພື່ອໃຫ້ພາກສ່ວນດັ່ງກ່າວມີທຶນຮອນສືບຕໍ່ດຳເນີນທຸລະກິດ ແລະ ເຮັດພັນທະຕໍ່ລັດຖະບານ.

+ <u>ດ້ານແຫລ່ງທຶນເພື່ອແກ້ໄຂໜີ້ສິນ:</u> ກ). ຈາກງົບປະມານການລົງທຶນຂອງລັດ, 35% ຂອງທຶນທີ່ແຕ່ລະພາກສ່ວນໄດ້ຮັບ ໃນກໍລະນີທີ່ແຂວງ ຫລື ກະຊວງມີໜີ້, ຂ). ເງິນເກີນແຜນລາຍຮັບທີ່ເປັນພູດຂອງແຂວງ ໃນແຕ່ລະປີ ໃຫ້ນຳໃຊ້ເຂົ້າໃນການແກ້ໄຂໜີ້ສິນ ຢ່າງຕ່ຳ 50%, ເຫຼືອນັ້ນ ຈຶ່ງນຳໃຊ້ໃນວຽກງານ

ອື່ນ. ຄ). ຫັນໂຄງການທີ່ລັດເປັນໜີ້ໃຫ້ເປັນທຶນໂດຍໃຫ້ເຈົ້າໜີ້ເຂົ້າໄປດໍາເນີນກິດຈະການໃນໂຄງການທີ່ເປັນໜີ້ນັ້ນ, ງ). ຫັນຊັບສິນທີ່ດິນເປັນທຶນ, ຈ). ຫັນເອົາໂຄງການເປັນທຶນ ໂດຍສະເພາະໂຄງການຂະໜາດໃຫຍ່ ເຊັ່ນ: ໂຄງການບໍ່ແຮ່ທີ່ໄດ້ສໍາຫລວດ ແລະ ອະນຸມັດແລ້ວ ຕາມການຕົກລົງຂອງລັດຖະບານ.

+ <u>ການແບ່ງຄວາມຮັບຜິດຊອບ:</u> ສືບຕໍ່ຊໍາລະໜີ້ຕາມເປົ້າໝາຍ ແລະ ແຫຼ່ງທຶນ ທີ່ສະພາແຫ່ງຊາດໄດ້ຮັບຮອງ ໂດຍແບ່ງຄວາມຮັບຜິດຊອບນໍາກັນດັ່ງນີ້: ໜີ້ໂຄງການລົງທຶນຂອງລັດ ແມ່ນມອບໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນຜູ້ຄຸ້ມຄອງ ໂດຍສົມທົບກັບກະຊວງການເງິນ ໃນການຊໍາລະໃນແຕ່ລະສົກປີ; ໜີ້ບໍລິຫານ ແລະ ໜີ້ຕ່າງປະເທດ ມອບໃຫ້ກະຊວງການເງິນ ເປັນຜູ້ຄຸ້ມຄອງ ແລະຊໍາລະ; ໜີ້ບູລິມະສິດຂອງລັດຖະບານ ແມ່ນຊໍາລະຕາມການຕົກລົງຂອງລັດຖະບານ; ໜີ້ທີ່ຂະແໜງການ ແລະ ທ້ອງຖິ່ນ ກູ້ຢືມຈາກທະນາຄານ ແຫ່ງ ສປປ ລາວ ແມ່ນໃຫ້ຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງຖືເປັນບູລິມະສິດອັນດັບໜຶ່ງໃນການຈັດສັນທຶນເພື່ອຊໍາລະຕາມສັນຍາ ແລະ ໃຫ້ປັບປຸງການເຊັນສັນຍາໃຫ້ເປັນລັກສະນະສາມແຈ ຄືນໃໝ່ ໝາຍຄວາມວ່າ ຕ້ອງມີການເຊັນສັນຍາ ລະຫວ່າງກະຊວງ ຫລື ແຂວງ (ຜູ້ກູ້ຢືມ), ທະນາຄານແຫ່ງ ສປປ ລາວ (ຜູ້ປ່ອຍກູ້) ແລະ ກະຊວງແຜນການ ແລະ ການລົງທຶນ (ຜູ້ຄໍ້າປະກັນການຊໍາລະ).

**ມາດຕາທີ 46: ການຈັດຕັ້ງປະຕິບັດງົບປະມານແຫ່ງລັດ:**

46.1 ເອົາໃຈໃສ່ຄົ້ນຄວ້າອອກນິຕິກໍາ ແລະ ມາດຕະການຕົວຈິງໃນການຄຸ້ມຄອງລາຍຮັບວິຊາການ, ກອງທຶນພັດທະນາ, ເງິນຊ່ວຍເຫຼືອຂອງບັນດາຫົວໜ່ວຍງົບປະມານຂອງລັດ. ຄົ້ນຄວ້າລະບຽບການຄຸ້ມຄອງລາຍຈ່າຍດັ່ງກ່າວໃຫ້ສອດຄ່ອງ ແລະ ຮັດກຸມ ຮັບປະກັນການຮັບໃຊ້ວຽກງານວິຊາການຂອງແຕ່ລະຫົວໜ່ວຍວິຊາການຕ່າງໆ. ໃນກໍລະນີຫາກກວດເຫັນການລະເມີດລະບຽບກົດໝາຍໃນບັ້ນກວດສອບຄັ້ງຕໍ່ໄປ ແມ່ນໃຫ້ປະຕິບັດມາດຕະການ ໂດຍຫັກອອກຈາກງົບປະມານທີ່ຈະໄດ້ຈັດແບ່ງໃຫ້ໃນສົກງົບປະມານປີຕໍ່ໄປ ແຕ່ 50% ຫາ 100% ຂອງຈໍານວນເງິນ ທີ່ຫົວໜ່ວຍງົບປະມານໄດ້ໃຊ້ຈ່າຍໄປລວມທັງສໍາຫລວດກວດກາຄວາມຮັບຜິດຊອບດ້ານການເມືອງ ຂອງຜູ້ຮັບຜິດຊອບໃຫ້ຫົວໜ່ວຍງົບປະມານນັ້ນໆ.

46.2 ສໍາລັບລາຍຈ່າຍ ບ້ວງເງິນ 51,849 ຕື້ກີບ ຊຶ່ງປະກອບມີບ້ວງເງິນ ໃຫ້ເກັບກູ້ຄືນບ້ວງທີ່ຍັງເຫລືອຈ່າຍ ຂອງກະຊວງ-ອົງການ ແລະ ທ້ອງຖິ່ນ ຈໍານວນ 26,385 ຕື້ກີບ ແລະ ບ້ວງເງິນຫັກຄືນ 20% ຈາກການຈ່າຍນອກແຜນ 25,464 ຕື້ກີບ ຊຶ່ງສະພາແຫ່ງຊາດໄດ້ຈັດແບ່ງໃຫ້ຈ່າຍຢູ່ພາກບໍລິຫານ 9,1 ຕື້ກີບແລະ ພາກລົງທຶນຂອງລັດ 42,789 ຕື້ກີບ; ເງິນບ້ວງດັ່ງກ່າວນີ້ ໃຫ້ແຍກອອກເປັນບ້ວງສະເພາະ ແລະ ໃຫ້ຈັດຕັ້ງປະຕິບັດໃນ 6 ເດືອນທ້າຍສົກປີ.

46.3 ເລັ່ງລັດປະຕິບັດຢ່າງເດັດຂາດຫຼັກການລວມສູນບັນຊີດຽວ ຂອງຄັງເງິນແຫ່ງຊາດ, ເອົາໃຈໃສ່ເກັບອາກອນລາຍໄດ້ບຸກຄົນ ແລະ ລາຍຮັບຈາກກິດຈະກໍາອະສັງຫາລິມາຊັບທີ່ຊື້-ຂາຍ ຫຼື ແລກປ່ຽນໃນປະເທດ, ເອົາລາຍຮັບວິຊາການ ແລະ ລາຍຮັບກອງທຶນທຸກປະເພດເຂົ້າລວມສູນ, ຫຼີກເວັ້ນການສວຍໂອກາດຈິດຮັບ-ຈິດຈ່າຍຢູ່ໃນກະຊວງ-ຂະແໜງການ ແລະ ທ້ອງຖິ່ນ ເຊິ່ງເປັນການລະເມີດ ກົດໝາຍວ່າດ້ວຍງົບປະມານ, ຈັດຕັ້ງປະຕິບັດກົດໝາຍອາກອນມູນຄ່າເພີ່ມ ໂດຍສະເພາະແມ່ນ ຄວບຄຸມລະບຽບສົ່ງຄືນອາກອນມູນຄ່າເພີ່ມໃຫ້ຖືກຕ້ອງຕາມລະບຽບກົດໝາຍ.

46.4 ທຸກຂະແໜງການ ແລະ ທ້ອງຖິ່ນ ປະຕິບັດຕົວເລກລາຍຮັບ-ລາຍຈ່າຍທີ່ໄດ້ແບ່ງປັນໃຫ້ ຢ່າງເຂັ້ມງວດ ໂດຍຮັບປະກັນການປະຕິບັດລາຍຮັບໃຫ້ໄດ້ຕາມແຜນ ຫລື ລື່ນແຜນຂອງຕົນ, ຄວບຄຸມລາຍຈ່າຍໄປຕາມຕົວເລກທີ່ສະພາແຫ່ງຊາດ ອະນຸມັດຢ່າງເຄັ່ງຄັດ ພ້ອມດຽວກັນ ກໍ່ຕ້ອງປະຕິບັດລະບຽບການຄວບຄຸມພາຍໃນຢ່າງເຂັ້ມງວດ, ປັບປຸງລະບົບບັນຊີງົບປະມານ ແລະ ລະບົບບັນຊີຄັງເງິນແຫ່ງຊາດໃຫ້ເຂົ້າສູ່ຄວາມເປັນເອກະພາບ; ພ້ອມກັນນັ້ນ, ກໍ່ປັບປຸງບັນຊີງົບປະມານຢູ່ບັນດາຫົວໜ່ວຍງົບປະ ມານໃຫ້ຖືກຕ້ອງຕາມກົດໝາຍວ່າດ້ວຍການບັນຊີ. ປະຕິບັດນະໂຍບາຍປະຢັດມັດທະຍັດ ທົ່ວສັງຄົມ, ແກ້ໄຂຂອດຕົກເຮ່ຍເສຍຫາຍຕ່າງໆ ໃນການຈັດເກັບ ແລະ ໃຊ້ຈ່າຍງົບປະມານ ໂດຍການເພີ່ມທະວີການກວດກາ ແລະ ກວດສອບບັນຊີ ໃຫ້ມີຄວາມເຂັ້ມງວດ ຕາມວິໄນແຜນການ-ການເງິນ.

46.5 ສືບຕໍ່ຄົ້ນຄວ້າ ແລະ ປະກາດໃຊ້ນິຕິກຳຈຳນວນໜຶ່ງທີ່ກອງປະຊຸມສະໄໝສາມັນເທື່ອທີ 5, ເທື່ອທີ 6 ແລະ ເທື່ອທີ 7 ຂອງສະພາແຫ່ງຊາດຊຸດທີ VI ໄດ້ຮັບຮອງເອົາ, ເປັນຕົ້ນ ກຳນົດໝາຍແບ່ງປັນລາຍຈ່າຍບໍລິຫານປົກກະຕິ, ນະໂຍບາຍການທັບຊັບສິນເປັນທຶນ, ລະບຽບການຄຸ້ມຄອງ ແລະ ນຳໃຊ້ເງິນທີ່ໄດ້ຈາກການເກັບລາຍຮັບເກີນແຜນ, ລະບຽບການແບ່ງປັນລາຍຮັບພູດສູນກາງ-ທ້ອງຖິ່ນ ເພື່ອໃຫ້ສາມາດນຳໃຊ້ໄດ້ໃນສົກງົບປະມານ 2010-2011 ແລະ 2011-2012 ຕໍ່ໄປ.

**ມາດຕາທີ 47: ວິທີຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ:**

47.1 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ອີງໃສ່ດຳລັດສະບັບນີ້ອອກແຈ້ງການ ແລະ ບົດແນະນຳລະອຽດ ເຖິງບັນດາກະຊວງ, ອົງການທຽບເທົ່າ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ປະຈຳສົກປີ 2010-2011.

47.2 ມອບໃຫ້ຂະແໜງການ ສ້າງບົດແນະນຳ ກ່ຽວກັບວິທີຈັດຕັ້ງປະຕິບັດດຳລັດສະບັບນີ້ ແລະ ສ້າງແຜນດຳເນີນງານລະອຽດດ້ານວິຊາສະເພາະທີ່ກ່ຽວຂ້ອງຂອງຕົນນັບແຕ່ສູນກາງລົງຮອດທ້ອງຖິ່ນ ສຳລັບສົກປີ 2010-2011.

47.3 ມອບໃຫ້ນະຄອນຫລວງວຽງຈັນ ແລະ ແຂວງຕ່າງໆ ອີງໃສ່ບົດແນະນຳຂອງກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງຕ່າງໆ ຄົ້ນຄວ້າອອກບົດແນະນຳໃຫ້ບັນດາພະແນກການອ້ອມຂ້າງ ແລະ ເມືອງຕ່າງໆ ໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນການລົງທຶນຂອງລັດ ສົກປີ 2010-2011 ໃຫ້ມີປະສິດທິຜົນ.

47.4 ມອບໃຫ້ກະຊວງແຜນການ ແລະ ການລົງທຶນ ແລະ ກະຊວງການເງິນ ສົມທົບກັບຂະແໜງການ ແລະ ທ້ອງຖິ່ນຕ່າງໆ ເປັນເຈົ້າການໂຄສະນາເຜີຍແຜ່ກ່ຽວກັບທິດທາງ, ໜ້າທີ່, ຄາດໝາຍ ແລະ ວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມ ແລະ ຄາດໝາຍຂອງແຜນງົບປະມານແຫ່ງລັດ, ປຸກລະດົມ ອົງການຈັດຕັ້ງຂອງລັດທຸກຂັ້ນ, ອົງການຈັດຕັ້ງມະຫາຊົນ, ທຸກພາກສ່ວນເສດຖະກິດ ແລະ ຊັ້ນຄົນຕ່າງໆ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາທີ 48 : ກ່ຽວກັບການປະຕິບັດລະບອບລາຍງານ ໃຫ້ປະຕິບັດດັ່ງນີ້:**

48.1 ໃຫ້ກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ສະຫລຸບລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2010-2011 ແລ້ວປະຕິບັດລະບອບລາຍງານ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍງົບປະມານ, ກົດໝາຍການລົງທຶນຂອງລັດ, ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ.

48.2 ໃຫ້ກະຊວງແຜນການ ແລະ ການລົງທຶນ ສະຫລຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ສົກປີ 2010-2011, ກະຊວງການເງິນ ສະຫລຸບການຈັດຕັ້ງແຜນງົບປະມານແຫ່ງລັດ ສົກປີ 2010-2011 ແລ້ວລາຍງານຕໍ່ລັດຖະບານ.

48.3 ໃຫ້ທະນາຄານແຫ່ງ ສປປ ລາວ ສະຫລຸບລາຍງານກ່ຽວກັບການດຸ່ນດ່ຽງ ແລະ ຄຸ້ມຄອງນະໂຍບາຍການເງິນ-ເງິນຕາ ສົກປີ 2010-2011 ລາຍງານຕໍ່ລັດຖະບານ.

48.4 ໃຫ້ອົງການກວດກາລັດຖະບານ ແລະ ອົງການກວດສອບແຫ່ງລັດ ດຳເນີນການຕິດຕາມ, ກວດກາ ແລະ ກວດສອບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ໂຄງການລົງທຶນຂອງລັດ ຕາມພາລະບົດບາດຂອງຕົນແຕ່ທົ່ວທີ ແລ້ວສະຫລຸບລາຍງາຍຕໍ່ລັດຖະບານ.

## ໝວດທີ V

## ການກະກຽມສ້າງແຜນການ ສົກປີ 2011-2012 ແລະ ໂຄງການສະໜັບສະໜູນ ແຜນການຄັ້ງທີ VII (2011-2015)

**ມາດຕາທີ 49: ກ່ຽວກັບການກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານແຫ່ງລັດ ສົກປີ 2011-2012 ໃຫ້ປະຕິບັດດັ່ງນີ້:**

49.1 ອີງໃສ່ດຳລັດສະບັບນີ້ ມອບໃຫ້ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ກະຊວງກ່ຽວຂ້ອງ ອອກແຈ້ງການ ແລະ ບົດແນະນຳ ເຖິງບັນດາກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງຕ່າງໆ ເພື່ອສ້າງຮ່າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນການລົງທຶນຂອງລັດ ສົກປີ 2011-2012.

49.2 ການສ້າງແຜນສົກປີ 2011-2012 ໃຫ້ອີງໃສ່ຜົນສຳເລັດ ແລະ ຂໍ້ຄົງຄ້າງໃນການຈັດຕັ້ງປະຕິບັດແຜນການໃນໄລຍະຜ່ານມາ, ກົດໝາຍງົບປະມານ, ດຳລັດ 135/ນຍ ວ່າດ້ວຍການສ້າງ ແລະ ຄຸ້ມຄອງແຜນພັດທະນາເສດຖະກິດ-ສັງຄົມ, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ທິດທາງ ໜ້າທີ່ ແລະ ຄາດໝາຍຂອງແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII (2011-2015) ສົມທົບໃສ່ຍຸດທະສາດການພັດທະນາຂະແໜງການ ຫຼື ທ້ອງຖິ່ນຕົນ, ຈຸດພິເສດ, ທ່າແຮງ ແລະ ກາລະໂອກາດຂອງຂະແໜງການ ແລະ ທ້ອງຖິ່ນຕົນ ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າສັງລວມສະເໜີຕໍ່ລັດຖະບານພິຈາລະນາ ເພື່ອນຳສະເໜີສະພາແຫ່ງຊາດຮັບຮອງ.

49.3 ໂຄງການລົງທຶນຂອງລັດທີ່ຈະເອົາເຂົ້າແຜນການ ສົກປີ 2011-2012 ຕ້ອງໄດ້ຜ່ານການປະເມີນຜົນຈາກອົງການ ຫລື ໜ່ວຍການປະເມີນຜົນກ່ອນ ຈຶ່ງສາມາດພິຈາລະນາເອົາແຜນການໄດ້. ການປະເມີນຜົນໃຫ້ປະຕິບັດຕາມມາດຕາ 26 ຂອງກົດໝາຍວ່າດ້ວຍການລົງທຶນຂອງລັດ.

49.4 ກະຊວງແຜນການ ແລະ ການລົງທຶນ ສົມທົບຂະແໜງການ ແລະ ທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງບັນຊີໂຄງການເພື່ອຮຽກເອົາການລົງທຶນ ເພື່ອເປັນເຄື່ອງມືໃນການດຶງດູດການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ.

49.5 ໃນການຄົ້ນຄວ້າປຶກສາຫາລືກ່ຽວກັບການສ້າງແຜນພັດທະນາເສດຖະກິດ-ສັງຄົມ ແລະ ແຜນງົບປະມານຂອງນະຄອນຫລວງວຽງຈັນ ແລະ ແຂວງຕ່າງໆ ໃຫ້ເຊີນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງຂອງຕົນເຂົ້າຮ່ວມນຳ.

49.6 ການສ້າງແຜນງົບປະມານ ແມ່ນຕ້ອງໄດ້ສ້າງຕາມກົດໝາຍງົບປະມານ ສະບັບເລກທີ 02/ສພຊ ລົງວັນທີ 26/12/2006 ຊຶ່ງຕ້ອງສ້າງບົນພື້ນຖານຍຸດທະສາດການເງິນ ໄລະກາງ, ໄລຍະຍາວ ທີ່ລັດຖະບານກຳນົດ ຕາມການຮັບຮອງຂອງສະພາແຫ່ງຊາດ; ພ້ອມກັນນັ້ນ, ໃຫ້ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດ ໃນແຕ່ລະໄລຍະ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ປະຕິບັດຕາມຫລັກການລວມສູນປະຊາທິປະໄຕ ດ້ວຍການເຂົ້າຮ່ວມຂອງຄະນະສະມາຊິກ ສະພາແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ການສ້າງແຜນງົບປະມານ ຕ້ອງເລີ່ມຈາກຫົວໜ່ວຍຮາກຖານ ຕາມຄຳສັ່ງ, ຕົວເລກຊີ້ນຳຂອງລັດຖະບານ ແລະ ຄຳສັ່ງແນະນຳຂອງລັດຖະມົນຕີວ່າການກະຊວງການເງິນ.

49.7 ການສ້າງແຜນງົບປະມານ ຕ້ອງຕອບສະໜອງໄດ້ລະດັບຄາດໝາຍດັ່ງນີ້: ຕ້ອງສ້າງຂຶ້ນບົນພື້ນຖານດ້ານລາຍຈ່າຍທີ່ຂັ້ນເທິງຂອງຕົນກຳນົດໃຫ້, ບົນພື້ນຖານການແບ່ງຄວາມຮັບຜິດຊອບ ດ້ານລາຍຮັບ ແລະ ຂໍ້ມູນສາມາດປະຕິບັດໄດ້ຢ່າງຊັດເຈນ ແລະ ແນ່ນອນໃຫ້ສອດຄ່ອງກັບເນື້ອໃນ, ກຳນົດເວລາ ແລະ ປະຕິບັດຕາມສາລະບານງົບປະມານ; ພ້ອມດຽວກັນນັ້ນ, ກໍ່ຕ້ອງສ້າງບົນພື້ນຖານຕົວເລກຊີ້ບອກການຂະຫຍາຍຕົວຂອງເສດຖະກິດມະຫາພາກ. ສຳລັບການສ້າງແຜນງົບປະມານບໍລິຫານປົກກະຕິ ຕ້ອງຂຶ້ນແຜນງົບປະມານໃຫ້ສອດຄ່ອງກັບບັນດານະໂຍບາຍ, ມາດຖານ ແລະ ກຳນົດໝາຍໃຊ້ຈ່າຍບໍລິຫານຂອງລັດ. ຫົວໜ່ວຍງົບປະມານທຸກຂັ້ນຕ້ອງສັງລວມເອົາບັນດາລາຍຈ່າຍໜີ້ສິນທີ່ໄດ້ຮັບການກວດກາ ແລະ ຢັ້ງຢືນຢ່າງຄົບຖ້ວນ ເຂົ້າໃນແຜນລາຍຈ່າຍງົບປະມານຂອງຕົນ ປະຈຳປີ.

49.8 ສຳລັບຂັ້ນຕອນ ແລະ ກຳນົດເວລາກ່ຽວກັບການສ້າງແຜນງົບປະມານແຫ່ງລັດ: ອີງໃສ່ດຳລັດສະບັບນີ້, ກະຊວງການເງິນຈະອອກບົດແນະນຳກ່ຽວກັບຈຸດປະສົງ, ເປົ້າໝາຍ, ເນື້ອໃນ ແລະ ກຳນົດເວລາຂອງການສ້າງແຜນງົບປະມານ ແລະ ແຈ້ງເພດານຕົວເລກມະຫາພາກດ້ານລາຍຮັບ-ລາຍຈ່າຍ ແລະ ການຊຳລະໜີ້ໃນອົງການຈັດຕັ້ງຂອງລັດ ແຕ່ສູນກາງຮອດທ້ອງຖິ່ນ, ເດືອນກຸມພາ ໃຫ້ອົງການຈັດຕັ້ງລັດຂອງສູນກາງ ແລະ ທ້ອງຖິ່ນສ້າງແຜນງົບປະມານຂອງຕົນໃຫ້ສອດຄ່ອງກັບແຜນວຽກ ແຜນງານ ຕາມຄວາມຮັບຜິດຊອບຂອງຕົນ ໂດຍໃຫ້ຈັດລຽງບູລິມະສິດ ພາຍຫລັງສຳເລັດແລ້ວໃຫ້ຈັດສົ່ງໃຫ້ກະຊວງການເງິນ ເພື່ອສັງລວມແຜນງົບປະມານ ແລ້ວລາຍງານລັດຖະບານໃນເດືອນເມສາ.

**ມາດຕາທີ 50 : ກ່ຽວກັບການກະກຽມໂຄງການລະດັບຊາດ ທີ່ສະໜັບສະໜູນແຜນການ 5 ປີ ຄັ້ງທີ VII (2011-2015) ໃຫ້ປະຕິບັດດັ່ງນີ້:**

50.1 ໃຫ້ກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງໃນການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ຄົ້ນຄວ້າສັງລວມໂຄງການລົງທຶນຂອງລັດທີ່ຮັບໃຊ້ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VII ທີ່ຈະນຳສະເໜີຕໍ່ກອງປະຊຸມສະພາໃນ ເດືອນ 6/2011.

50.2 ໃຫ້ບັນດາກະຊວງ, ອົງການ, ນະຄອນຫລວງວຽງຈັນ ແລະ ແຂວງ ສືບຕໍ່ຄົ້ນຄວ້າສັງລວມໂຄງການລົງທຶນທີ່ຈະເອົາເຂົ້າໃນແຜນການ 5 ປີ (2011-2015) ແລ້ວສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນພາຍໃນວັນທີ 30/12/2010 ໂດຍໃຫ້ເອົາໃຈໃສ່ດັ່ງນີ້:

1) ໂຄງການສືບຕໍ່ (ໂຄງການທີ່ກໍາລັງຈັດຕັ້ງປະຕິບັດ): ໂຄງການດັ່ງກ່າວນີ້ ໃຫ້ບັນດາກະຊວງ, ອົງການ, ນະຄອນຫລວງວຽງຈັນ ແລະ ແຂວງ ສືບຕໍ່ສຸມໃສ່ຈັດຕັ້ງປະຕິບັດຕາມແຜນຂອງໂຄງການໃຫ້ສໍາເລັດຕາມໄລຍະເວລາທີ່ກໍານົດໄວ້.
2) ໂຄງການທີ່ມີແຫຼ່ງທຶນແລ້ວ: ໝາຍເຖິງໂຄງການທີ່ມີແຫຼ່ງທຶນຊັດເຈນ (ສາມາດລະບຸໄດ້ວ່າເປັນ ແຫຼ່ງທຶນຂອງລັດ, ທຶນຊ່ວຍເຫຼືອລ້າ, ທຶນກູ້ຢືມ, ການລົງທຶນຂອງເອກະຊົນພາຍໃນ ແລະ ຕ່າງປະເທດ ແລະ ສິນເຊື່ອຈາກທະນາຄານ) ແລະ ມີການສຶກສາໂຄງການລະອຽດ, ສໍາລັບໂຄງການດັ່ງກ່າວນີ້ ມອບໃຫ້ກະຊວງ, ອົງການ, ນະຄອນຫລວງ ແລະ ແຂວງ ຮີບຮ້ອນເຈລະຈາ ກ້າວໄປເຖິງການເຊັນສັນຍາເພື່ອປະຕິບັດໂຄງການ, ຈາກນັ້ນ ກໍໃຫ້ເອົາເຂົ້າໃນແຜນການ ປະຈໍາປີ ແລະ ໃຫ້ສາມາດຈັດຕັ້ງປະຕິບັດໄດ້.
3) ໂຄງການທີ່ຍັງບໍ່ທັນມີແຫຼ່ງທຶນເພື່ອຈັດຕັ້ງປະຕິບັດ: ໝາຍເຖິງໂຄງການໃໝ່ທີ່ຍັງບໍ່ທັນມີແຫລ່ງທຶນ ເພື່ອຈັດຕັ້ງປະຕິບັດເທື່ອ ໂຄງການດັ່ງກ່າວນີ້ແມ່ນມອບໃຫ້ກະຊວງ, ອົງການ, ນະຄອນຫລວງ ຫລື ແຂວງ ທີ່ເປັນເຈົ້າຂອງໂຄງການຮີບຮ້ອນສ້າງເອກະສານໂຄງການໃຫ້ສໍາເລັດ ແລະ ດໍາເນີນການສຶກສາຄວາມເປັນໄປໄດ້, ຖ້າເຫັນວ່າມີປະສິດທິຜົນ ແລະ ມີຄວາມສາມາດເປັນໄປໄດ້ແລ້ວ ໃຫ້ສົ່ງໃຫ້ກະຊວງແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າເອົາເຂົ້າແຜນການ 5 ປີ ຄັ້ງທີ VII (2011-2015).

## ໝວດທີ VI
## ບົດບັນຍັດສຸດທ້າຍ

**ມາດຕາທີ 51:** ມອບໃຫ້ທ່ານລັດຖະມົນຕີວ່າການກະຊວງ, ຫົວໜ້າອົງການ, ທ່ານເຈົ້າຄອງນະຄອນຫຼວງ ແລະ ທ່ານເຈົ້າແຂວງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດ ໃຫ້ລັດຖະບານ ໃນແຕ່ລະໄລຍະຢ່າງເປັນປົກກະຕິ.

**ມາດຕາທີ 52:** ດໍາລັດສະບັບນີ້ ມີຜົນບັງຄັບໃຊ້ນັບແຕ່ວັນທີ 1 ຕຸລາ 2010 ເປັນຕົ້ນໄປ.

**ນາຍົກລັດຖະມົນຕີແຫ່ງ ສປປ ລາວ**